
ກອງປະຊຸມລະດັບໂລກກ່ຽວກັບ
ການບໍລິການໃຫຄຳປຶກສາແນະນຳ
ດ້ານກະສິກຳໃນເຂດຊົນນະບົດ (GFRAS)



“ນັກສົ່ງເສີມຍຸກໃໝ່”:

ບົດບາດ, ຍຸດທະສາດ ແລະ ຂີດຄວາມສາ ມາດເພື່ອຍົກລະດັບວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາແນະນຳດ້ານ ກະສິກຳໃຫ້ມີຄວາມເຂັ້ມແຂງ

ກອງປະຊຸມລະດັບໂລກກ່ຽວກັບການບໍລິການໃຫ້ຄຳແນະນຳໃນເຂດຊົນນະບົດ
ພະຈິກ 2012

GFRAS ແມ່ນຫຍໍ້ມາຈາກຄຳເຕັມທີ່ວ່າ Global Forum for Rural Advisory Services ຫຼື ແປເປັນພາສາລາວວ່າ “ກອງປະຊຸມລະດັບໂລກກ່ຽວກັບການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳໃນເຂດຊົນນະບົດ” ເຊິ່ງສ້າງຂຶ້ນໂດຍບັນດາພາກສ່ວນທີ່ກ່ຽວຂ້ອງ ແລະ ໄດ້ຮັບຜົນປະໂຫຍດໃນທົ່ວໂລກທີ່ມີຄວາມສົນໃຈ ແລະ ມີບົດບາດໃນການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນເຂດຊົນນະບົດ. ພາລະກິດຂອງກອງປະຊຸມດັ່ງກ່າວແມ່ນເພື່ອໃຫ້ການສະໜັບສະໜຸນ ແລະ ນຳພາການບໍລິການສົ່ງເສີມກະສິກຳຫຼາກຫຼາຍພາກສ່ວນ ແລະ ຂັບເຄື່ອນຕາມຄວາມຕ້ອງການຂອງຊຸມຊົນ. GFRAS ເຮັດສິ່ງດັ່ງກ່າວນີ້ແມ່ນອີງຕາມແຜນການພັດທະນາຂອງໂລກໂດຍມີເປົ້າໝາຍເພື່ອສົ່ງເສີມການຂະຫຍາຍຕົວແບບຍືນຍົງ ແລະ ເພື່ອຫຼຸດຜ່ອນຄວາມທຸກຍາກ.

“ນັກສົ່ງເສີມຍຸກໃໝ່”: ບົດບາດ, ຍຸດທະສາດ ແລະ ຂີດຄວາມສາມາດເພື່ອຍົກລະດັບວຽກສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳມີຄວາມເຂັ້ມແຂງ.

ຜູ້ຂຽນ

ຣາສຣີດ ສຸໄລມານ
ຄຼິສຕິນ ເດວິດ

ການສະແດງຄວາມຮູ້ບຸນຄຸນ

ເອກະສານສະບັບນີ້ໄດ້ຮັບຜົນປະໂຫຍດຢ່າງຫຼວງຫຼາຍຈາກບັນດາຄຳຄິດຄຳເຫັນ ແລະ ຄຳແນະນຳທີ່ໄດ້ໃຫ້ໄວ້ຢູ່ໃນເອກະສານສະບັບກ່ອນຈາກຫຼາຍໆພາກສ່ວນ. ພວກເຮົາຂໍສະແດງຄວາມຂອບໃຈມາຍັງທຸກໆຄົນທີ່ໄດ້ປະກອບຄຳຄິດເຫັນໃສ່ເອກະສານສະບັບນີ້ ແລະ ໃນບັນດາຜູ້ທີ່ປະກອບຄຳຄິດເຫັນນັ້ນ ພວກເຮົາຢາກສະແດງຄວາມຮູ້ບຸນຄຸນແດ ທ່ານ ຈອນ ເດແອນ, ທ່ານ ແມກດາລີນ ບລັນ, ທ່ານ ຣິກກາ ຣາຈາລາທີ, ທ່ານ ເຈຟ ມູຕີມບາ, ທ່ານ ຈາເວຍ ເອກບອຍ, ທ່ານ ຣອຍ ເມີເຣ-ໄພຣ໋ອ, ທ່ານ ມິຣາ ໂວເປຣັສທ-ປູຣາ, ທ່ານ ເດວິດ ໂດລີ, ແລະ ທ່ານ ອີມີໂລ ຣັຊ ທີ່ໄດ້ປະກອບຄຳຄິດເຫັນໃສ່ເອກະສານສະບັບນີ້ແບບເຕັມສ່ວນ. ຂໍສະແດງຄວາມຂອບໃຈເປັນພິເສດມາຍັງ ທ່ານ ສູ ແຄນເນດາວີຊັນ ສຳລັບການນຳພາ ແລະ ການຂຽນບົດລາຍງານແບບໜ້າ-ຕໍ່-ໜ້າກັນ, ການປຶກສາຫາລືທາງ ອີເມວ ແລະ ການສຳຫຼວດ. ເຊັ່ນດຽວກັນ ພວກເຮົາຂໍສະແດງຄວາມຂອບໃຈໝົດທຸກຄົນ (ຫຼາຍກວ່າ 200 ຄົນ) ທີ່ໄດ້ອ່ານບົດສະຫຼຸບສັງລວມ ແລະ ຄຳແນະນຳຢູ່ໃນເອກະສານສະບັບນີ້ ແລະ ໄດ້ເຂົ້າຮ່ວມໃນການສຳຫຼວດທາງ ອອນໄລ ແລະ ການປຶກສາຫາລືທາງ ອີເມວ ກ່ຽວກັບຫົວຂໍ້ດັ່ງກ່າວ. ຂໍສະແດງຄວາມຮູ້ບຸນຄຸນເຊັ່ນກັນຕໍ່ບັນດາຄຳຄິດເຫັນ ແລະ ຄຳແນະນຳຕ່າງໆຕໍ່ກັບເອກະສານສະບັບນີ້ຈາກບັນດາຜູ້ເຂົ້າຮ່ວມໃນກອງປະຊຸມປະຈຳປີ GFRAS ທີ່ຈັດຂຶ້ນຢູ່ນະຄອນຫຼວງມະນີລາ (ໃນຄັ້ງວັນທີ 26-28 ກັນຍາ 2012) ແລະ ກອງປະຊຸມລະດັບໂລກກ່ຽວກັບການຄົ້ນຄ້ວາວຽກງານກະສິກຳເພື່ອການພັດທະນາ (GCARD-II) ຢູ່ປະເທດ ອູລາກວຍ (29 ຕຸລາ - 1 ພະຈິກ 2012).

ອອກແບບ ແລະ ລຽບລຽງໂດຍ
ທ່ານ ໂປລີເຊຍ

ຮູບພາບປະກອບ:
ໜ້າທີ່ 1: ໂດຍ ທ່ານ ຊູນາ/ຄຼິດສ
ໜ້າທີ 3: ໂດຍ ທ່ານ ວິນເຊັ້ນ ລອງ/ເທັກໂນເຊີບ
ໜ້າທີ 9, 12: ໂດຍ ທ່ານ ຄຼິດສ
ໜ້າທີ 6: ໂດຍ ທ່ານ ໄນ ສປາກູ/ເທັກໂນເຊີບ
ໜ້າທີ 10: ໂດຍ ທ່ານ ຊູນາ/ເອວເກ ດີເມວ
ໜ້າທີ 16 & 20: ອີຣິກ ແມກກໍ
ເທັກໂນເຊີບ ແມ່ນອົງການຈັດຕັ້ງສາກົນບໍ່ຫວັງຜົນກຳໄລທີ່ສົ່ງເສີມທາງອອກ ຂອງການດຳເນີນທຸລະກິດເພື່ອຫຼຸດຜ່ອນຄວາມທຸກຍາກ.
http://www.technoserve.org/

ໜ້າບົກ
ອອກແບບໂດຍ ທ່ານ ເອັມ. ຄນິບເພີ ໂດຍນຳໃຊ້ຮູບພາບຈາກ ທ່ານ ຄຼິສ, ທ່ານ ເຄ ເດວິດ, ທ່ານ ເອັມ ຣາກູ, ທ່ານ ວິນເຊັ້ນ ລອງ ແລະ ທ່ານ ອີ. ແມກກໍ

ພະຈິກ 2012

“ນັກສົ່ງເສີມຍຸກໃໝ່”

ບົດບາດ, ຍຸດທະສາດ ແລະ ຂີດຄວາມສາມາດເພື່ອຍົກລະດັບວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາ ແນະນຳ ດ້ານກະສິກຳໃຫ້ມີຄວາມເຂັ້ມແຂງ.

ຕາຕະລາງສາລະບານ

ຕິວອັກສອນຫຍໍ້

1. **ບົດນຳ** 1

2. **ບົດບາດຂອງວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳ ໃນລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ** 3

   2.1 ຄວາມຕ້ອງການອັນໃໝ່ໃນວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາ ແນະນຳດ້ານກະສິກຳ 3

   2.2 ລະບົບການປະດິດສິ່ງໃໝ່ໆທາງດ້ານກະສິກຳ ແລະ ຄວາມໝາຍ ຂອງຄຳວ່າ ບົດບາດ, ຍຸດທະສາດ ແລະ ຂີດຄວາມສາມາດ ຂອງການສົ່ງເສີມ ແລະ ການ ບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳ 4

3. **ລະດັບການພັດທະນາຂີດຄວາມສາມາດໃນວຽກງານສົ່ງເສີມ ແລະ ການບໍລິການ ໃຫ້ຄຳປຶກສາແນະນຳດ້ານກະສິກຳ** 8

   3.1 ລະດັບບຸກຄົນ 8

   3.2 ລະດັບອົງການຈັດຕັ້ງ 10

   3.3 ລະດັບສະພາບແວດລ້ອມທີ່ເອື້ອອຳນວຍ 10

4. **ການສະໜັບສະໜູນການພັດທະນາຂີດຄວາມສາມາດ** 12

   4.1 ການສະໜັບສະໜູນຂີດຄວາມສາມາດໃນລະດັບບຸກຄົນ 13

   4.2 ການສະໜັບສະໜູນຂີດຄວາມສາມາດໃນລະດັບອົງການຈັດຕັ້ງ 13

   4.3 ການສະໜັບສະໜູນຂີດຄວາມສາມາດໃນລະດັບສະພາບແວດລ້ອມ ທີ່ເອື້ອອຳນວຍ 14

5. **ຄຳສະເໜີແນະສຳລັບການພັດທະນາຂີດຄວາມສາມາດໃນວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳ** 17

   5.1 ລະດັບປະເທດ 17

   5.2 ລະດັບພາກພື້ນ 18

   5.3 ລະດັບໂລກ 18

ຂໍ້ມູນອ້າງອີງ 19

ຕົວອັກສອນຫຍໍ້

ADB	ທະນາຄານພັດທະນາອາຊີ
AFAAS	ກອງປະຊຸມກຽ່ວກັບການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນຊົນນະບົດຂອງບັນດາປະເທດໃນທະວີບອັບຟຼິກກາ
AFDB	ທະນາຄານພັດທະນາປະເທດອັບຟຼິກກາ
AIAEE	ສະມາຄົມເພື່ອການສຶກສາທາງດ້ານກະສິກຳ ແລະ ການສົ່ງເສີມສຸ່ກົນ
AIS	ລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ
ANAFE	ເຄືອຂ່າຍຂອງປະເທດອັບຟຼິກກາເພື່ອການສຶກສາທາງດ້ານກະສິກຳ, ກະສິກຳ-ປ່າໄມ ແລະ ຊັບພະຍາກອນທຳມະຊາດ
APAARI	ສະມາຄົມສະຖາບັນການຄົ້ນຄວ້າວິໃຈທາງດ້ານກະສິກຳຂອງອາຊີ-ປາຊີຟິກ
APEN	ເຄືອຂ່າຍວຽກງານສົ່ງເສີມເຂດອົດສະຕາລີ-ປາຊີຟິກ
APIRAS	ເຄືອຂ່າຍການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນຊົນນະບົດບັນດາປະເທດມີທະເລໃນເຂດອາຊີ-ປາຊີຟິກ
ASEAN	ປະຊາຄົມອາຊີຕາເວັນອອກສ່ຽງໃຕ້
ATI	ສະຖາບັນຝຶກອົບຮົມກະສິກຳ
ATS	ໂຮງຮຽນເຕັກນິກກະສິກຳ
CARICOM	ປະຊາຄົມ ຄາຣິບຽນ
CGIAR	ກຸ່ມທີ່ປຶກສາກຽ່ວກັບການຄົ້ນຄ້ວາກະສິກຳສາກົນ
CRS	ອົງການບໍລິການສົ່ງບັນເທົາທຸກ ແຄດໂທລິກ
CTA	ສູນກາງທາງດ້ານເຕັກນິກເພື່ອການຮ່ວມມືທາງດ້ານກະສິກຳ ແລະ ການພັດທະນາຊົນນະບົດ
EAS	ການສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳໃນເຂດຊົນນະບົດ
EBRD	ທະນາຄານຢູໂຣບເພື່ອການຟື້ນຟູ ແລະ ການພັດທະນາ
EU	ສະຫະພາບ ຢູໂຣບ
EWB	ວິສະວະກອນແບບບໍ່ມີພົມແດນ
FAO	ອົງການອາຫານ ແລະ ການກະເສດ
FARA	ເວທີແລກປ່ຽນຄຳຄິດເຫັນສຳລັບການຄົ້ນຄວ້າກະສິກຳຂອງອົງການຈັດຕັ້ງຊາວກະສິກອນຢູ່ໃນປະເທດອັບຟຼິກກາ
FAS	ໜ່ວຍງານບໍລິການສົ່ງເສີມຟາມ
FOs	ອົງການຈັດຕັ້ງຊາວກະສິກອນ
GCARD	ກອງປະຊຸມໂລກກຽ່ວກັບການຄົ້ນຄ້ວາວິໃຈກະສິກຳເພື່ອການພັດທະນາ
GCHERA	ກຸ່ມພັນທະມິດທົ່ວໂລກຂອງສະມາຄົມການສຶກສາຊັ້ນສູງສຳລັບວິທະຍາສາດການກະເສດ ແລະ ສິ່ງທີ່ມີຊີວິດ
GDPRD	ຖານຂອງຜູ້ໃຫ້ທຶນໃນທົ່ວໂລກເພື່ອການພັດທະນາຊົນນະບົດ
GFAR	ກອງປະຊຸມລະດັບໂລກເພື່ອການຄົ້ນຄ້ວາທາງດ້ານກະສິກຳ
GFRAS	ກອງປະຊຸມລະດັບໂລກກ່ຽວກັບການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳໃນເຂດຊົນນະບົດ
GIZ	ອົງການພັດທະນາສາກົນຂອງລັດຖະບານເຢຍລະມັນ
IADB	ທະນາຄານພາຍໃນປະເທດອາເມລິກາ
IFAD	ກອງທຶນສາກົນເພື່ອການພັດທະນາກະສິກຳ
IALB	ວິຊາການລະດັບສາກົນທີ່ໃຫ້ຄຳປຶກສາໃນເຂດຊົນນະບົດ
IFDC	ສູນພັດທະນາປຸຍສາກົນ
INCAGRO	ການຄົ້ນຄວ້າກະສິກຳ ແລະ ແຜນການສົ່ງເສີມຂອງປະເທດ ເປຣູ
KHDP	ແຜນງານການພັດທະນາການປູກພືດໃນເຮືອນຮົ່ມ ເກຼຣາລາ
MANAGE	ສະຖາບັນຄຸ້ມຄອງການສົ່ງເສີມກະສິກຳແຫ່ງຊາດ
MEAS	ການສ້າງຄວາມທັນສະໃໝ່ໃຫ້ແກ່ການບໍລິການສົ່ງເສີມດ້ານກະສິກຳ
MoFA	ກະຊວງອາຫານ ແລະ ການກະເສດ
NAADS	ການບໍລິການໃຫ້ຄຳປຶກສາດ້ານກະສິກຳແຫ່ງຊາດ
NI	ແນວຄວາມຄິດລິເລີ່ມ....
OECD	ອົງການເພື່ອການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ
RCBP	ໂຄງການສ້າງຂີດຄວາມສາມາດໃນເຂດຊົນນະບົດ
RELASER	ເຄືອຂ່າຍ ອາເມລິກາ-ລາຕິນ ເພື່ອການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນເຂດຊົນນະບົດ
RUFORUM	ກອງປະຊຸມສົນທະນາຂອງມະຫາວິທະຍາໄລໃນເຂດພາກພື້ນ
SAARC	ສະມາຄົມອາຊີຕາເວັນຕົກເພື່ອການຮ່ວມມືໃນເຂດພາກພື້ນ
SADC	ປະຊາຄົມເພື່ອການພັດທະນາທະວີບອາຟຼິກກາໃຕ້
SEARCA	ສູນກາງພາກພື້ນອາຊີຕາເວັນອອກສ່ຽງໃຕ້ເພື່ອພັດທະນາການສຶກສາ ແລະ ການຄົ້ນຄວ້າກະສິກຳ
TAP	ຖານການຜະລິດກະສິກຳໃນເຂດຮ້ອນ
UWI	ມະຫາວິທະຍາໄລພາກຕາເວັນຕົກແຫ່ງຊາດຂອງອິນເດຍ
UWI-CARICOM	ມະຫາວິທະຍາໄລພາກຕາເວັນຕົກແຫ່ງຊາດຂອງອິນເດຍ (ວິທະຍາເຂດ ໂມນາ), ປະຊາຄົມຈາໄມກາ ແລະ ຄາຣູບຽນ



1. ບົດນຳ

ໃນຂະນະທີ່ໄດ້ມີການປຶກສາຫາລືກັນຢ່າງຫຼວງຫຼາຍຢູ່ໃນຊຸມປີທີ່ຜ່ານມາກ່ຽວກັບການເສີມສ້າງວຽກງານສິ່ງເສີມ ແລະ ສະໜັບສະໜູນການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນຊຸມຊົນເຂດຊົນນະບົດໃຫ້ເຂັ້ມແຂງຂຶ້ນ ແຕ່ຄວາມຮູ້ກ່ຽວກັບວິທີການສ້າງຂີດຄວາມສາມາດທີ່ຈຳເປັນໃນການບໍລິການໃຫ້ຄຳປຶກສາດ້ານກະສິກຳ (EAS) ແມ່ນຍັງມີໜ້ອຍ.ເຊັ່ນ ດຽວກັນກັບບົດບາດຂອງການສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳຢູ່ໃນລະບົບການປະດິດສິ່ງໃໝ່ໆທາງດ້ານກະສິກຳ (AIS). ທີ່ຍັງບໍ່ເປັນທີ່ຮູ້ຈັກຢ່າງກ້ວາງຂວາງເທື່ອ. ເອກະສານສະບັບນີ້ມີເປົ້າໝາຍເພື່ອເພີ່ມເຕີມໃສ່ຂອງຫວ່າງຂອງຄວາມຮູ້ດັ່ງກ່າວດ້ວຍການສ້າງວິໃສທັດອັນໃໝ່ສຳລັບການບໍລິການໃຫ້ຄຳປຶກສາດ້ານກະສິກຳ (EAS) ຢູ່ໃນລະບົບການປະດິດສິ່ງໃໝ່ໆທາງດ້ານກະສິກຳ (AIS), ທີ່ພວກເຮົາເອີ້ນວ່າ “ນັກສິ່ງເສີມຍຸກໃໝ່” ເຊິ່ງບໍ່ໄດ້ໝາຍເຖິງບົດບາດ ແລະ ຂີດຄວາມສາມາດຂອງບຸກຄົນໃດໜຶ່ງເທົ່ານັ້ນ ແຕ່ໝາຍເຖິງບົດບາດ ແລະ ຂີດຄວາມສາມາດຂອງທັງອົງການຈັດຕັ້ງ ແລະ ຂອງລະບົບທັງໝົດ. ເອກະສານສະບັບນີ້ ຈຶ່ງເວົ້າເຖິງແນວທາງຕ່າງໆເພື່ອພັດທະນາຂີດຄວາມສາມາດທີ່ຈຳເປັນເພື່ອເຮັດໃຫ້ວິໃສທັດດັ່ງກ່າວສາມາດດຳເນີນການໄດ້ຢູ່ທຸກລະດັບ.

ແຮງຜັກດັນທີ່ຢູ່ເບື້ອງຫຼັງການພັດທະນາແນວຄວາມຄິດຂອງຄຳວ່າ “ນັກສິ່ງເສີມ ຍຸກໃໝ່” ນີ້ແມ່ນມາຈາກຄວາມຕ້ອງການໃນປັດຈຸບັນ ໃຫ້ມີຂີດຄວາມສາມາດໃໝ່ໆໃນການໃຫ້ການບໍລິການໃຫ້ຄຳປຶກສາດ້ານກະສິກຳເພື່ອໃຫ້ສາມາດຕອບໂຕ້ກັບສິ່ງທ້າທາຍອັນໃໝ່ໃນການພັດທະນາກະສິກຳ ຢ່າງມີປະສິດທິພາບໄດ້ເຊັ່ນ: ປະລິມານນ້ຳທີ່ມີການຫຼຸດລົງ, ການເຊື່ອມໂຊມຂອງດິນກຳລັງເພີ່ມຫຼາຍຂຶ້ນ, ສະພາບດິນຟ້າອາກາດ ແລະ ການຕະຫຼາດກຳລັງມີການປ່ຽນແປງ ແລະ ບໍ່ແນ່ນອນ. ໃນຊຸມປີທີ່ຜ່ານມາ ແມ່ນເລີ້ມເຫັນຂີດຄວາມສາມາດໃນການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນເຂດຊົນນະບົດເພື່ອດຳເນີນບົດບາດໃນຮູບແບບເດີມ ເຊັ່ນ: ການຝຶກອົບຮົມ ແລະ ການສື່ສານຂໍ້ມູນທາງດ້ານວິຊາການ ແມ່ນນັບມື້ມີການຫຼຸດລົງ. ໃນຄະນະທີ່ການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນເຂດຊົນນະບົດຕ້ອງໄດ້ປະເຊີນໜ້າກັບສິ່ງທ້າທາຍແບບເກົ່າ ແລະ ແບບໃໝ່, ການສະໜັບສະໜຸນທາງດ້ານການເມືອງ ແລະ ການເງິນຕ່ອງກ ວຽກງານສິ່ງເສີມໃນຫຼາຍໆປະເທດ ຊ້ຳພັດຫຼຸດໜ້ອຍຖອຍລົງອີກ. ຫຼາຍປະເທດກໍໄດ້ເລີ່ມຕົ້ນຕັ້ງຄຳຖາມກ່ຽວກັບຄວາມຈຳເປັນ ຂອງການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນເຂດຊົນນະບົດ ແລະ ຄວາມສາມາດໃນການຮັບມືກັບບັນດາສິ່ງທ້າທາຍທີ່ເກີດຂຶ້ນພ້ອມກັນຄືດັ່ງທີ່ກ່າວມາຂ້າງເທິງນັ້ນໄດ້ບໍ. ລັດຖະບານໄດ້ຕອບໂຕ້ຕໍ່ ບັນດາຄຳວິຈານຕ່າງໆເຫຼົ່ານີ້ ດ້ວຍການຫຼຸດຂະໜາດວຽກງານສິ່ງເສີມລົງ, ກະຈາຍວຽກງານສິ່ງເສີມລົງໄປສູ່ໜ່ວຍງານບໍລິຫານທ້ອງຖິ່ນ, ຖອນຕົວ ອອກຈາກການສະໜອງທຶນ ແລະ ການນຳສິ່ງສິນຄ້າ, ມີການສິ່ງເສີມໃຫ້ພາກເອກະຊົນຫຼາຍຂຶ້ນ (ສ່ວນໃຫຍ່ແມ່ນການລົງທຶນ ແລະ ການຈັດຈ້າງ ຄົນຈາກພາຍນອກ). ໃນຄະນະທີ່ ພື້ນທີ່ການສິ່ງເສີມກຳລັງມີການປ່ຽນແປງ, ມີການເຂົ້າຮ່ວມຈາກຫຼາຍພາກສ່ວນ ດ້ວຍການມີສ່ວນຮ່ວມຈາກພາກສ່ວນເອກະຊົນເພີ່ມຂຶ້ນ (ເຊັ່ນ: ການບໍລິການທາງດ້ານປັດໃຈນຳເຂົ້າ-ກະສິກຳ, ທຸລະກິດກະສິກຳ, ການບໍລິການທາງດ້ານການເງິນ), ອົງການຈັດຕັ້ງທີ່ບໍ່ໄດ້ສັງກັດລັດ (ທັງສາກົນ ແລະ ພາຍໃນປະເທດ); ກຸ່ມຜູ້ຜະລິດ, ສະຫະກອນ ແລະ ສະມາຄົມ; ທີ່ປຶກສາເອກະລາດ (ບັນດາຜູ້ທີ່ຕິດພັນກັບທຸລະກິດກະສິກຳ ຫຼື ສະມາຄົມຜູ້ຜະລິດ) ແລະ ການບໍລິການຂໍ້ມູນ ICT ໃນຂັ້ນຣາກຖານ. ສິ່ງເຫຼົ່ານີ້ທັງໝົດໄດ້ເຮັດໃຫ້ມີຈຳນວນແຮງງານ ແລະ ຊັບພະຍາກອນເພີ່ມຂຶ້ນສູ່ການບໍລິການໃຫ້ຄຳປຶກສາດ້ານກະສິກຳ ໃນເຂດຊົນນະບົດ, ພ້ອມທັງ ຍັງໄດ້ນຳເອົາຄວາມຮູ້, ທັກຊະຄວາມສາມາດ ແລະ ຄວາມສຳນານງານອັນໃໝ່ເຂົ້າມາ. ແຕ່ເຖິງຢ່າງໃດກໍຕາມ, ການມີຫຼາຍພາກສ່ວນປະກອບສ່ວນເຂົ້າຄືແນວນີ້ ກໍຍັງໄດ້ນຳເອົາສິ່ງທ້າທາຍຕ່າງໆເຂົ້າມາຕື່ມອີກເພື່ອຮັບປະກັນໃຫ້ມີຄຸນນະພາບ, ການຊີ້ນຳທາງດ້ານວິຊາການ ແລະ ການຮັບປະກັນໃຫ້ມີການປະສານສົມທົບ ແລະ ການເຮັດວຽກຮ່ວມກັນລະຫວ່າງຜູ້ສະໜອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນເຂດຊົນນະບົດທີ່ມີຄວາມຫຼາກຫຼາຍ.

ເຖິງແມ່ນວ່າການຄົ້ນຄ້ວາວິໃຈກ່ຽວກັບການສື່ສານ ແລະ ການປະດິດສ້າງສິ່ງໃໝ່ໆໃນລະຫວ່າງທົດສະຫວັດທີ່ຜ່ານມາໄດ້ນຳເອົາຄວາມເຂົ້າໃຈທີ່ດີຂຶ້ນຫຼາຍກວ່າເກົ່າກ່ຽວກັບຂະບວນການປະດິດສິ່ງໃໝ່ໆ, ແຕ່ສິ່ງນີ້ບໍ່ໄດ້ພັກດັນໃຫ້ປະເທດຕ່າງໆ ມີຕົວແບບໃນການບໍລິການໃຫ້ຄຳປຶກສາດ້ານກະສິກຳ.ໃນເວລາດຽວກັນມັນກໍມີບາງກິດຈະກຳທີ່ໄດ້ພະຍາຍາມທົດລອງແນວທາງ ແລະຮູບແບບໃໝ່ໆໃນການພັດທະນາຂີດຄວາມສາມາດເພື່ອການຂະຫຍາຍ ແລະ ປະດິດສ້າງສິ່ງໃໝ່ໆ. ເອກະສານສະບັບນີ້ໄດ້ສ້າງຂຶ້ນຈາກບົດຮຽນທີ່ຖອດຖອນໄດ້ຈາກການຄົ້ນຄ້ວາວິໃຈກ່ຽວກັບການສື່ສານ ແລະ ການປະດິດສ້າງສິ່ງໃໝ່ໆ, ຈາກປະສົບການສິ່ງເສີມຕະຫຼອດໄລຍະຫຼາຍທົດສະຫວັດທີ່ຜ່ານມາ, ຈາກການຖົກຖຽງກັນໃນປະຈຸບັນກ່ຽວກັບລະບົບການປະດິດສິ່ງໃໝ່ໆທາງດ້ານກະສິກຳ ແລະ ປະສົບການໃນການພັດທະນາຂີດຄວາມສາມາດສຳລັບວຽກງານສິ່ງເສີມ ແລະ ການປະດິດສ້າງສິ່ງໃໝ່ໆ.

ເປົ້າໝາຍຫຼັກຂອງເອກະສານສະບັບນີ້ແມ່ນເພື່ອສ້າງຄວາມກະຈ່າງແຈ້ງກ່ຽວກັບບົດບາດຂອງການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳຢູ່ໃນລະບົບການປະດິດສິ່ງໃໝ່ໆທາງດ້ານກະສິກຳ ແລະ ປຶກສາຫາລືບັນດາແນວທາງທີ່ມີທ່າແຮງສຳລັບການພັດທະນາຂີດຄວາມສາມາດເພື່ອຮັບໃຊ້ຜູ້ຜະລິດໃນເຂດຊົນນະບົດ (ລວມທັງຜູ້ລ້ຽງສັດ ແລະ ຊາວປະມົງ), ໂດຍສະເພາະຊາວກະສິກອນ ແລະ ຜູ້ປະກອບການຂະໜາດນ້ອຍທີ່ມີຢູ່ຈຳນວນຫຼວງຫຼາຍ.

ແຜນກຳນົດທິດທາງຂອງກອງປະຊຸມທົ່ວໂລກກ່ຽວກັບການຄົ້ນຄ້ວາວິໃຈທາງດ້ານກະສິກຳເພື່ອການພັດທະນາ (GCARD) ໄດ້ເນັ້ນຍ້ຳໃສ່ການດຳເນີນງານຕ່າງໆໃນການປັບປຸງຂີດຄວາມສາມາດເພື່ອສ້າງ, ແບ່ງປັນ ແລະ ນຳໃຊ້ຄວາມຮູ້ທາງດ້ານກະສິກຳເພື່ອການພັດທະນາໃນລະຫວ່າງບັນດາຜູ້ດຳເນີນງານທັງໝົດທີ່ມີສ່ວນກ່ຽວຂ້ອງຢູ່ໃນການປະດິດສ້າງສິ່ງໃໝ່ໆ ແລະ ສ້າງການເຊື່ອມໂຍງທີ່ມີປະສິດທິພາບສຳລັບການຄົ້ນຄ້ວາວິໃຈ ເພື່ອປະກອບສ່ວນພັດທະນາໃຫ້ມີການປ່ຽນແປງ[4]. ວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ (EAS) ແມ່ນມີຄວາມສຳຄັນຫຼາຍສຳລັບການເຊື່ອມໂຍງເຂົ້າຫາກັນ ບໍ່ພຽງແຕ່ກັບການຄົ້ນຄ້ວາວິໃຈເທົ່ານັ້ນ ແຕ່ຍັງເຊື່ອມໂຍງກັບບັນດາຜູ້ດຳເນີນງານທັງໝົດ (ທີ່ມີສ່ວນຮ່ວມໃນການບໍລິການປ່ອຍເງິນສິນເຊື່ອ, ປັດໃຈນຳເຂົ້າຕ່າງໆ, ການຝຶກອົບຮົມ, ການເຊື່ອມໂຍງຕ່ອງໂສ້ມູນຄ່າ ແລະ ໃນການພັດທະນານະໂຍບາຍ) ເຊິ່ງກໍ່ມີບົດບາດສຳຄັນເຊັ່ນກັນໃນການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ. ແຕ່ເພື່ອດຳເນີນບົດບາດໃນການເຊື່ອມໂຍງສິ່ງດັ່ງກ່າວເຫຼົ່ານີ້ເຂົ້າຫາກັນຢ່າງມີປະສິດທິພາບໄດ້ນັ້ນ, ການບໍລິການສົ່ງເສີມຊຸມຊົນຈຳເປັນຕ້ອງໄດ້ຂະຫຍາຍພາລະບົດບາດຂອງຕົນເອງອອກສູ່ວົງກວ້າງ, ສ້າງຂີດຄວາມສາມາດຂອງຕົນເອງໃນການດຳເນີນບົດບາດແບບເດີມໃຫ້ເຂັ້ມແຂງກ່ວາເກົ່າ ແລະ ພັດທະນາຂີດຄວາມສາມາດອັນໃໝ່ເພື່ອປະເຊີນກັບບັນດາສິ່ງທ້າທາຍແບບໃໝ່ໆ.

ການປຶກສາຫາລືໃນປະຈຸບັນກ່ຽວກັບແນວຄວາມຄິດຂອງຄຳວ່າ “ນັກສົ່ງເສີມຍຸກໃໝ່” ແມ່ນຄາດການວ່າຈະສ້າງຄວາມກະຈ່າງແຈ້ງກ່ຽວກັບບົດບາດຂອງຜູ້ດຳເນີນການຕ່າງໆໃນການປັບປຸງຂີດຄວາມສາມາດຢູ່ໃນລະດັບທີ່ແຕກຕ່າງກັນ ແລະ ປະກອບສ່ວນເພື່ອເຮັດໃຫ້ແຜນກຳນົດທິດທາງຂອງກອງປະຊຸມລະດັບໂລກກ່ຽວກັບການຄົ້ນຄ້ວາວິໃຈທາງດ້ານກະສິກຳເພື່ອການພັດທະນາ (GCARD) ສາມາດດຳເນີນການໄດ້. ແຕ່ເຖິງຢ່າງໃດກໍຕາມ, ກໍຄວນຮັບຮູ້ວ່າ ຂີດຄວາມສາມາດທັງໝົດເຫຼົ່ານີ້ທີ່ໄດ້ກ່າວໄວ້ຢູ່ໃນເອກະສານສະບັບນີ້ ບໍ່ຈຳເປັນຕ້ອງໄດ້ຮັບການພັດທະນາຂຶ້ນຢູ່ທຸກບ່ອນ ແຕ່ຈະອີງຕາມສະພາບເງື່ອນໄຂຄວາມຮຽກຮ້ອງຕ້ອງການ ແລະພັດທະນາຕາມຂັ້ນຕອນ ທີ່ອີງຕາມສິ່ງທ້າທາຍ ແລະ ກາລະໂອກາດສະເພາະທີ່ມີຢູ່ໃນແຕ່ລະທ້ອງຖິ່ນ. ເປົ້າໝາຍຂອງກອງປະຊຸມລະດັບໂລກເພື່ອການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນເຂດຊົນນະບົດ (GFRAS) ທີ່ມີເຄືອຂ່າຍຢູ່ໃນທົ່ວໂລກນັ້ນ ແມ່ນເພື່ອສະໜອງແນວຄວາມຄິດ ແລະ ໂອກາດຕ່າງໆ ໂດຍຜ່ານເອກະສານສະບັບນີ້ ເພື່ອວ່າບັນດາພາກສ່ວນຕ່າງໆເຫຼົ່ານັ້ນ ທັງໝົດທີ່ມີຄວາມສົນໃຈໃນການຍົກລະດັບຂີດຄວາມສາມາດຂອງວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນເຂດຊົນນະບົດໃຫ້ມີຄວາມເຂັ້ມແຂງ ຈະສາມາດພິຈາລະນາຮັບເອົາທາງເລືອກຕ່າງໆເຫຼົ່ານີ້ ແລະ ຈັດລຽງເປັນບູລິມະສິດໃນການພັດທະນາໄດ້.

ກ່ອງທີ 1: ນິຍາມບາງຄຳສັບທີ່ສຳຄັນ

ການສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳ (EAS): ເອກະສານສະບັບນີ້ນຳໃຊ້ຄຳນິຍາມຂອງຄຳວ່າ ການສົ່ງເສີມ ແລະ ບໍລິການໃຫ້ຄຳປຶກສາດ້ານກະສິກຳທີ່ໄດ້ກຳນົດຂຶ້ນໂດຍກອງປະຊຸມລະດັບໂລກເພື່ອການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳໃນເຂດຊົນນະບົດ (GFRAS) ທີ່ປະກອບມີທັງໝົດທຸກກິດຈະກຳທີ່ແຕກຕ່າງກັນທີ່ສະໜອງຂໍ້ມູນ ແລະ ການບໍລິການທີ່ຈຳເປັນ ແລະ ເປັນທີ່ຕ້ອງການຈາກຊາວກະສິກອນ ແລະ ບັນດາຜູ້ດຳເນີນງານອື່ນໆຢູ່ໃນເຂດຊົນນະບົດ ເພື່ອຊ່ວຍເຂົາເຈົ້າໃນການພັດທະນາການປະຕິບັດ ແລະ ທັກຊະຄວາມສາມາດທາງດ້ານວິຊາການ, ການຈັດຕັ້ງ ແລະ ການບໍລິການຈັດການເພື່ອປັບປຸງຊີວິດການເປັນຢູ່ ແລະ ຄວາມຢູ່ດີກິນດີຂອງເຂົາເຈົ້າໃຫ້ດີຂຶ້ນກວ່າເກົ່າ[1]. ມັນສະແດງໃຫ້ເຫັນເຖິງຄຸນຄ່າທາງດ້ານຄວາມຫຼາກຫຼາຍຂອງຜູ້ດຳເນີນງານໃນວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ (ພາກລັດ, ພາກເອກະຊົນ ແລະ ພາກປະຊາສັງຄົມ); ໃຫ້ການສະໜັບສະໜຸນຕໍ່ຊຸມຊົນຊາວຊົນນະບົດຢູ່ໃນວົງກວ້າງຫຼາຍຂຶ້ນ (ນອກເໜືອຈາກການແລກປ່ຽນຂໍ້ມູນຂ່າວສານ ແລະ ເທັກໂນໂລຊີ) ລວມທັງຄຳແນະນຳທີ່ ກ່ຽວຂ້ອງກັບການຜະລິດ, ການຈັດຕັ້ງ ແລະ ການຄຸ້ມຄອງທຸລະກິດ; ການອຳນວຍຄວາມສະດວກ ແລະ ການເປັນຄົນມືກາງຢູ່ໃນການພັດທະນາຊົນນະບົດ ແລະ ຕ້ອງໂສ້ມູນຄ່າ.

ລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ: ແມ່ນໄດ້ໃຫ້ນິຍາມຄວາມໝາຍເປັນເຄືອຂ່າຍຂອງອົງການຈັດຕັ້ງ, ວິສາຫະກິດ ແລະ ສ່ວນບຸກຄົນທີ່ສຸມໃສ່ການນຳເອົາຜະລິດຕະພັນ, ຂະບວນການ ແລະ ຮູບແບບໃໝ່ໆຂອງອົງການຈັດຕັ້ງເຂົ້າມານຳໃຊ້ແບບເປັນເສດຖະກິດພ້ອມກັບສະຖາບັນ ແລະ ນະໂຍບາຍຕ່າງໆທີ່ສົ່ງຜົນກະທົບຕໍ່ພຶດຕິກຳ ແລະ ການດຳເນີນງານຂອງເຂົາເຈົ້າ[2]. ອີງຕາມຄວາມເຂົ້າໃຈກ່ຽວກັບລະບົບການປະດິດສ່ິງໃໝ່ໆທາງດ້ານກະສິກຳນັ້ນແມ່ນວ່າ ການປະດິດສ້າງແມ່ນຂະບວນການຕອບສະໜອງເຊິ່ງກັນແລະກັນລະຫວ່າງບັນດາຜູ້ດຳເນີນງານຈຳນວນຫຼາຍໂດຍຜ່ານການສ້າງຄວາມຮູ້, ການປັບຕົວໃຫ້ເຂົ້າກັບສະພາບ ແລະ ການນຳໃຊ້ທີ່ເກີດຂຶ້ນ. ສະຖາບັນ (ກົດລະບຽບ, ທັດສະນະ, ກົດຈະວັດປະຈຳວັນ ແລະ ການປະຕິບັດຕ່າງໆ) ພ້ອມທັງນະໂຍບາຍຕ່າງໆ ໄດ້ສ້າງໃຫ້ມີສະພາບແວດລ້ອມທີ່ເອື້ອອຳນວຍທີ່ກຳນົດຂີດຄວາມສາມາດຂອງລະບົບໄດ້ຢ່າງຫຼວງຫຼາຍ ເພື່ອປະດິດຄິດສ້າງສິ່ງໃໝ່ໆ. ການປັບປຸງການຕອບສະໜອງເຊິ່ງກັນແລະກັນລະຫວ່າງບັນດາຜູ້ດຳເນີນການຈຳນວນຫຼວງຫຼາຍຢູ່ໃນລະບົບການປະດິດສ່ິງໃໝ່ໆທາງດ້ານກະສິກຳແມ່ນມີຄວາມສຳຄັນຫຼາຍສຳລັບການປະດິດຄິດສ້າງສິ່ງໃໝ່ ແລະ ຂະບວນການດັ່ງກ່າວນີ້ມັກຈະຕ້ອງໄດ້ຮັບການອຳນວຍຄວາມສະດວກ.

ການພັດທະນາຂີດຄວາມສາມາດ: OECD ໄດ້ນິຍາມຄຳວ່າ “ຂີດຄວາມສາມາດ” ແມ່ນຄວາມສາມາດຂອງບຸກຄົນ, ອົງການຈັດຕັ້ງ ແລະ ສັງຄົມທັງໝົດນັ້ນແມ່ນເພື່ອຄຸ້ມຄອງໜ້າທີ່ວຽກງານຂອງເຂົາເຈົ້າໃຫ້ປະສົບຜົນສຳເລັດ ແລະ “ການພັດທະນາຂີດຄວາມສາມາດ” ແມ່ນຂະບວນການໜຶ່ງທີ່ຜູ້ຄົນ, ອົງການຈັດຕັ້ງ ແລະ ສັງຄົມທັງໝົດກໍໃຫ້ເກີດຜົນ, ສ້າງໃຫ້ມີຄວາມເຂັ້ມແຂງ, ສ້າງ, ດັດປັບໃຫ້ເຂົ້າກັບສະພາບ ແລະ ຮັກສາຂີດຄວາມສາມາດຜ່ານການເວລາ[3]. ໝາຍຄວາມວ່າ ການພັດທະນາຂີດຄວາມສາມາດແມ່ນມີຄວາມຈຳເປັນບໍ່ພຽງແຕ່ຢູ່ໃນລະດັບບຸກຄົນ, ແຕ່ຍັງຈະຕ້ອງຢູ່ໃນລະດັບອົງການຈັດຕັ້ງ ແລະ ລະບົບການເຮັດວຽກ. ນີ້ອາດຈະລວມມີກິດຈະກຳຫຼາຍຢ່າງທີ່ລວມມີທັງການປັບປຸງທັກຊະ ແລະ ຄວາມສາມາດຂອງບຸກຄົນ, ສ້າງຄວາມເຂັ້ມແຂງໃຫ້ແກ່ວິໃສທັດຂອງອົງການຈັດຕັ້ງ, ພາລະກິດ ຫຼື ຂີດຄວາມສາມາດຂອງອົງການ, ພັດທະນາໃຫ້ມີປະສິດທິພາບຫຼາຍຂຶ້ນກວ່າເກົ່າ ແລະ ສາຍພົວພັນທີ່ມີຄວາມເຂັ້ມແຂງລະຫວ່າງບັນດາຜູ້ດຳເນີນການຕ່າງໆ ແລະ ຊ່ວຍສົ່ງເສີມການຮ່ວມມື ແລະ ການເປັນພັນທະມິດຕໍ່ກັນຕ່າງໆ.

2. ບົດບາດຂອງວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳ ໃນລະບົບການປະດິດສ້າງສິ່ງໃໝ່ໆ ທາງດ້ານກະສິກຳ

2.1 ຄວາມຕ້ອງການອັນໃໝ່ໃນວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳ

ໃນເມື່ອກ່ອນວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານດ້ານກະສິກຳຂອງພາກລັດ ແມ່ນຖືກສ້າງຕັ້ງຂຶ້ນເພື່ອເຜີຍແຜ່ຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີແບບໃໝ່ ທີ່ໄດ້ຈາກການຄົ້ນຄ້ວາວິໃຈທາງດ້ານກະສິກຳ ໃຫ້ແກ່ຊາວກະສິກອນ. ຕາມການສົມມຸດຕິຖານແລ້ວ ຄວາມຮູ້ໃຫມ່ທີ່ເກີດຂຶ້ນຈາກການຄົ້ນຄ້ວາວິໃຈ ເມື່ອໄດ້ຮັບການຖ່າຍທອດໄປສູ່ຊາວກະສິກອນ ໂດຍສຳນັກງານສົ່ງເສີມຕ່າງໆ ກໍຈະນຳໄປສູ່ການນຳເອົາຄວາມຮູ້ດັ່ງກ່າວນັ້ນໄປປະຍຸກໃຊ້ ແລະ ຕໍ່ຈາກນັ້ນກໍຈະປະກອບສ່ວນເຂົ້າໃນການປັບປຸງຂີດຄວາມສາມາດໃນການຜະລິດ ແລະ ເພີ່ມລາຍໄດ້ໃຫ້ແກ່ຄົວເຮືອນຂອງເຂົາເຈົ້າໄດ້. ເວົ້າລວມແລ້ວ ບົດບາດຂອງວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ ແມ່ນກ່ຽວກັບການສື່ສານ ແລະ ເຜີຍແຜ່ຂໍ້ມູນອັນໃໝ່ ພ້ອມທັງຫຼັກການດຳເນີນການຜະລິດກະສິກຳທີ່ດີກວ່າເກົ່າ. ເຖິງແມ່ນວ່າຮູບແບບດັ່ງກ່າວຄວນໄດ້ຮັບການສົ່ງເສີມ ແລະ ຊາວກະສິກອນສ່ວນຫຼາຍ ກໍຈະໄດ້ນຳໃຊ້ເຕັກໂນໂລຊີແບບງ່າຍດາຍ, ແຕ່ມັນກໍຍັງບໍ່ທັນພຽງພໍທີ່ຈະຮັບມືກັບບັນດາສິ່ງທ້າທາຍໃໝ່ທີ່ເກີດຂຶ້ນຢ່າງຫຼວງຫຼາຍໄດ້.

ນັບຕັ້ງແຕ່ຕົ້ນຊຸມປີ 1990 ເປັນຕົ້ນມາ ວຽກງານກະສິກຳ ກໍໄດ້ເລີ່ມຕົ້ນມີການປ່ຽນແປງຢ່າງໄວວາ. ເຖິງແມ່ນວ່າ ໂດຍທົ່ວໄປແລ້ວ ຜົນຜະລິດ ແລະ ສະມັດຕະພາບຂອງການຜະລິດກະສິກຳ ແມ່ນມີການເພີ່ມຂຶ້ນກໍ່ຕາມ ແຕ່ຄວາມທຸກຍາກຂອງປະຊາຊົນ (ລວມທັງບໍ່ສາມາດຄ້ຳປະກັນທາງດ້ານໂພສະນາການ) ກໍຍັງມີແຜ່ຫຼາຍຢູ່ໃນຫຼາຍໆຂົງເຂດພາກພື້ນທີ່ບໍ່ນິຍົມເຮັດກະສິກຳ. ເພື່ອຮັກສາ ແລະ ປັບປຸງຄຸນນະພາບຂອງດິນປູກຝັງໃຫ້ຍັງຄົງສະພາບເດີມໄດ້ນັ້ນ, ຊັບພະຍາກອນທຳມະຊາດຢູ່ໃນຂັ້ນຮາກຖານຈຳເປັນຕ້ອງໄດ້ຮັບການຄຸ້ມຄອງໃຫ້ມີຄວາມຍືນຍົງ. ໃນໄລຍະສອງທົດສະວັດຜ່ານມານີ້ ອັດຕາການມີສ່ວນຮ່ວມຂອງແມ່ຍິງຢູ່ໃນຂະແໜງການກະສິກຳ ກໍໄດ້ເພີ່ມສູງຂຶ້ນຫຼາຍ ບໍ່ວ່າຈະເປັນການປະກອບອາຊີບດ້ວຍຕົວເອງ ຫຼື ໄປຮັບຈ້າງແຮງງານເອົາເງິນເບ້ຍມື້ຈາກການເຮັດກະສິກຳກໍຕາມ. ດັ່ງນັ້ນ ຈຶ່ງຈຳເປັນຕ້ອງໄດ້ມີການພັດທະນາໃນຂັ້ນຕໍ່ໄປຕື່ມອີກ ແລະມີການຈັດຕັ້ງປະຕິບັດຮູບແບບການສົ່ງເສີມທີ່ເອົາໃຈໃສ່ຕໍ່ບົດບາດຍິງ-ຊາຍຫຼາຍຂຶ້ນກ່ວາເກົ່າ. ການເປີດຕະຫຼາດກະສິກຳຍັງເປັນການເພີ່ມຄວາມສ່ຽງໃຫ້ບັນດາປະເທດທີ່ທຸກຍາກກ່ວາ ແລະ ບັນດາຊາວກະສິກອນຂະໜາດນ້ອຍທີ່ມີອຳນາດໃນການຕໍ່ລອງໜ້ອຍ ແລະ ມີສິດມີສ່ຽງທາງດ້ານການເມືອງທີ່ຈຳກັດ. ການປ່ຽນແປງສະພາບດິນຟ້າອາກາດຍັງໄດ້ເຮັດໃຫ້ການຜະລິດກະສິກຳ ມີຄວາມສ່ຽງຫຼາຍຂຶ້ນກ່ວາເກົ່າ ຈາກສະພາບດິນຟ້າອາກາດທີ່ຮຸນແຮງຂຶ້ນ ແລະ ການຄຸ້ມຄອງແຫຼ່ງຊັບພະຍາກອນນ້ຳທີ່ນັບມື້ຫາຍາກ ກໍຈະເປັນອີກສິ່ງທ້າທາຍໜຶ່ງທີ່ຕ້ອງປະເຊີນຫຼາຍຂຶ້ນເລື້ອຍໆ.

ສິ່ງທ້າທາຍແບບໃໝ່ຕ່າງໆເຫຼົ່ານີ້ ຍັງໝາຍເຖິງວ່າ ການສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳ ຈຳເປັນຕ້ອງໄດ້ສຸ່ມໃສ່ຈຸດປະສົງຕ່າງໆ ທີ່ມີຄວາມຫຼາກຫຼາຍ ເຊິ່ງບໍ່ໄດ້ຈຳກັດສະເພາະແຕ່ການຖ່າຍທອດເຕັກໂນໂລຊີອັນໃໝ່ເທົ່ານັ້ນ. ແຕ່ຈະຮວບຮວມເອົາຄວາມຕ້ອງການທີ່ຈຳເປັນທັງໝົດເພື່ອເຊື່ອມໂຍງຕະຫຼາດພາຍໃນ ແລະ ຕະຫຼາດ[5] ຕ່າງປະເທດໄດ້ຢ່າງມີປະສິດທິພາບ ແລະ ຕອບສະໜອງໃຫ້ຫຼາຍຂຶ້ນກ່ວາເກົ່າໄດ້ ຢູ່ໃນບ່ອນທີ່ມີການແຂ່ງຂັນທີ່ເພີ່ມສູງຂຶ້ນຢູ່ໃນຍຸກໂລກາພິວັດ; ຫຼຸດຜ່ອນຄວາມສ່ຽງ ແລະ ສ້າງຄວາມເຂັ້ມແຂງ ແລະ ຄວາມສາມາດຄືນທຸກຍາກໃນເຂດຊົນນະບົດ[6,7] ສົ່ງເສີມໃຫ້ມີການອະນຸລັກທາງດ້ານສິ່ງແວດລ້ອມ; ເຊື່ອມໂຍງການຖ່າຍທອດເຕັກໂນໂລຊີກັບຂະແໜງການບໍລິການອື່ນໆກ່ຽວກັບສິນເຊື່ອ, ຕະຫຼາດນຳເຂົ້າ ແລະ ສົ່ງອອກ[9,10] ແລະ ປັບປຸງບົດບາດໃນການພັດທະນາຂີດຄວາມສາມາດ ທີ່ລວມມີທັງການຝຶກອົບຮົມ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ຂະບວນການປະດິດສິ່ງໃໝ່ໆ, ສ້າງການເຊື່ອມໂຍງລະຫວ່າງຊາວກະສິກອນ ແລະ ອົງກອນຕ່າງໆ, ແລະ ພັດທະນາສະຖາບັນ ແລະ ອົງການຈັດຕັ້ງເພື່ອສະໜັບສະໜຸນຈຸດຢືນຂອງຊາວກະສິກອນໃນການຕໍ່ລອງລາຄາ[11,12].

ການທີ່ຈະຈັດການກັບບັນດາສິ່ງທ້າທາຍເຫຼົ່ານີ້ຢູ່ໃນທົ່ວໂລກນີ້ໄດ້ນັ້ນ ມັນມີຄວາມຮຽກຮ້ອງຕ້ອງການໃຫ້ມີການສ້າງ, ການດັດປັບໃຫ້ເຂົ້າກັບສະພາບ ແລະ ການນຳໃຊ້ຄວາມຮູ້ແບບອັນໃໝ່. ນີ້ແມ່ນລວມມີທັງການເຮັດວຽກຮ່ວມກັນ ແລະ ການສະໜັບສະໜຸນຈາກຫຼາຍໆອົງການຈັດຕັ້ງຢູ່ໃນວົງກ້ວ້າງ ໃນລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ. ຍິ່ງໄປກ່ວານັ້ນ ແນວທາງແກ້ໄຂຕ່າງໆສຳລັບສິ່ງທ້າທາຍແບບໃໝ່ ສ່ວນໃຫຍ່ແມ່ນຮຽກຮ້ອງຕ້ອງການໃຫ້ມີຮູບແບບໃໝ່ໃນການເຮັດວຽກນຳກັນ, ການຈັດຕັ້ງ ແລະ ການຕິກລົງລະຫວ່າງບັນດາຜູ້ດຳເນີນການຝ່າຍຕ່າງໆ[13].



2.2 ລະບົບການປະດິດສິ່ງໃໝ່ໆທາງດ້ານກະສິກຳ ແລະ ຄວາມໝາຍຂອງຄຳວ່າ ບົດບາດ, ຍຸດທະສາດ ແລະ ຂີດຄວາມສາມາດ ຂອງການສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳ


ແນວຄວາມຄິດກ່ຽວກັບລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ (AIS) ແມ່ນນັບມື້ເປັນທີ່ຍອມຮັບວ່າເປັນສິ່ງທີ່ເປັນປະໂຫຍດເພື່ອກຳນົດບັນດາໜ້າວຽກໃນການແຊກແຊງເຂົ້າໄປພັດທະນາ, ການອອກແບບການລົງທຶນ ແລະ ການຈັດຕັ້ງໜ້າວຽກເສີມທີ່ປະກົດວ່າມີຄວາມເປັນໄປໄດ້ຫຼາຍທີ່ສຸດທີ່ຈະໃຫ້ການສິ່ງເສີມການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ ແລະ ການຂະຫຍາຍຕົວທີ່ເປັນທຳ[14]. ການຄົ້ນຄວ້າວິໃຈທາງດ້ານກະສິກຳ, ການສິ່ງເສີມ, ການສຶກສາແລະການຝຶກອົບຮົມແມ່ນອົງປະກອບ ທີ່ເປັນກຸນແຈອັນສຳຄັນຂອງລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານ ກະສິກຳ (ພາບປະກອບທີ 1) ແລະບົດບາດ ແລະ ຄວາມສຳຄັນຂອງສິ່ງ ເຫຼົ່ານັ້ນ ແມ່ນປ່ຽນແປງໄປຕາມສະພາບແວດລ້ອມ ຂອງການຜະລິດຢູ່ໃນປະເທດຕ່າງໆ. ການນຳໃຊ້ແນວຄວາມຄິດກ່ຽວກັບ ລະບົບການປະດິດ ສ້າງສິ່ງໃໝ່ຢູ່ໃນສະພາບເງື່ອນໄຂທາງດ້ານກະສິກຳທີ່ແຕກຕ່າງກັນ ໄດ້ ສະໜອງໃຫ້ມີຄວາມເຂົ້າໃຈທີ່ເປັນປະໂຫຍດຈຳນວນຫຼາຍກ່ຽວກັບການປະດິດສ້າງສິ່ງໃໝ່ໆ ແລະ ບົດບາດທີ່ມີທ່າແຮງຂອງ ອົງການສິ່ງເສີມຢູ່ ໃນລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ (AIS). ຄຸນຄ່າອັນ ໃຫຍ່ຫຼວງຂອງແນວຄິດກ່ຽວກັບລະບົບການປະດິດ ສ້າງສິ່ງໃໝ່ໆທາງ ດ້ານກະສິກຳສຳລັບວຽກງານສິ່ງເສີມ ກໍ່ຄືການເອົາບົດ ບາດ ແລະ ການ ຈັດຕັ້ງວຽກງານສິ່ງເສີມເຂົ້າມາເປັນສ່ວນໜຶ່ງຂອງຜູ້ດຳ ເນີນການຢູ່ໃນວົງກວ້າງ, ທັ້ງເປັນສ່ວນໜຶ່ງໃນຂະບວນການ, ສະຖາບັນ ແລະ ນະໂຍບາຍ ຕ່າງໆທີ່ມີຄວາມຈຳເປັນສຳລັບການປະດິດສ້າງສິ່ງ ໃໝ່ໆ (ເບິ່ງກ່ອງທີ 2).

ຄືດັ່ງຫຼັກຖານທີ່ຊີ້ບອກຢູ່ໃນກ່ອງທີ 2, ການສິ່ງເສີມ ແລະ ການບໍລິການ ໃຫ້ຄຳປຶກສາດ້ານກະສິກຳ (EAS) ສາມາດປະກອບສ່ວນເຂົ້າໃນຂະບວນ ການຂອງການປະດິດສ້າງສິ່ງໃໝ່ໆໄດ້ດີກວ່າເກົ່າ ຖ້າສາມາດປະຕິບັດ ຕາມບົດບາດໃໝ່, ຮັບໜ້າວຽກໃໝ່, ສ້າງຍຸດທະສາດຂຶ້ນໃໝ່ທີ່ມີຄວາມ ເໝາະສົມ ແລະ ສ້າງຂີດຄວາມສາມາດແບບໃໝ່ໄດ້. ພ້ອມດຽວກັນນັ້ນ ກໍ່ສະແດງໃຫ້ເຫັນວ່າ ການສື່ສານປະຊາສຳພັນໃຫ້ຂໍ້ມູນ ແລະ ຄວາມຮູ້ ໃໝ່ ເຊິ່ງເປັນຮູບແບບທີ່ເຄີຍປະຕິບັດກັນມາແຕ່ດັ້ງເດີມ ພຽງແຕ່ຢ່າງດຽວ ນັ້ນແມ່ນບໍ່ພຽງພໍທີ່ຈະນຳໄປສູ່ການປະດິດສ້າງສິ່ງໃໝ່ໆຂຶ້ນໄດ້. ການສິ່ງເສີມ ແລະບໍລິການໃຫ້ຄຳແນະນຳດ້ານກະສິກຳ (EAS) ຍັງຈະ ຕ້ອງໄດ້ເຮັດບົດບາດອື່ນອີກຫຼາຍໆຢ່າງເພື່ອທີ່ຈະເຮັດໃຫ້ການປະດິດ ສ້າງສິ່ງໃໝ່ໆສາມາດດຳເນີນການໄດ້.

2.2.1 ບົດບາດຂອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາ ແນະນຳດ້ານກະສິກຳ (EAS): ຢູ່ໃນລະບົບການປະດິດສ້າງສິ່ງໃໝ່ທາງ ດ້ານກະສິກຳ (AIS), ບົດບາດສະເພາະຂອງແຕ່ລະລະບົບການສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ ແມ່ນອີງໃສ່ການວິເຄາະ ບົດບາດ, ໜ້າທີ່ໃນການດຳເນີນງານ ແລະ ບັນດາກິດຈະກຳຕ່າງໆຂອງຜູ້ ສະໜອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ ອື່ນໆ ແລະ ບັນດາຜູ້ດຳເນີນການທັງໝົດຢູ່ໃນລະບົບການປະດິດສ້າງສິ່ງ ໃໝ່ໆທາງດ້ານກະສິກຳ (AIS).

ບົດບາດຂອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາຂອງລັດ ຢູ່ໃນແຕ່ລະປະເທດ ສ່ວນຫຼວງຫຼາຍແລ້ວ ແມ່ນຮ່ອງຂຶ້ນມາຕາມເປົ້າໝາຍ ການພັດທະນາກະສິກຳແຫ່ງຊາດ. ເປົ້າໝາຍເຫຼົ່ານີ້ ອາດປະກອບດ້ວຍ ການບັນລຸການຄ້ຳປະກັນສະບຽງອາຫານ, ການປັບປຸງຊີວິດການເປັນຢູ່ ຂອງຊາວຊົນນະບົດ, ການສ້າງຂີດຄວາມສາມາດໃຫ້ຊາວກະສິກອນ ດ້ວຍການສ້າງຕົ້ນທຶນທາງສັງຄົມ ຫຼື ການປັບປຸງການຄຸ້ມຄອງຊັບພະຍາ ກອນທຳມະຊາດ[25]. ການສິ່ງເສີມຂອງພາກລັດ ແມ່ນເປັນພຽງພາກສ່ວນ ໜຶ່ງຂອງຜູ້ດຳເນີນການທີ່ເປັນກາງ ແລະມີຄວາມສຳຄັນ ໃນຈຳນວນບັນ ດາຜູ້ດຳເນີນການອື່ນໆຢູ່ໃນລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະ ສິກຳ, ຖ້າສົມທຽບເຖິງຄວາມໄດ້ປຽບແລ້ວ ແມ່ນການຄົງຕົວຢູ່ໃນຮູບແບບ ການປ່ຽນແປງເຊິ່ງເປັນຄືອົງການຈັດຕັ້ງໜຶ່ງທີ່ເປັນ “ຂົວຕໍ່”, ສາງການ ເຊື່ອມໂຍງເອົາບັນດາຄວາມຮູ້ຕ່າງໆເຂົ້າໃສ່ກັນໂດຍຜູ້ດຳເນີນການ

ພາບສະແດງທີ 1: ລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ



ແຫຼ່ງຂໍ້ມູນ: ດັດປັບມາຈາກ Rivera, M.W., Alex, G., Hanson, J. and R. Birner. 2006. ສະພາບແວດລ້ອມທີ່ເອື້ອອຳນວຍ: ວິວັດທະນາການ ແລະ ຄຳໝັ້ນສັນຍາຂອງ ກອບແຜນວຽກຂອງອົງຄວາມຮູ້ທາງດ້ານກະສິກຳ. ເອກະສານທີ່ນຳສະເໜີຢູ່ໃນກອງປະຊຸມຂອງສະມາຄົມເພື່ອການສິ່ງເສີມ ແລະ ການສຶກສາທາງດ້ານກະສິກຳສາກົນ (AIAEE) ຢູ່ໃນຫາດຊາຍທີ່ມີນ້ຳຈືດ, ຟຼໍຣິດາ, 14-18 ພຶດສະພາ 2006.

ກ່ອງທີ 2: ພາບລວມຕ່າງໆຈາກການຄົ້ນຄ້ວາລະບົບການປະດິດສິ່ງໃໝ່ໆທາງດ້ານກະສິກຳ (AIS) ແລະ ຜົນກະທົບຕໍ່ ການສົ່ງເສີມບໍລິການໃຫ້ຄຳແນະນຳດ້ານກະສິກຳ (EAS)

1. ການປະດິດສ້າງສິ່ງໃໝ່ແມ່ນຂະບວນການເຮັດວຽກນຳກັນເພື່ອສ້າງອົງຄວາມຮູ້ຂຶ້ນ, ເຂົ້າເຖິງໄດ້ ແລະ ເອົາໄປນຳໃຊ້ຕົວຈິງໄດ້. ມັນບໍ່ແມ່ນຂະບວນການໂດຍກົງທາງວິທະຍາສາດເພື່ອພັດທະນາຄວາມຮູ້ອັນໃໝ ແລະ ຖ່າຍທອດໄປສູ່ວຽກງານສົ່ງເສີມເພື່ອເຜີຍແຜ່ອອກສູ່ວົງກວ້າງ[15].
2. ຈຸດໃຈກາງຂອງຂະບວນການນີ້ ແມ່ນການຮຽນຮູ້ແລກປ່ຽນຮ່ວມກັນລະຫວ່າງບັນດາຜູ້ດຳເນີນການຈຳນວນຫຼາຍ ທີ່ມີອົງຄວາມຮູ້ ແລະ ຄວາມຊ່ຽວຊານທີ່ສາມາດເພີ້ມເຕີມໃຫ້ກັນ ແລະ ເຮັດໃຫ້ສົມບູນແບບ. ຂະບວນການດັ່ງກ່າວມັກຈຳເປັນຕ້ອງໄດ້ຮັບການອຳນວຍຄວາມສະດວກຍ້ອນວ່າຜູ້ດຳເນີນການບາງຄັ້ງຕ້ອງການໃຫ້ມີການພັກດັ່ນໃນເບື້ອງຕົ້ນ ຫຼື ມີການຊຸກຍູ້ເພື່ອໃຫ້ມີໂອກາດໄດ້ປຶກສາຫາລືນຳກັນ, ເຮັດວຽກຮ່ວມກັນ, ມີການແບ່ງປັນ ແລະ ການຮຽນຮູ້ຮ່ວມກັນ (ຫຼືທີ່ເອີ້ນວ່າ ເວທີສຳລັບການປະດິດຄິດສ້າງສິ່ງໃໝ່ໆ)[16].
3. ກິດຈະກຳທີ່ເປັນສື່ກາງ (ຫຼືທີ່ເອີ້ນວ່າ ການເປັນສື່ກາງ) ມີເປົ້າໝາຍເພື່ອສ້າງ, ຮັກສາ ແລະ ສ້າງຄວາມເຂັ້ມແຂງໃຫ້ສາຍພົວພັນລະຫວ່າງບຸກຄົນກັບບຸກຄົນທີ່ຢູ່ພາຍໃນອົງການຈັດຕັ້ງ ແລະ ລະຫວ່າງບັນດາຜູ້ດຳເນີນການໃນວົງກວ້າງ ທີ່ຈະຕ້ອງໄດ້ມີການຈັດຕັ້ງຂຶ້ນເພື່ອສົ່ງເສີມການປະດິດສ້າງສິ່ງໃໝ່ໆ[17].
4. ສະຖາບັນ (ທັດສະນະ, ອຸປະນິໄສ, ກົດລະບຽບ, ກົດໝາຍ, ມາດຖານ, ການປະຕິບັດ ແລະ ແນວທາງການເຮັດວຽກຕ່າງໆ) ຈະເປັນສິ່ງກຳນົດວິທີການພົວພັນ ແລະ ເຮັດວຽກນຳກັນລະຫວ່າງບຸກຄົນ ແລະ ອົງການຈັດຕັ້ງ. ເຊັ່ນດຽວກັນກັບນະໂຍບາຍຕ່າງໆ ແລະ ລັກສະນະສະພາບແວດລ້ອມທາງດ້ານນະໂຍບາຍ ກໍຍັງມີຜົນກະທົບຕໍ່ການປະດິດຄິດສ້າງສິ່ງໃໝ່ໆ[18]. ດັ່ງນັ້ນ ການສະໜັບສະໜຸນເພື່ອໃຫ້ມີການປ່ຽນແປງຢູ່ໃນສະຖາບັນ ແລະ ນະໂຍບາຍຕ່າງໆ ແມ່ນມີຄວາມສຳຄັນຫຼາຍສຳລັບການປະດິດສ້າງສິ່ງໃໝ່ໆ.
5. ການປະດິດສ້າງສິ່ງໃໝ່ໆ ຮຽກຮ້ອງໃຫ້ມີການປະສົມປະສານທາງດ້ານເຕັກນິກ, ການຈັດຕັ້ງ ແລະ ການດັດປັບທາງດ້ານສະຖາບັນ. ການລົງທຶນ ແລະ ການເປັນຄູຮ່ວມງານແບບໃໝ່ ແມ່ນຮຽກຮ້ອງໃຫ້ມີການປະດິດສິ່ງໃໝ່ໆທາງດ້ານເຕັກໂນໂລຊີເຮັດຄຽງຄູ່ກັບການປ່ຽນແປງທາງດ້ານອົງການຈັດຕັ້ງ ແລະ ສະຖາບັນ[19].
6. ການແຊກແຊງແບບດັ່ງເດີມເຊັ່ນ: ການສະໜັບສະໜູນຕໍ່ການຄົ້ວຄ້ວາວິໃຈ, ການສົ່ງເສີມ, ການສຶກສາ ແລະ ການສ້າງການເຊື່ອມຕໍ່ລະຫວ່າງການຄົ້ນຄ້ວາວິໃຈ, ການສົ່ງເສີມ ແລະ ຊາວກະສິກອນເຂົ້າໃສ່ກັນ ແມ່ນຍັງບໍ່ທັນມີປະສິດທິພາບພຽງພໍທີ່ຈະເຮັດໃຫ້ເກີດມີການປະດິດຄິດສ້າງສິ່ງໃໝ່ໆຂຶ້ນມາໄດ້ເທື່ອ. ສິ່ງນີ້ຈຳເປັນຕ້ອງໄດ້ຮັບການສະໜັບສະໜຸນດ້ວຍການແຊກເຂົ້າໄປເພີ່ມຕື່ມໃນເລື່ອງຂອງທັກສະຄວາມສາມາດທາງດ້ານວິຊາຊີບ, ບັນດາສິ່ງຈູງໃຈ ແລະ ຊັບພະຍາກອນຕ່າງໆ ເພື່ອພັດທະນາການເປັນຄູຮ່ວມງານ ແລະ ທຸລະກິດຕ່າງໆ, ປັບປຸງໃຫ້ມີການໄຫຼວຽນຄວາມຮູ້ ແລະ ການຮຽນຮູ້ ພ້ອມທັງຕ້ອງຮັບປະກັນວ່າ ສະພາບເງື່ອນໄຂຕ່າງໆໄດ້ອຳນວຍຄວາມສະດວກໃຫ້ແກ່ບັນດາຜູ້ດຳເນີນງານຕ່າງໆ ເພື່ອປະດິດຄິດສ້າງສິ່ງໃໝ່ຂຶ້ນມາ[20].
7. ການນຳເອົາຄວາມຮູ້ແບບໃໝ່ໄປນຳໃຊ້ນັ້ນບໍ່ແມ່ນຈະດຳເນີນການພາຍຫຼັງການຄົ້ນຄ້ວາວິໃຈເພື່ອເຜີຍແຜ່ຂໍ້ມູນທີ່ໄດ້ມາຢ່າງດຽວ. ການປະດິດຄິດສ້າງສິ່ງໃໝ່ໆ ສ່ວນຫຼວງຫຼາຍຕ້ອງການຄົ້ນຄ້ວາວິໃຈ ແລະສະໜັບສະໜຸນເພີ້ມຕື່ມອີກ, ບາງຄັ້ງກໍຕ້ອງນຳໃຊ້ຊ່ຽວຊານສະເພາະດ້ານ, ບາງຄັ້ງກໍຕ້ອງມີການດັດປັບບັນດາເຕັກນິກທີ່ມີຢູ່ໃນປະຈຸບັນ ແລະ ບາງຄັ້ງກໍເພື່ອແກ້ໄຂບັນຫາໃໝ ໃດໜຶ່ງທີ່ເກີດຂຶ້ນ ຫຼື ຮຽນຮູ້ວິທີທີ່ຈະປະຕິບັດບາງສິ່ງບາງຢ່າງທີ່ເປັນສິ່ງໃໝ່[21,22].
8. ການປະດິດຄິດສ້າງສິ່ງໃໝ່ໆ ແມ່ນລວມມີການດຳເນີນງານ, ບັນດາກິດຈະກຳ ແລະ ເຄື່ອງມືຕ່າງໆຢູ່ໃນວົງກ້ວາງ (ທີ່ຖືກດຳເນີນການໂດຍສຳນັກງານຫຼາຍໆແຫ່ງໂດຍຜ່ານວິທີການສົນທະນາແລກປ່ຽນ, ການເປັນພັນທະມິດ ຫຼື ການເປັນຄູຮ່ວມງານກັນ) ທີ່ ໝາຍເຖິງຄວາມຕ້ອງການປະດິດສ້າງສິ່ງໃໝ່ໆຢ່າງເປັນໝູ່ຄະນະ. ໃນຄະນະທີ່ການອຳນວຍຄວາມສະດວກໃຫ້ມີຊ່ອງທາງເຂົ້າເຖິງເຕັກໂນໂລຊີແມ່ນມີຄວາມສຳຄັນໃນການນຳເອົາການຄົ້ນຄ້ວາວິໃຈມານຳໃຊ້, ມັນກໍຈະມີຄຸນຄ່າພຽງແຕ່ເມື່ອຕອນທີ່ໄດ້ເອົາຮວບຮວມເຂົ້າກັນກັບ ບັນດາໜ້າວຽກອື່ນໆໃນການຄຸ້ມຄອງການປະດິດຄິດສ້າງສິ່ງໃໝ່ໆເຊັ່ນ: ການພັດທະນາເຄືອຂ່າຍ, ການຈັດຕັ້ງກຸ່ມຜູ້ຜະລິດ, ການປະຊາສຳພັນກ່ຽວກັບຄວາມຈຳເປັນຕ້ອງມີການຄົ້ນຄ້ວາວິໃຈ, ການໄກ່ເກ່ຍຂໍ້ຂັດແຍ່ງ, ການອຳນວຍຄວາມສະດວກໃຫ້ມີຊ່ອງທາງເຂົ້າເຖິງສິນເຊື່ອ, ການບໍລິການປັດໃຈນຳເຂົ້າ ແລະ ຜົນໄດ້ຮັບໃນເບື້ອງຕົ້ນ, ການຈັດວິທີສົນທະນາກ່ຽວກັບການປະດິດຄິດສ້າງສິ່ງໃໝ່ໆ, ການສະໜັບສະໜຸນໃຫ້ມີການປ່ຽນແປງນະໂຍບາຍ ແລະ ການຕໍ່ລອງໃຫ້ມີການປ່ຽນແປງໃນຫຼັກການປະຕິບັດ ແລະ ການດຳເນີນງານ[23].
9. ການປະດິດຄິດສ້າງສິ່ງໃໝ່ໆແມ່ນຂະບວນການໜຶ່ງຂອງການຮຽນຮູ້ ແລະ ການປັບຕົວໃຫ້ເຂົ້າກັບສະພາບການຢ່າງສະໜ່ຳສະເໝີ. ຄວາມສາມາດເພື່ອຮຽນຮູ້ທີ່ຈະເຮັດວຽກຢູ່ໃນແນວທາງອັນໃໝ ແລະ ເພື່ອສ້າງຄວາມສາມາດແບບໃໝ່ເພີ່ມຂຶ້ນ ກໍແມ່ນສ່ວນໜຶ່ງທີ່ສຳຄັນຂອງຂີດຄວາມສາມາດໃນການປະດິດຄິດສ້າງສິ່ງໃໝ່ໆຢູ່ໃນລະດັບອົງການຈັດຕັ້ງ ແລະ ຂະແໜງການ ຫຼື ລະບົບ[24]. ເພາະສະນັ້ນ, ເປົ້າໝາຍຂອງການສ້າງຂີດຄວາມສາມາດ ບໍຄວນເໜັ້ນໃສ່ການປັບປຸງຄວາມສຳນານງານທາງດ້ານເຕັກນິກວິຊາການພຽງຢ່າງດຽວເທົ່ານັ້ນ ແຕ່ຍັງຈະຕ້ອງໄດ້ເສີມສ້າງຂີດຄວາມສາມາດສຳລັບການເຮັດວຽກຮ່ວມກັນ, ການຮຽນຮູ້ ແລະ ການປັບຕົວໃຫ້ເຂົ້າກັບສະພາບການ.

ຕ່າງໆ ດ້ວຍການສົ່ງເສີມໃຫ້ເຂົາເຈົ້າມີເວທີແລກປ່ຽນ ແລະ ເຄືອຂ່າຍຕ່າງໆ ພ້ອມທັງການອຳນວຍຄວາມສະດວກໃນການນຳໃຊ້ ແລະ ຕໍ່ຈາກນັ້ນກໍຈະເປັນການອຳນວຍຄວາມສະດວກໃຫ້ມີການປະດິດສ້າງສິ່ງໃໝ່ໆເກີດຂຶ້ນ. ການສົ່ງເສີມຂອງພາກລັດ ກໍຄວນສູ້ຊົນພະຍາຍາມເພື່ອພັດທະນາຂີດຄວາມສາມາດຂອງບັນດາຜູ້ສະໜອງວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳອື່ນໆ ເພື່ອເຮັດໃຫ້ພວກເຂົາສາມາດປະກອບສ່ວນເຂົ້າໃນເປົ້າໝາຍການພັດທະນາແຫ່ງຊາດໃຫ້ໄດ້ດີຂຶ້ນກ່ວາເກົ່າ.

ໃນກໍລະນີຂອງບັນດາຜູ້ສະໜອງວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳອື່ນໆ (ນອກຈາກພາກລັດ), ບົດບາດຂອງເຂົາເຈົ້າ ສ່ວນຫຼາຍແມ່ນມັກຈະຖືກອອກແບບມາເພື່ອສ້າງຜົນປະໂຫຍດທາງດ້ານທຸລະກິດ (ພາກເອກະຊົນ), ຕາມບູລິມະສິດຂອງຜູ້ໃຫ້ທຶນ ແລະ ຕາມຄວາມສົນໃຈຂອງທ້ອງຖິ່ນ (NGOs), ສະມາຊິກທີ່ກ່ຽວຂ້ອງ (ອົງການຈັດຕັ້ງຜູ້ຜະລິດ) ແລະ ຄວາມຕ້ອງການສຳລັບການບໍລິການຕ່າງໆສະເພາະດ້ານ (ຊ່ຽວຊານທີ່ປຶກສາ) ດັ່ງນັ້ນ ບົດບາດ ແລະ ຂີດຄວາມສາມາດຂອງເຂົາເຈົ້າແມ່ນມີຄວາມສຳຄັນທີ່ແຕກຕ່າງກັນ. ພວກເຂົາເຈົ້າສ່ວນຫຼາຍແມ່ນເຮັດວຽກແບບໃຜລາວ ໂດຍສຸມໃສ່ແຕ່ການປະຕິບັດກິດຈະກຳຂອງຕົນເອງຢູ່ໃນເຂດພື້ນທີ່ໃດໜຶ່ງ ສະເພາະ ແລະ ເຮັດວຽກກັບກຸ່ມຊາວກະສິກອນໃດໜຶ່ງສະເພາະ. ຢູ່ໃນທ້າຍໝົດທຸກກໍລະນີເຫຼົ່ານີ້, ບົດບາດຂອງເຂົາເຈົ້າຄວນທີ່ຈະຂະຫຍາຍອອກຈາກການຈັດຕັ້ງປະຕິບັດບັນດາກິດຈະກຳສະເພາະໃດໜຶ່ງ ໄປສູ່ການສະໜັບສະໜຸນບັນດາຜູ້ບຳເນີນການຢູ່

ໃນລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ (AIS) ແລະ ປະສານສົມທົບກັບຜູ້ສະໜອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳອື່ນໆ (EAS). ຕົວຢ່າງເຊັ່ນ: ບັນດາອົງການ NGO ທີ່ມີຄວາມຮູ້ ແລະ ປະສົບການກ່ຽວກັບການສ້າງຕົ້ນທຶນທາງສັງຄົມ ຄວນປະສານສົມທົບກັບຂະແໜງການສິ່ງເສີມຂອງພາກລັດໃນການຮ່ວມຈັດຕັ້ງປະຕິບັດບັນດາແຜນງານການພັດທະນາຕ່າງໆທີ່ກ່ຽວຂ້ອງກັບການພັດທະນາອົງການຈັດຕັ້ງຂອງຊາວກະສິກອນ ແລະ ຝຶກອົບຮົມໃຫ້ຜູ້ນຳຂອງຊາວກະສິກອນ ແລະ ບັນດາຜູ້ສະໜອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳອື່ນໆ, ລວມທັງພະນັກງານໃນຂະແໜງການຂອງລັດກ່ຽວກັບວິທີການສ້າງຕົ້ນທຶນທາງສັງຄົມ. ເຊັ່ນດຽວກັນ, ບໍລິສັດ ທຸລະກິດກະສິກຳຂອງພາກເອກະຊົນ ກໍຄວນທີ່ຈະເປັນຄູ່ຮ່ວມງານກັບຂະແໜງການສິ່ງເສີມຂອງພາກລັດ ແລະ ບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ເພື່ອລິເລີ່ມຈັດຕັ້ງປະຕິບັດກິດຈະກຳຮ່ວມກັນ ເພື່ອເຊື່ອມໂຍງເອົາຊາວກະສິກອນໃຫ້ຕິດພັນກັບຕະຫຼາດຊື້ຂາຍທີ່ມີມູນຄ່າສູງ. ບາງອົງການ ຈັດຕັ້ງ (ທີ່ສາມາດເປັນຄົນກາງໄດ້) ແມ່ນຈະດຳເນີນການໄດ້ດີກວ່າໃນການພັດທະນາສາຍພົວພັນລະຫວ່າງຜູ້ດຳເນີນການຕ່າງໆ ແລະ ເຮັດໃຫ້ການດຳເນີນງານມີການປະສານສົມທົບນຳກັນ.

2.2.2 ໜ້າທີ່ຂອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາ ແນະນຳດ້ານກະສິກຳ

ເນື່ອງຈາກບົດບາດຂອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳຢູ່ໃນລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ (AIS) ແມ່ນກ່ຽວກັບການແລກປ່ຽນ ແລະ ການອຳນວຍຄວາມສະດວກໃນການເຂົ້າເຖິງຂໍ້ມູນຂ່າວສານ, ຄວາມຮູ້ ແລະ ຄວາມສຳນານງານໃຫ້ຫຼາຍຂຶ້ນກວ່າເກົ່າ ແລະ ການເຮັດວຽກຮ່ວມກັບຂະແໜງການອື່ນໆເພື່ອເຮັດໃຫ້ມີການປະດິດຄິດສ້າງສິ່ງໃໝ່ໆ, ດັ່ງນັ້ນ ວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳ (EAS) ຄວນປະຕິບັດໜ້າທີ່ໃນການຄຸ້ມຄອງການປະດິດຄິດສ້າງສິ່ງໃໝ່ໆຢູ່ໃນວົງກ້ວາງຄືດັ່ງທີ່ໄດ້ກ່າວໄວ້ຢູ່ໃນ (ກ່ອງທີ 2, ຂໍ້ 8). ແຕ່ສິ່ງສຳຄັນທີ່ຈະຕ້ອງໄດ້ຄຳນຶງເອົາໄວ້ກໍຄືຜູ້ສະໜອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳນັ້ນ ບໍ່ຈຳເປັນຕ້ອງໄດ້ປະຕິບັດຕາມທຸກໆໜ້າທີ່ຕ່າງໆເຫຼົ່ານັ້ນທີ່ໄດ້ລະບຸໄວ້. ໜ້າທີ່ຕົວຈິງ ທີ່ແຕ່ລະພາກສ່ວນຈະຕ້ອງໄດ້ປະຕິບັດແມ່ນຈະອີງຕາມຄວາມຕ້ອງການຂອງຊາວກະສິກອນທີ່ຢາກໄດ້ຮັບການບໍລິການຊ່ວຍເຫຼືອ, ສະພາບເງື່ອນໄຂໃນທ້ອງຖິ່ນ, ພາລະບົດບາດຂອງອົງການຈັດຕັ້ງ, ຊັບພະຍາກອນ ແລະ ຂີດຄວາມສາມາດທີ່ມີຢູ່.

ທາງໜຶ່ງທີ່ຈະກ້າວໄປເຖິງໜ້າທີ່ສະເພາະຕ່າງໆໃດໜຶ່ງໄດ້ນັ້ນ ແມ່ນຈະຕ້ອງມີການຈັດເວທີສົນທະນາທີ່ນຳເອົາບັນດາພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເຂົ້າມາປຶກສາຫາລືຮ່ວມກັນ ແລະ ປັບປຸງການເຮັດວຽກນຳກັນເພື່ອປ່ຽນແປງແນວທາງໃນການດຳເນີນງານຂອງອົງການຈັດຕັ້ງຂອງຕົນ ແລະ ປະສານສົມທົບກັບຂະແໜງການອື່ນໆ (‘ເວທີສົນທະນາການປະດິດສ້າງສິ່ງໃໝ່ໆ’)[26]. ຕົວຢ່າງ: ເວທີສົນທະນາການປະດິດສ້າງສິ່ງໃໝ່ໆແຫ່ງຊາດສຳລັບຂະແໜງການຜະລິດກະສິກຳຢູ່ ເບນິນ ທີ່ມີຜູ້ຕາງໜ້າຈາກເຈັດກຸ່ມຂອງພາກສ່ວນທີ່ກ່ຽວຂ້ອງ ແລະ ໄດ້ຮັບຜົນປະໂຫຍດ (ເຊັ່ນ: ກຸ່ມຊາວກະສິກອນ; ກຸ່ມຜູ້ແປຮູບຜະລິດຕະພັນກະສິກຳ; ກຸ່ມວິຊາການ ແລະ ກຸ່ມນັກຄົ້ນຄ້ວາ; ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ; ຜູ້ກຳນົດນະໂຍບາຍຈາກບັນດາກະຊວງທີ່ກ່ຽວຂ້ອງ; ແລະ ອົງການຈັດຕັ້ງສາກົນ) ໄດ້ເຂົ້າຮ່ວມໃນການດຳເນີນການປະເມີນບັນດາຄວາມຕ້ອງການໃນການປະດິດສ້າງສິ່ງໃໝ່ໆ, ການອຳນວຍຄວາມສະດວກຕໍ່ການເປັນຄູ່ຮ່ວມງານລະຫວ່າງພາກລັດ ແລະ ເອກະຊົນ, ແລະ ການກະຕຸກຊຸກຍູ້ໃຫ້ມີການປຶກສາຫາລືຮ່ວມກັນລະຫວ່າງບັນດາພາກສ່ວນທີ່ກ່ຽວຂ້ອງຕ່າງໆໃຫ້ເປັນປົກກະຕິ[27]. ເພື່ອຮັບປະກັນໃຫ້ບັນດາຜູ້ດຳເນີນງານຢູ່ໃນລະດັບຕ່າງໆ ໄດ້ມີການເຮັດວຽກຮ່ວມກັນເພື່ອໃຫ້ສາມາດປະດິດຄິດສ້າງສິ່ງໃໝ່ໆຂຶ້ນມາໄດ້ນັ້ນ, ໜ້າທີ່ດຳເນີນງານໃນການສື່ສານປະຊາສຳພັນອື່ນໆເຊັ່ນ: ການສ້າງເຄືອຂ່າຍ, ການສະໜັບສະໜູນການຮຽນຮູ້ທາງສັງຄົມ ແລະ ການຮັບມືກ່ຽວກັບອຳນາດໜ້າທີ່ ແລະ ຄວາມຂັດແຍ່ງກັນ ແມ່ນມີຄວາມສຳຄັນຫຼາຍ[28]. ໜ້າທີ່ຕ່າງໆເຫຼົ່ານີ້ ຍັງຖືກເອີ້ນວ່າ ‘ການວາງຂອບເຂດຂອງວຽກງານ’, ‘ການເປັນຄົນກາງ’ ແລະ ໄລຍະຫຼັງມານີ້ໄດ້ພາກັນເອີ້ນວ່າ ‘ການເປັນສື່ກາງໃນການປະດິດຄິດສ້າງສິ່ງໃໝ່ໆ’[31].

ໃນສະພາບແວດລ້ອມຂອງວຽກງານສິ່ງເສີມທີ່ນັບມື້ມີການເພີ່ມຂຶ້ນຂອງຫຼາຍພາກສ່ວນ, ວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນຂະແໜງການຂອງລັດ ກໍຄວນດຳເນີນການເປັນຜູ້ນຳພາ (ໂດຍປະສານສົມທົບຮ່ວມກັບເວທີສົນທະນາກ່ຽວກັບວຽກງານສິ່ງເສີມ) ໃນການກຳນົດຊ່ອງວ່າງຕ່າງໆໃນການສະໜອງການບໍລິການ ແລະ ເພື່ອຮັບປະກັນວ່າຊ່ອງວ່າງເຫຼົ່ານີ້ ແມ່ນໄດ້ຮັບການແກ້ໄຂຜ່ານການດຳເນີນງານຂອງພາກລັດ ຫຼື ການສະໜອງທຶນເພື່ອຂະຫຍາຍການບໍລິການ ແລະ ການພັດທະນາຂີດຄວາມສາມາດໃນການສິ່ງເສີມ, ການປະສານສົມທົບ ແລະ ການເຮັດວຽກຮ່ວມກັນກັບບັນດາຜູ້ໃຫ້ການບໍລິການສິ່ງເສີມ ແລະໃຫ້ຄຳປຶກສາດ້ານກະສິກຳ. ຂະແໜງການຂອງລັດຍັງຈະຕ້ອງໄດ້ນຳພາການປະສານງານບັນດາກິດຈະກຳຕ່າງໆຂອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳທີ່ມີຄວາມຫຼາກ



ຫຼາຍ ເພື່ອໃຫ້ນຳໃຊ້ຊັບພະຍາກອນຕ່າງໆ ຢ່າງມີປະສິດທິຜົນສູງສຸດໄດ້. ການປະສານງານກໍມີຄວາມສຳຄັນເຊັ່ນດຽວກັນເພື່ອຮັບປະກັນວ່າ ຄົນທຸກຍາກ, ຊາວກະສິກອນຂະໜາດນ້ອຍ, ແມ່ຍິງ ແລະ ບັນດາຊາວ ກະສິກອນທີ່ດ້ອຍໂອກາດໄດ້ຮັບການບໍລິການທີ່ດີເຊັ່ນກັນ. ການປະ ສານງານຈະເກີດຂຶ້ນໄດ້ເມື່ອມີຜົນຮ່ວມງານທີ່ມີທ່າແຮງມີວິໄສທັດທີ່ຄ້າຍ ຄືກັນກ່ຽວກັບບັນຫາ ແລະ ໂອກາດຕ່າງໆຂອງເຂົາເຈົ້າ. ເຊັ່ນດຽວກັນ ການປະສານສົມທົບ ແລະ ການເຮັດວຽກຮ່ວມກັນ ຈະເຮັດໃຫ້ສຳເລັດ ຜົນໄດ້ ກໍຕໍ່ເມື່ອວ່າ ມີຄວາມເຊື່ອໝັ້ນຊຶ່ງກັນ ແລະ ກັນ ເຊິ່ງຈະສະໜັບ ສະໜຸນໃຫ້ເກີດມີຄວາມມຸ້ງໝັ້ນຫຼາຍຂຶ້ນຜ່ານການແລກປ່ຽນຄວາມຮູ້ ແລະ ການແກ້ໄຂຂໍ້ຂັດແຍ່ງໄດ້ດີກວ່າເກົ່າ[32].

2.2.3 ຍຸດທະສາດການປະຕິຮູບ

ເມື່ອການດຳເນີນວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານ ກະສິກຳ (ຫຼື ການດຳເນີນງານຂອງອົງການຈັດຕັ້ງອື່ນໆຢູ່ໃນລະບົບການ ປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ-AIS) ຫາກຂຶ້ນຢູ່ກັບທັກສະ ຄວາມສາມາດທາງດ້ານເຕັກນິກວິຊາການ ແລະ ວິທີການທີ່ຜູ້ດຳເນີນ ການປະຕິບັດ ຫຼື ການພົວພັນກັບຊຸມຊົນຂອງຕົນເອງ ແລະ ບັນດາຜູ້ດຳ ເນີນການຢູ່ໃນລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ-AIS ຄົນອື່ນໆ ແລະ ການປະກອບສ່ວນຄວາມຮູ້ ແລະ ຄວາມຊຳນານງານ ຂອງຕົນເຂົ້າໃນຂະບວນການປະດິດສ້າງສິ່ງໃໝ່ໆນັ້ນ, ການປະຕິຮູບຈຶ່ງ ບໍ່ຄວນຈຳກັດພຽງແຕ່ສະເພາະການເຮັດວຽກສົ່ງເສີມເທົ່ານັ້ນ. ທາງທີ່ດີ ແລ້ວການປະຕິຮູບ ຄວນມີເປົ້າໝາຍທີ່ສຸມໃສ່ຜູ້ດຳເນີນການທັງໝົດຢູ່ ໃນທຸກລະດັບຂອງລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ-AIS ໂດຍອີງຕາມການຄົ້ນພົບຕ່າງໆຈາກການວິເຄາະລະບົບການປະ ດິດສ້າງສິ່ງໃໝ່ໆ (ເບິ່ງຫົວຂໍ້ 2.2.5). ການປະຕິຮູບຕ່າງໆ ຍັງສົມຄວນທີ່ ຈະຕ້ອງໄດ້ຈັດການໃຫ້ມີການປ່ຽນແປງທາງດ້ານສະຖາບັນ ແລະ ນະ ໂຍບາຍຢ່າງຊັດເຈນ ເພື່ອເສີມສ້າງຄວາມສາມາດຂອງບັນດາຜູ້ດຳເນີນ ການຕ່າງໆ, ໂດຍສະເພາະ ຜູ້ດຳເນີນການທີ່ມີຄວາມສາມາດໃນການ ສ້າງອິດທິພົນຢ່າງຫຼວງຫຼາຍຕໍ່ລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານ ກະສິກຳ-AIS, ເພື່ອດຳເນີນງານໃຫ້ເປັນລະບົບ.

ແນວຄວາມຄິດກ່ຽວກັບລະບົບການປະດິດສ້າງສິ່ງໃໝ່ໆ ຈະເໜັ້ນໜັກ ໃຫ້ຄວາມສຳຄັນຂອງການຮຽນຮູ້ ແລະ ການປັບຕົວໃຫ້ເຂົ້າກັບສະພາບ. ການປະດິດສ້າງສິ່ງໃໝ່ໆ ແມ່ນຂະບວນການອັນໜຶ່ງຂອງການເພີ່ມ ການປັບຕົວໃຫ້ເຂົ້າກັບສະ ພາບ, ດັ່ງນັ້ນ ການຫ້າງຫາກະກຽມວຽກງານ ສົ່ງເສີມແບບໃໝ່ ຈຳເປັນຕ້ອງໄດ້ຄ່ອຍໆພັດທະນາຂຶ້ນບົນພື້ນຖານ ຄວາມຕ້ອງການຈາກລູກຄ້າ ແລະ ຄວາມຕ້ອງການຂອງຕະຫຼາດ, ສະພາບເງື່ອນໄຂໃນທ້ອງຖິ່ນ, ຂໍ້ຍຸ້ງຍາກ ແລະ ການລະໂອກາດຕ່າງໆ. ເຮົາສາມາດເວົ້າໄດ້ວ່າ ການປະຕິຮູບ ຄວນຢູ່ບົນພື້ນຖານການທົດລອງ ເຮັດ ແລະ ການຮຽນຮູ້ (ເບິ່ງຂໍ້ມູນເພີ່ມຕື່ມໃນຫົວຂໍ້ 4.2.3) ເຊິ່ງສາມາດ ດຳເນີນການລິເລີ່ມທົດທອງໂດຍເວທີສຳລັບການປະດິດສ້າງສິ່ງໃໝ່ໆ ຫຼື ເຄືອຂ່າຍວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະ ສິກຳແຫ່ງຊາດ. ເມື່ອພິຈາລະນາເບິ່ງ ການທີ່ມີບັນດາຜູ້ດຳເນີນການທີ່ມີ ຄວາມຫຼາກຫຼາຍ ແລະ ຢູ່ໃນວົງກ້ວາງ, ຈຸດປະສົງການພັດທະນາ, ສິ່ງທ້າ ທາຍ, ຂໍ້ຍຸ້ງຍາກ ແລະ ບັນດາໂອກາດຕ່າງໆ ເຊັ່ນດຽວກັນກັບບົດຮຽນທີ່ ຖອດຖອນໄດ້ຈາກປະສົບການທີ່ຜ່ານມາ, ເຫັນວ່າ ການຈັດຕັ້ງປະຕິບັດ ຮູບແບບໜຶ່ງດຽວຂອງການສົ່ງເສີມ ຫຼື ການປະຕິບັດຍຸດທະສາດການ ປະຕິຮູບຢ່າງດຽວທົ່ວປະເທດ, ທົ່ວແຂວງ ຫຼື ທົ່ວລັດນັ້ນ ບໍ່ຄວນເປັນແນວ ທາງທີ່ຈະນຳໃຊ້ສຳລັບການດຳເນີນການປະຕິຮູບລະບົບການສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ.

2.2.4 ຂີດຄວາມສາມາດອັນໃໝ່ສຳລັບວຽກງານສົ່ງເສີມ ແລະ ການບໍລິການ ໃຫ້ຄຳປຶກສາແນະນຳດ້ານກະສິກຳ

ວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິ ກຳ-EAS ຈຳເປັນຕ້ອງມີລະດັບຂີດຄວາມສາມາດແບບໃໝ່ ເພື່ອຮັບມື ກັບບັນດາສິ່ງທ້າທາຍທີ່ກຳລັງຄ່ອຍໆພັດທະນາຂຶ້ນຢູ່ໃນຂະແໜງການ ຜະລິດກະສິກຳ, ບົດບາດແບບໃໝ່ຕ່າງໆ, ໜ້າທີ່ການດຳເນີນງານ ແລະ ຍຸດທະສາດການປະຕິຮູບທີ່ໄດ້ຄາດການໄວ້. ວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ-EAS ຄວນມີຂີດຄວາມສາ ມາດເພື່ອດຳເນີນບັນດາໜ້າວຽກການຄຸ້ມຄອງການປະດິດສ້າງສິ່ງໃໝ່ ໆໃນລະດັບຕ່າງໆ ທີ່ໄດ້ຍົກຂຶ້ນມາປຶກສາຫາລືກ່ອນໜ້ານີ້ (ກ່ອງທີ 2). ນອກຈາກນີ້ແລ້ວ ກໍຈຳເປັນຕ້ອງມີຂີດຄວາມສາມາດທາງດ້ານວິຊາ ການ ແລະ ການດຳເນີນງານເພື່ອສົ່ງເສີມເຕັກໂນໂລຊີທາງດ້ານກະສິ ກຳທີ່ເໝາະສົມ, ນຳໃຊ້ວິທີການແບບມີສ່ວນຮ່ວມ, ຊ່ວຍຈັດຕັ້ງກຸ່ມຜູ້ ຜະລິດ, ມີຄວາມເຂົ້າໃຈກ່ຽວກັບຕະຫຼາດ, ຕ້ອງໂສ້ມູນຄ່າ ແລະ ຈັດ ການກັບຮູບແບບການປ່ຽນແປງຂອງສະພາບດິນຟ້າອາກາດ, ຄວາມອ່ອນແອທາງດ້ານເສດຖະກິດ ແລະ ສັງຄົມ.

2.2.5 ການວິເຄາະຂີດຄວາມສາມາດທີ່ມີຢູ່ໃນປະຈຸບັນ

ເນື່ອງຈາກວ່າສະພາບເງື່ອນໄຂໃນປະຈຸບັນມີອິດທິພົນຕໍ່ອົງການ ຈັດຕັ້ງ ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງໃຫ້ບັນດາອົງການຈັດຕັ້ງເຫຼົ່ານັ້ນ ສຸມໃສ່ສະພາບເງື່ອນໄຂຂອງຕົນເອງ. ສະພາບເງື່ອນໄຂດັ່ງ ກ່າວຈະສ້າງແຮງຈູງໃຈໃຫ້ອົງການຈັດຕັ້ງຕ່າງໆ ພ້ອມທັງກະຕຸ້ກ ຊຸກຍູ້ໃຫ້ເຂົາເຈົ້າດຳເນີນງານຢູ່ໃນຮູບແບບທີ່ແນ່ນອນໃດໜຶ່ງ. ເໝາະສະນັ້ນ ການວິເຄາະຂີດຄວາມສາມາດໃນປະຈຸບັນສຳລັບ ການປະດິດສ້າງສິ່ງໃໝ່ໆຂອງລະບົບການປະດິດຄິດສ້າງສິ່ງໃໝ່ ທາງດ້ານກະສິກຳ ຈຶ່ງເປັນຈຸດເລີ່ມຕົ້ນທີ່ດີເພື່ອລິເລີ່ມການພັດທະ ນາຂີດຄວາມສາມາດ. ການນຳໃຊ້ ‘ເຄື່ອງມືທີ່ມີສີ່ອົງປະກອບ’[33] ທີ່ໄດ້ພັດທະນາຂຶ້ນສຳລັບການປະເມີນໃນລັກສະນະເປັນການວິ ເຄາະຂີດຄວາມສາມາດໃນການປະດິດຄິດສ້າງສິ່ງໃໝ່ໆ ກໍສາ ມາດເປັນຈຸດເລີ່ມຕົ້ນທີ່ດີໄດ້ເຊັ່ນກັນ ເຊິ່ງສີ່ອົງປະກອບທີ່ວ່ານີ້ ຄື:

1. ບັນດາຜູ້ດຳເນີນການ/ຜູ້ທີ່ກ່ຽວຂ້ອງ ແລະ ບົດບາດຂອງເຂົາ ເຈົ້າ (ລວມທັງຄວາມຊຳນິຊຳນານ, ທັກສະຄວາມສາມາດ ແລະ ຄວາມສົນໃຈຂອງເຂົາເຈົ້າ ແລະ ຄວາມຕ້ອງການ ສຳລັບການສະໜັບສະໜຸນ;
2. ຮູບແບບຂອງການເຮັດວຽກນຳກັນລະຫວ່າງຜູ້ດຳເນີນການ ຕ່າງໆ
3. ສະຖາບັນ (ກົດລະບຽບ, ກົດໝາຍ, ຂະນົບທຳນຽມ, ນິໃສ ແລະ ການປະຕິບັດ) ແລະ;
4. ສະພາບແວດລ້ອມທີ່ເອື້ອອຳນວຍທາງດ້ານນະໂຍ ບາຍ

ໂດຍຄຳນຶງເຖິງວຽກງານສົ່ງເສີມ ແລະ ການບໍລິ ການໃຫ້ຄຳປຶກສາດ້ານກະສິກຳແບບມີຫຼາຍ ພາກສ່ວນ ເຊິ່ງນັບມື້ແມ່ນມີການຂະຫຍາຍຕົວ ຫຼາຍຂຶ້ນ ພ້ອມກັບຄວາມເປັນເອກະລາດໃນ ການສົ່ງເສີມຂອງບັນດາຜູ້ດຳເນີນການອື່ນ ໆຢູ່ໃນລະບົບການປະດິດສ້າງສິ່ງໃໝ່ທາງ ດ້ານກະສິກຳເພື່ອອຳນວຍຄວາມສະດວກ ຫຼື ເຮັດໃຫ້ການປະດິດຄິດສ້າງສິ່ງໃໝ່ສາ ມາດດຳເນີນການໄດ້ນັ້ນ ການວິເຄາະຂີດ ຄວາມສາມາດຢູ່ໃນວົງກ້ວ້າງສຳລັບລະບົບ ການປະດິດຄິດສ້າງສິ່ງໃໝ່ທາງດ້ານກະສິກຳຈຶ່ງມີ ຄວາມສຳຄັນ ຫຼືສາມາດເວົ້າໄດ້ວ່າ ການວິເຄາະຂີດຄວາມສາ ມາດທີ່ມີຢູ່ໃນວຽກງານສົ່ງເສີມ ແລະການບໍລິການໃຫ້ຄຳປຶກສາ ດ້ານກະສິກຳ ຄວນທີ່ຈະປະຕິບັດຕາມການວິເຄາະຂີດ ຄວາມສາມາດໃນວົງກ້ວ້າງທີ່ກ່າວເຖິງນີ້ ຢູ່ໃນລະບົບການ ປະດິດຄິດສ້າງສິ່ງໃໝ່ໆທາງດ້ານກະສິກຳ. ນອກຈາກນັ້ນແລ້ວ ການປະເມີນຂີດຄວາມສາມາດ ຄວນ ຖືກຈັດຕັ້ງເປັນຂະບວນການປຶກສາຫາລື. ສິ່ງນີ້ແມ່ນມີຄວາມ ຈຳເປັນເພື່ອຮັບປະກັນຄວາມເປັນເຈົ້າການໃນການດຳເນີນງານ ແລະ ຫຼຸດຜ່ອນການຕ້ານທານຕໍ່ການປ່ຽນແປງ. ແຕ່ເຖິງຢ່າງໃດ ກໍຕາມ ການພັດທະນາຂີດຄວາມສາມາດຢູ່ໃນລະດັບບຸກຄົນ ໂດຍບໍ່ມີການຂະຫຍາຍພາລະບົດບາດຂອງອົງການຈັດຕັ້ງອອກ ສູ່ວົງກ້ວ້າງ ແລະ ບໍ່ມີການພັດທະນາຂີດຄວາມສາມາດອັນໃໝ່ຢູ່ໃນ ລະດັບອົງການຈັດຕັ້ງ ແລະ ມີສະພາບແວດລ້ອມທີ່ເອື້ອອຳນວຍນັ້ນ ຈະເຮັດໃຫ້ບໍ່ໄດ້ຮັບຜົນຕາມທີ່ຕ້ອງການ. ເພາະສະນັ້ນ ການພັດທະນາ

ຂີດຄວາມສາມາດຕ້ອງສຸມໃສ່ທັງສາມມິຕິໃນຮູບແບບທີ່ມີການປະສົມປະສານກັນເປັນໜຶ່ງດຽວ. ຢູ່ໃນຫົວຂໍ້ຕໍ່ໄປແມ່ນຈະໄດ້ປຶກສາຫາລືກ່ຽວກັບມິຕິຕ່າງໆເຫຼົ່ານີ້.

3. ລະດັບການພັດທະນາຂີດຄວາມສາມາດໃນວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳ

ຍຸດທະສາດການຮ່ວມມືຂອງອົງການອາຫານ ແລະ ການກະເສດກ່ຽວກັບການພັດທະນາຂີດຄວາມສາມາດ[34] ຈະສະ ໜອງກອບແຜນວຽກທີ່ເປັນປະໂຫຍດເພື່ອເຮັດໃຫ້ບັນລຸເປົ້າໝາຍການພັດທະນາຂີດຄວາມສາມາດ ແລະ ກໍມີຄວາມກ່ຽວຂ້ອງຢ່າງເທົ່າທຽມກັນສຳລັບການພັດທະນາຂີດຄວາມສາມາດໃນວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ. ກອບແຜນວຽກຂອງອົງການອາຫານ ແລະ ການກະເສດ ແມ່ນເວົ້າກ່ຽວກັບຂີດຄວາມສາມາດທາງດ້ານເຕັກນິກວິຊາການ ແລະ ການດຳເນີນງານຢູ່ໃນທັງໝົດສາມລະດັບເຊັ່ນ: ລະດັບບຸກຄົນ, ລະດັບອົງການຈັດຕັ້ງ ແລະ ລະດັບສະພາບແວດລ້ອມທີ່ເອື້ອອຳນວຍ. ຄວາມຮຽກຮ້ອງຕ້ອງການດ້ານຂີດຄວາມສາມາດຢູ່ໃນສາມລະດັບນີ້ ແມ່ນມີດັ່ງນີ້:

- ໃນລະດັບສ່ວນບຸກຄົນແມ່ນກ່ຽວຂ້ອງກັບ: ຄວາມຮູ້, ທັກສະ (ທາງດ້ານເຕັກນິກ ແລະ ການຄຸ້ມຄອງ), ແລະ ທັດສະນະຄະຕິຕ່າງໆທີ່ສາມາດຍົກຂຶ້ນມານຳສະເໜີໄດ້ ໂດຍຜ່ານການອຳນວຍຄວາມສະດວກ, ການຝຶກອົບຮົມ ແລະ ການພັດທະນາຄວາມສາມາດ.
- ໃນລະດັບອົງການຈັດຕັ້ງແມ່ນກ່ຽວຂ້ອງກັບ: ອົງການຈັດຕັ້ງຂອງລັດ, ເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມ ພ້ອມທັງເຄືອຂ່າຍຂອງອົງການຈັດຕັ້ງໃນດ້ານ: ກ) ຍຸດທະສາດການຄຸ້ມຄອງ, ໂຄງຮ່າງການຈັດຕັ້ງ ແລະ ສາຍພົວພັນ; ຂ) ຂີດຄວາມສາມາດໃນການດຳເນີນງານ (ສາຍພົວພັນ, ຂະບວນການ, ລະບຽບຕ່າງໆ, ຂັ້ນຕອນ, ການອະນຸມັດ, ສິ່ງຈູງໃຈ ແລະ ຄຸນຄ່າຕ່າງໆ; ຄ) ຊັບພະຍາກອນມະນຸດ ແລະ ການເງິນ (ນະໂຍບາຍ, ການຊັບຊ້ອນ ແລະ ການດຳເນີນງານ); ງ) ຄວາມຮູ ແລະ ຊັບພະຍາກອນຂໍ້ມູນ; ແລະ ຈ) ໂຄງລ່າງພື້ນຖານ.
- ໃນລະດັບສະພາບແວດລ້ອມທີ່ເອື້ອອຳນວຍແມ່ນກ່ຽວຂ້ອງກັບ: ຄວາມມຸ້ງໝັ້ນ ແລະ ວິໃສທັດທາງດ້ານການເມືອງ; ນະໂຍບາຍ, ກົດໝາຍ ແລະ ລະບຽບຫຼັກການ ແລະ ກອບແຜນວຽກທາງດ້ານເສດຖະກິດ; ຂະບວນການ ແລະ ການຈັດສັນງົບປະມານໃຫ້ແຕ່ລະຂະແໜງການຂອງລັດແຫ່ງຊາດ; ການປົກຄອງ ແລະ ໂຄງສ້າງທາງດ້ານອຳນາດ; ໂຄງລ່າງພື້ນຖານ; ສິ່ງດຶງດູດໃຈ ແລະ ຂະນົບທຳນຽມທາງສັງຄົມ.

ຂີດຄວາມສາມາດໃນການດຳເນີນງານຈຳນວນໜຶ່ງດັ່ງຕໍ່ໄປນີ້ ທີ່ອົງການອາຫານ ແລະ ການກະເສດ ເປັນຜູ້ກຳນົດໄວ້ ແມ່ນຮຽກຮ້ອງໃຫ້ມີຢູ່ໃນທັງໝົດສາມລະດັບ ເຊິ່ງລວມມີດັ່ງນີ້:

ກ) ຂີດຄວາມສາມາດດ້ານນະໂຍບາຍ: ຄວາມສາມາດໃນການສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍ ແລະ ນຳພາການປະຕິຮູບນະໂຍບາຍ:
ຂ) ຂີດຄວາມສາມາດທາງດ້ານຄວາມຮູ້: ຄວາມສາມາດໃນການເຂົ້າເຖິງ, ການສ້າງຂຶ້ນ, ການຄຸ້ມຄອງ ແລະ ການແລກປ່ຽນຂໍ້ມູນ ແລະ ຄວາມຮູ້
ຄ) ຂີດຄວາມສາມາດໃນການເປັນຄູ່ຮ່ວມງານ: ຄວາມສາມາດເຂົ້າໄປມີສ່ວນຮ່ວມຢູ່ໃນເຄືອຂ່າຍ, ພັນທະມິດ ແລະ ການເປັນຄູ່ຮ່ວມງານ.
ງ) ຂີດຄວາມສາມາດໃນການຈັດຕັ້ງປະຕິບັດ: ຄວາມສາມາດໃນການຄຸ້ມຄອງເພື່ອຈັດຕັ້ງປະຕິບັດ ແລະ ນຳພາການດຳເນີນແຜນງານ ແລະ ໂຄງການຕ່າງໆ ເລີ່ມຈາກການວາງແຜນໄປເຖິງການຕິດຕາມກວດກາ ແລະ ການປະເມີນຜົນ.

3.1 ລະດັບບຸກຄົນ

ຄຳແນະນຳທີ່ມີປະສິດທິພາບຈະບໍ່ແມ່ນເລື່ອງຂອງການໃຫ້ຂໍ້ມູນກ່ຽວກັບເຕັກໂນໂລຊີແບບເປັນຊຸດອີກຕໍ່ໄປແລ້ວ. ວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳ (EAS) ຄວນມີບຸກຄົນທີ່ມີຄວາມ

ຕາຕະລາງທີ 1: ຂີດຄວາມສາມາດທີ່ຕ້ອງການໃນລະດັບບຸກຄົນໃນວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ-EAS

ທາງດ້ານເຕັກນິກ	ທາງດ້ານການດຳເນີນງານ
ມີຄວາມເຂົ້າໃຈດີກ່ຽວກັບເຕັກໂນໂລຊີ/ການປະຕິບັດ/ມາດຕະຖານ/ລະບຽບການ/ນະໂຍບາຍ/ ທີ່ເໝາະສົມ/ມີຄວາມກ່ຽວຂ້ອງ/ ນະໂຍບາຍໃນການຄຸ້ມຄອງກະສິກຳ ແລະ ຊັບພະຍາກອນທຳມະຊາດ. ບາງຂົງເຂດໜ້າວຽກທາງດ້ານເຕັກນິກເຫຼົ່ານີ້ແມ່ນລວມມີດັ່ງນີ້: ບັນດາທາງເລືອກຕ່າງໆທາງດ້ານເຕັກນິກເພື່ອສະໜັບສະໜູນການປັບຕົວໃຫ້ເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ; ທຸລະກິດ-ກະສິກຳ, ການເພີ່ມມູນຄ່າ ແລະ ການພັດທະນາຕ່ອງໂສ້ມູນຄ່າ; ການນຳໃຊ້ເຕັກໂນໂລຊີ-ຊີວະວິທະຍາ; ຊັບສິນທາງປັນຍາ ແລະ ສິດທິຂອງຊາວກະສິກອນ; ການນຳໃຊ້ຂໍ້ມູນຂາວສານເຕັກໂນໂລຊີ ແລະ ການສື່ສານປະຊາສຳພັນແບບໃໝ່	ການປຸກລະດົມຊຸມຊົນ (ການຈັດຕັ້ງກຸ່ມຜູ້ຜະລິດ ແລະ ກຸ່ມແມ່ຍິງໃນຊົນນະບົດເປັນກຸ່ມດຳເນີນກິດຈະກຳຕ່າງໆ/ ເປັນກຸ່ມຕາມຄວາມສົນໃຈ) ການພັດທະນາອົງການຈັດຕັ້ງຂອງຊາວກະສິກອນ (ຈັດຕັ້ງໃຫ້ເປັນກຸ່ມ, ເຮັດໃຫ້ມີຄວາມຍືນຍົງ ແລະ ສ້າງໃຫ້ເປັນສະຫະພັນ ຊາວກະສິກອນ ເພື່ອຮັບຜິດຊອບໃນການປະຕິບັດໜ້າທີ່ສົ່ງເສີມ ແລະ ບໍລິການໃຫ້ຄຳປຶກສາດ້ານກະສິກຳແບບໃໝ່ໃນການຜະລິດກະສິກຳ ແລະ ການເຊື່ອມໂຍງເຂົ້າເຈົ້າໃຫ້ເຂົ້າເຖິງແຫຼ່ງຄວາມຮູ ແລະ ການບໍລິການໃໝ່ໆ) ການອຳນວຍຄວາມສະດວກ (ໃຫ້ການອຳນວຍຄວາມສະດວກດ້ານການປຶກສາຫາລື, ເຮັດໃຫ້ສາມາດສ້າງປະຊາມະຕິ ແລະ ຮ່ວມດຳເນີນງານ, ໄປຕາມຂະບວນການຂອງຜູ້ທີ່ມີສ່ວນກ່ຽວຂ້ອງຫຼາຍຝ່າຍ ການຝຶກສອນ (ຊີ້ນຳການສຳຫຼວດຕົນເອງ ແລະ ການໃຫ້ຄຳແນະນຳເພື່ອການປັບປຸງແກ້ໄຂໃຫ້ດີຂຶ້ນ) ການຮຽນຮູ້ຜ່ານການສະທ້ອນຄືນ (ຈັດຕັ້ງສຳມະນາແລກປ່ຽນອົງຄວາມຮູ ແລະ ອຳນວຍຄວາມສະດວກໃຫ້ແກ່ການຮຽນຮູ້) ການໄກ່ເກ່ຍຂໍ້ຂັດແຍ່ງ (ດວຍການປຶກສາຫາລືຫາທາງອອກ ແລະ ຊວຍໃຫ້ບັນລຸຂໍ້ຕົກລົງເຫັນດີຮ່ວມກັນ ການເຈລະຈາຕໍ່ລອງ (ຊວຍໃຫ້ບັນລຸຂໍ້ຕົກລົງແບບເປັນທີ່ພໍໃຈ ຫຼື ການປາໄມ່ປາມອມກັນລະຫວ່າງບຸກຄົນ ຫຼື ກຸ່ມ ແລະ ພັດທະນາຂີດຄວາມສາມາດໃນການຕໍ່ລອງລະຫວ່າງບັນດາຜູ້ທີ່ມີສ່ວນກ່ຽວຂ້ອງ ແລະ ໄດ້ຮັບຜົນປະໂຫຍດ) ການເປັນຄົນກາງ (ສ້າງສາຍພົວພັນກັບຫຼາຍຝ່າຍລະຫວ່າງບັນດາຜູ້ດຳເນີນການໃນລະດັບວິກວ່າງ ການສ້າງເຄືອຂ່າຍ ແລະ ການພັດທະນາການເປັນຄູ່ຮ່ວມງານ ການສະໜັບສະໜຸນເພື່ອໃຫ້ມີການປ່ຽນແປງທາງດ້ານນະໂຍບາຍ ແລະ ສະຖາບັນ ຄວາມສາມາດໃນການເປັນຜູ້ນຳເພື່ອສ້າງແຮງບັນດານໃຈ ແລະມີການກະຕຸ້ນ ການຄຸ້ມຄອງຊັບພະຍາກອນຕ່າງໆ (ຊັບພະຍາກອນມະນຸດ ແລະ ການເງິນ) ການຄິດໃນຮູບແບບທີ່ມີຄວາມສ້າງສັນ ແລະ ມີແຜນການ ການແກ້ໄຂບັນຫາ ການສະທ້ອນຄືນຕົນເອງ ແລະ ການຮຽນຮູ້ຈາກຄວາມຜິດພາດ ການມີແນວຄິດກ່ຽວກັບການໃຫ້ບໍລິການ ການມີຄວາມໂປ່ງໃສຕໍ່ໜ້າທີ່ ແລະຄວາມຮັບຜິດຊອບ ການມີຄວາມຮັບຜິດຊອບ ການອຸທິຕົນ/ຄວາມມຸ້ງໝັ້ນ ການເຮັດວຽກຮ່ວມກັບບັນດາທີມງານຢູ່ໃນຫຼາຍອົງການຈັດຕັ້ງ ແລະ ຫຼາຍຂະແໜງການ ການເຮັດວຽກຮ່ວມກັບແມ່ຍິງຊົນນະບົດ ແລະ ການນຳໃຊ້ກົນລະຍຸດວິທີການສົ່ງເສີມທີ່ໃຫ້ຄວາມສຳຄັນຕໍ່ ເລື່ອງບົດບາດຍິງ-ຊາຍ



ເຂົ້າໃຈດີ ກ່ຽວກັບບັນດາທາງເລືອກທາງດ້ານເຕັກໂນໂລຊີທີ່ເໝາະສົມ, ວິທີການເຂົ້າເຖິງ ແລະ ວິເຄາະການຕະຫຼາດ, ມາດຕະຖານ ແລະ ລະບຽບການຕ່າງໆ. ພະນັກງານທີ່ມີຂີດຄວາມສາມາດໃນການຄຸ້ມຄອງ ຂະບວນການທາງດ້ານການຈັດຕັ້ງ ແລະທາງສັງຄົມ ເພື່ອອຳນວຍຄວາມ ສະດວກໃຫ້ແກ່ການປະດິດສ້າງສິ່ງໃໝ່ງນັ້ນ ແມ່ນມີຄວາມສຳຄັນເຊັ່ນກັນ (ຕາຕະລາງທີ 1).

ບັນດາຂີດຄວາມສາມາດທີ່ໄດ້ລະບຸໄວ້ໃນຕາຕະລາງ 1 ຈະບໍ່ສາມາດພົບ ເຫັນໄດ້ ຫຼື ຖືກພັດທະນາຂຶ້ນນຳບຸກຄົນໃດໜຶ່ງ ຫຼື ແມ່ນກະທັ້ງອົງການ ຈັດຕັ້ງໃດໜຶ່ງ. ນອກຈາກນັ້ນແລ້ວ ຂີດຄວາມສາມາດທັງໝົດຕ່າງໆເຫຼົ່ານີ້ ກໍບໍ່ມີຄວາມຈຳເປັນທີ່ຈະຕ້ອງມີຢູ່ໃນທຸກໆສະຖານະການ. ເພາະສະນັ້ນ, ສຳນັກງານສົ່ງເສີມທີ່ມີຄວາມຫຼາກຫຼາຍທາງດ້ານສາຍອາຊີບ, ມີທີມງານທີ່ຫຼາກຫຼາຍ ແລະເປັນຄູ່ຮ່ວມງານກັບບັນດາອົງການຈັດຕັ້ງຢູ່ໃນ ລະບົບການປະດິດສ້າງສິ່ງໃໝ່ງທາງດ້ານກະສິກຳ ຈຶ່ງມີຄວາມສຳຄັນຫຼາຍ. ການພັດທະນາຂີດຄວາມສາມາດໃນລະດັບສ່ວນບຸກຄົນ ຈຶ່ງຈຳເປັນຕ້ອງ ໄດ້ມີການຈັດຕັ້ງຄືດັ່ງຕໍ່ໄປນີ້:

ການປະກອບພະນັກງານ: ວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳ ປຶກສາດ້ານກະສິກຳ ຈຳເປັນຕ້ອງມີການປະສົມປະສານເອົາບັນດາຜູ້ທີ່ມີ ຄວາມຮູ້ທົ່ວໄປ ແລະ ຜູ້ທີ່ມີຄວາມຊ່ຽວຊານສະເພາະດ້ານ ທີ່ມີບົດຮຽນ ແຕກຕ່າງກັນມາເຮັດວຽກຮ່ວມກັນ. ຕົວຢ່າງເຊັ່ນ: ຢູ່ໃນບັນດາອົງການ ຈັດຕັ້ງຂະໜາດໃຫຍ່ (ເຊັ່ນ: ພາກລັດ, ພາກເອກະຊົນທີ່ເຮັດທຸລະກິດ-ກະສິກຳ, ອົງການຈັດຕັ້ງສາກົນ ແລະ ອື່ນໆ) ບັນດາລູກຈ້າງທີ່ຢູ່ຂັ້ນ ຕ່ຳສຸດໃນລະບົບການເຮັດວຽກ (ຜູ້ທີ່ພົວພັນໂດຍກົງກັບລູກຄ້າ) ສາມາດ ເປັນຜູ້ທີ່ມີຄວາມຮູ້ທົ່ວໄປ (ຜູ້ທີ່ມີຄວາມເຂົ້າໃຈໂດຍລວມກ່ຽວກັບເຕັກໂນ ໂລຊີທາງດ້ານກະສິກຳ ແລະ ມີທັກສະຕ່າງໆກ່ຽວກັບການປະເມີນຄວາມ ຕ້ອງການ, ການສື່ສານປະຊາສຳພັນ, ການຝຶກອົບຮົມ, ການອຳນວຍ ຄວາມສະດວກ, ການສ້າງເຄືອຂ່າຍ ແລະ ຮູບການທີ່ໃຫ້ຄວາມສຳຄັນດ້ານ ບົດບາດຍິງ-ຊາຍ).ຄວາມສາມາດຕ່າງໆເຫຼົ່ານີ້ ຈຳເປັນຕ້ອງໄດ້ຖືກປະສານ ສົມທົບເຂົ້າໄວ້ໃນຫຼັກສູດການຝຶກອົບຮົມຂອງເຂົາເຈົ້າ. ແຕ່ເຖິງຢ່າງໃດ ກໍຕາມ ພວກເຂົາກໍຄວນທີ່ຈະໄດ້ຮັບການຊ່ວຍເຫຼືອຈາກທີມງານຂອງຜູ້ຊ່ຽວ ຊານສະເພາະດ້ານທີ່ມີຄວາມຊຳນານງານໃນດ້ານຕ່າງໆຂອງການຜະລິດ, ທະລຸກິດແລະການຕະຫຼາດ, ການສ້າງຕົ້ນທຶນທາງສັງຄົມ, ການຄຸ້ມຄອງ ສາຍພົວພັນ, ການສະໜັບສະໜຸນນະໂຍບາຍ, ການຍ່ຽມຢ້ຽ ແລະ ການປະເມີນຜົນ, ການພັດທະນາຂີດຄວາມສາມາດ, ການແກ້ໄຂບັນຫາ, ການເຊື່ອມໂຍງກັບບັນດາອົງການ ຈັດຕັ້ງຕ່າງໆຢູ່ໃນຂັ້ນກາງ ແລະ ຂັ້ນທີ່ສູງກວ່ານັ້ນ. ຢູ່ໃນຫຼາຍໆວັດທະນາທຳ ແມ່ນບໍ່ເປັນທີ່ຍອມຮັບ ການໃຫ້ພະນັກງານສົ່ງເສີມທີ່ເປັນຜູ້ຊາຍມາເຮັດວຽກສົ່ງ ເສີມນຳແມ່ຍິງຢູ່ໃນບ້ານ. ໃນກໍລະນີດັ່ງກ່າວ, ມັນກໍມີຄວາມຈຳເປັນ ທີ່ຈະຕ້ອງໄດ້ເພີ່ມຈຳນວນທີ່ປຶກສາວຽກງານສົ່ງເສີມທີ່ເປັນແມ່ຍິງ ແລະ ເສີມສ້າງຂີດຄວາມສາມາດຂອງເຂົາເຈົ້າ[35] ໃຫ້ເຂັ້ມແຂງ. ຕາມການປະເມີນກັນ ມີພຽງແຕ່ 15 ສ່ວນຮ້ອຍເທົ່ານັ້ນໃນທົ່ວໂລກ ທີ່ມີພະນັກງານສົ່ງເສີມເປັນຜູ້ຍິງ ແລະ ມີພຽງ 5 ສ່ວນຮ້ອຍເທົ່ານັ້ນ ທີ່ເປັນຊາວກະສິກອນຍິງ ທີ່ໄດ້ຮັບຜົນປະໂຫຍດຈາກວຽກງານ ສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ[38].

ບັນດາຜູ້ຊ່ຽວຊານສະເພາະດ້ານແມ່ນສາມາດຈ້າງເອົາ ມາເຮັດວຽກເປັນບາງເວລາກໍໄດ້ໂດຍຂຶ້ນຢູ່ກັບສະຖານ ະການ. ໃນບາງອົງການຈັດຕັ້ງເຊັ່ນບໍລິສັດທີ່ປຶກສາ ຈະມີໂຄງຮ່າງການຈັດຕັ້ງເຊິ່ງສອນຫຼາຍປະກອບ ດ້ວຍຊ່ຽວຊານທີ່ມີຄວາມຮູ້ສະເພາະດ້ານ ທີ່ສາມາດແກ້ໄຂບັນຫາ ຫຼື ໃຫ້ຄຳແນະນຳ ເລື່ອງເຕັກນິກ ແລະ ການບໍລິຫານຈັດການ ສະເພາະດ້ານ. ເຊັ່ນດຽວກັນກັບໃນກໍລະນີ ທີ່ໂຄງການໃດໜຶ່ງ ຫາກກຳລັງດຳເນີນການ ເຊື່ອມໂຍງຊາວກະສິກອນໃຫ້ເຂົ້າກັບຕະ ຫຼາດທີ່ມີມູນຄ່າສູງ, ມັນກໍຈຳເປັນຕ້ອງມີຊ່ຽວ ຊານສະເພາະດ້ານກ່ຽວກັບການພັດທະນາຕ່ອງ ໂສ້ມູນຄ່າ. ປະເດັນກໍຄື ຕ້ອງເບິ່ງພາລະບົດບາດຂອງ ໂຄງການ/ອົງການຈັດຕັ້ງ ແລະ ບັນດາສິ່ງທ້າທາຍຕ່າງໆຢູ່ໃນສະ ພາບເງື່ອນໄຂນັ້ນ ເພື່ອເປັນສິ່ງກຳນົດຄວາມຕ້ອງການລະຫວ່າງ ຜູ້ທີ່ມີຄວາມຮູ້ທົ່ວໄປ ແລະ ຜູ້ທີ່ມີຄວາມຮູ້ສະເພາະດ້ານ ໃນສັດສ່ວນທີ່ເໝາະສົມ.

ການກຳນົດເປົ້າໝາຍໃນການພັດທະນາຂີດຄວາມສາມາດ ໃຫ້ເຂົ້າກັບໜ້າວຽກ: ພາຍໃນໂຄງຮ່າງການຈັດຕັ້ງຂອງອົງກອນ ໃດໜຶ່ງ ຂີດຄວາມສາມາດທີ່ຕ້ອງການໃນຂັ້ນຕ່າງໆ ບໍ່ວ່າຈະເປັນ ທາງດ້ານເຕັກນິກ ຫຼື ທາງດ້ານການດຳເນີນງານແມ່ນແຕກຕ່າງ ກັນໄປ ແລະ ຂຶ້ນກັບໜ້າວຽກທີ່ຮັບຜິດຊອບພ້ອມທັງຄຸນລັກສະນະ ສະເພາະດ້ານ (ເຊັ່ນ: ຂໍ້ຈຳກັດ, ທ່າແຮງຕ່າງໆ) ຂອງສະຖານທີ່ ທີ່ອົງກອນນັ້ນກຳລັງດຳເນີນງານຢູ່.ຕົວຢ່າງເຊັ່ນ: ສຳລັບວຽກງານດ້ານ ການຄຸ້ມຄອງ, ການເຮັດວຽກນຳຄູ່ຮ່ວມງານ, ການອຳນວຍຄວາມສະດວກ

ແລະ ການໃຫ້ການສະໜັບສະໜູນທາງດ້ານນະໂຍບາຍ ແມ່ນຕ້ອງການພະນັກງານທີ່ເຮັດວຽກຢູ່ໃນລະດັບຕ່າງ ແລະ ລະດັບຜູ້ບໍລິຫານອາວຸໂສ ໃນການບໍລິການສິ່ງເສີມຊຸມຊົນຫຼາຍກວ່າ ພະນັກງານທີ່ເຮັດວຽກຢູ່ພາກສະໜາມ. ເຊັ່ນດຽວກັນ ທ່າມະຊາດຂອງລະບົບນະເວດວິທະຍາ, ລະບົບການຜະລິດກະສິກຳ ຫຼື ວິສາຫະກິດ (ສິນຄ້າ, ຂະໜາດພື້ນທີ່ການຜະລິດ ແລະ ການບໍລິຫານຈັດການ, ສະຖານະພາບທາງດ້ານເສດຖະກິດ-ສັງຄົມ) ກໍເປັນສິ່ງກຳນົດວ່າ ຄວນຈະເສີມສ້າງຂີດຄວາມສາມາດທາງດ້ານເຕັກນິກ ແລະ ການດຳເນີນງານທາງດ້ານໃດ. ໃນລັກສະນະທີ່ຄ້າຍຄືກັນ, ວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ (EAS) ທີ່ມີຄວາມຊ່ຽວຊານທາງດ້ານການສະໜັບສະໜູນທາງດ້ານສື່ຕ່າງໆ ຢູ່ໃນຂະແໜງການກະສິກຳ ອາດຕ້ອງການໃຫ້ມີຂີດຄວາມສາມາດໃນການນຳໃຊ້ສື່ ແລະ ການສື່ສານປະຊາສຳພັນໃຫ້ຄົນຕ່າງໆໄດ້ຮັບຮູ້ພຽງເທົ່ານັ້ນກໍ່ພໍ.

3.2 ລະດັບອົງການຈັດຕັ້ງ

ຂີດຄວາມສາມາດໃນລະດັບອົງການຈັດຕັ້ງລວມມີ ອົງການຈັດຕັ້ງສ່ວນບຸກຄົນ, ລະບົບຕ່າງໆ, ຂັ້ນຕອນ ແລະ ກອບວຽກສະຖາບັນການຈັດຕັ້ງຂອງອົງກອນ ເຊິ່ງໂດຍພື້ນຖານແລ້ວ ເປັນບ່ອນອີງໃຫ້ອົງກອນໃດໜຶ່ງດຳເນີນການ ແລະ ໃຫ້ການບໍລິການອີງຕາມຄວາມຕ້ອງການຂອງແຕ່ລະອົງປະກອບ ດ້ວຍການສ້າງຕົ້ນທຶນທາງດ້ານຂີດຄວາມສາມາດໃຫ້ບຸກຄົນທີ່ເປັນກຳລັງແຮງງານຂອງອົງກອນ[37]. ສະຖາບັນການສ້າງຕັ້ງ ແລະ ບັນດາສາຍພົວພັນທາງດ້ານອົງການຈັດຕັ້ງໃນວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ ເປັນໂຕກຳນົດຕົ້ນຕໍ ລະດັບຂີດຄວາມສາມາດດັ່ງກ່າວ ເພາະສະນັ້ນ ຈຶ່ງຈຳເປັນຕ້ອງມີສະຖາບັນທີ່ຖືກຕ້ອງ (ກົດຈະວັດປະຈຳວັນ, ອຸປະນິໄສ, ການປະຕິບັດຕົວຈິງ, ກົດລະບຽບ ແລະ ກົດໝາຍ) ເຊິ່ງສະໜັບສະໜຸນການເຮັດວຽກດ້ວຍກັນ, ການຮຽນຮູ້ ແລະ ການແລກປ່ຽນຄວາມຮູ້.

ເມື່ອບັນດາສະຖາບັນຕ່າງໆ ເປັນຜູ້ສ້າງຂະບວນການປະດິດຄິດສ້າງສິ່ງໃໝ່ໆໃຫ້ເປັນຮູບເປັນຮ່າງຂຶ້ນມາໄດ, ການປ່ຽນແປງທາງດ້ານສະຖາບັນຈຶ່ງເປັນອົງປະກອບໜຶ່ງທີ່ສຳຄັນໃນການພັດທະນາຂີດຄວາມສາມາດ. 'ສະຖາບັນ' ທີ່ມີຢູ່ໃນປະຈຸບັນຢູ່ໃນໜ່ວຍງານສິ່ງເສີມຂອງພາກລັດອາດຈະລວມມີ: ລະບົບການຈັດຂັ້ນທີ່ຂອບຂ້າງຊື່ຕົງ ແລະ ມີຮູບແບບການວາງແຜນຈາກຂັ້ນສູນກາງ; ມີການນຳໃຊ້ຮູບແບບດັ່ງເດີມໃນການປະເມີນການດຳເນີນງານຕາມການນຳໃຊ້ເຕັກໂນໂລຊີ; ມີປະຫວັດໃນການໃຫ້ລາງວັນຕໍ່ຜົນສຳເລັດເທົ່ານັ້ນ ດັ່ງນັ້ນຈຶ່ງມີການລະເລີຍຕໍ່ການລາຍງານ ແລະ ການວິເຄາະເຫດຜົນຂອງຄວາມລົ້ມເຫຼວ; ມີປະຫວັດຂອງການເຮັດວຽກຢ່າງເປັນເອກະລາດ; ບໍ່ຄ່ອຍມີຄວາມເຊື່ອໝັ້ນໃນອົງການຈັດຕັ້ງອື່ນໆ; ແລະ ຄວາມຮັບຜິດຊອບແບບດັ່ງເດີມທີ່ມຸ້ງເນັ້ນໃສ່ແຕ່ການນຳໃຊ້ຊັບພະຍາກອນຫຼາຍກວ່າການມຸ້ງເນັ້ນໃສ່ເພື່ອເຮັດໃຫ້ບັນລຸຜົນໄດ້ຮັບ ແລະ ຄວາມເພິ່ງພໍໃຈຂອງລູກຄ້າ[38].

ບັນດາສະຖາບັນເຫຼົ່ານີ້ ຈຳເປັນຕ້ອງມີການປ່ຽນແປງຖ້າຕ້ອງການໃຫ້ວຽກງານສິ່ງເສີມຂອງພາກລັດຂະຫຍາຍບົດບາດອອກໄປສູ່ວົງກວ້າງຫຼາຍຂຶ້ນກວ່ານີ້ຕື່ມອີກ. ນອກຈາກນັ້ນແລ້ວ ຍັງມີຄວາມຈຳເປັນທີ່ຈະຕ້ອງໄດ້ໃຈ້ແຍກ ແລະ ຄົ້ນຫາບັນດາອົງການຈັດຕັ້ງຂອງວຽກງານສິ່ງເສີມ ແລະ ບໍລິການໃຫ້ຄຳປຶກສາດ້ານກະສິກຳ ແລະ ບັນດາຜູ້ດຳເນີນການອື່ນໆ ຢູ່ໃນລະບົບການປະດິດຄິດສ້າງສິ່ງໃໝ່ໆທາງດ້ານກະສິກຳ ທີ່ມີນິໃສ ແລະ ການຈັດຕັ້ງປະຕິບັດທີ່ຄ້າຍຄືກັນ ທີ່ສ້າງຂໍ້ຈຳກັດໃຫ້ແກ່ການເຮັດວຽກຢ່າງມີປະສິດຕິຜົນນຳບັນດາຜູ້ດຳເນີນການອື່ນໆຢູ່ໃນລະດັບຕ່າງໆ.

ເພື່ອໃຫ້ສາມາດປະຕິບັດຕາມບົດບາດ ແລະ ບັນດາໜ້າທີ່ຮັບຜິດຊອບທີ່ໄດ້ຄາດການໄວ້ຢູ່ພາຍໃຕ້ລະບົບການປະດິດຄິດສ້າງສິ່ງໃໝ່ໆທາງດ້ານກະສິກຳໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບນັ້ນ, ວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ-EAS ກໍຈຳເປັນທີ່ຈະຕ້ອງໄດ້ມີຂີດຄວາມສາມາດດັ່ງຕໍ່ໄປນີ້ຢູ່ໃນລະດັບອົງການຈັດຕັ້ງ (ຕາຕະລາງທີ 2).

ຖ້າບັນດາອົງການຈັດຕັ້ງຕ່າງໆ ຫາກບໍ່ໄດ້ປະຕິບັດຢ່າງເອົາຈິງເອົາຈັງ ກ່ຽວກັບພາລະກິດ, ການບໍລິການ, ວັດທະນາທຳ ແລະ ຂັ້ນຕອນດຳເນີນງານຂອງຕົນ ແບບເປັນປົກກະຕິແລ້ວ ມັນກໍຈະສົ່ງຜົນກະທົບຕໍ່ຄວາມລົ້ມເຫຼວໃນການດຳເນີນງານ, ຖືກລົ້ມລະລາຍ ຫຼື ຖືກຍົກເລີກ[39]. ຫຼາຍອົງການຈັດຕັ້ງຍັງບໍ່ທັນມີວັດທະນາທຳແຫ່ງການຮຽນຮູ້ເທື່ອ. ການສ້າງຖານທີ່ເປັນເວທີສົນທະນາແລກປ່ຽນກ່ຽວກັບຜົນສຳເລັດ, ຄວາມຜິດພາດ, ຄວາມລົ້ມເຫຼວ ແລະ ການທົບທວນຄືນສິ່ງຕ່າງໆເຫຼົ່ານີ້ ແມ່ນມີຄວາມສຳຄັນ. ສິ່ງຄວນທີ່ຈະມີສະຖານທີ່ເພື່ອດຳເນີນການທົດລອງກົນລະຍຸດຫຼືວິທີການແບບໃໝ່ຕ່າງໆ. ວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ-EAS ຈຳເປັນຕ້ອງມີການເບິ່ງກ້ວາງມອງໄກ ແລະ ສ້າງແຮງບັນດານໃຈຕໍ່ການເປັນຜູ້ນຳ ເພື່ອໃຫ້ມີການຮຽນຮູ້ຈາກປະສົບການໄດ ຢ່າງຕໍ່ເນື່ອງ ແລະ ສ້າງວັດທະນາທຳຂອງການປະຕິບັດທີ່ດີເລີດ. ທ່ານ ສະວາຊັນ ແລະ ຣາຈາລາຕີ (2010) ໄດ້ພັດທະນາເຄື່ອງມືການສຳຫຼວດແບບງ່າຍດາຍຂຶ້ນມາ ເພື່ອນຳໃຊ້ເກັບກຳຂໍ້ມູນ ແລະ ຊາວສານໃນດ້ານຕ່າງໆເຫຼົ່ານັ້ນຈາກບັນດາຜູ້ສະໜອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ[40].

3.3 ລະດັບສະພາບແວດລ້ອມທີ່ເອື້ອອຳນວຍ

ສະພາບແວດລ້ອມທີ່ເອື້ອອຳນວຍແມ່ນກ່ຽວຂ້ອງກັບຄວາມມຸ້ງໝັ້ນ ແລະ ວິໃສທັດທາງດ້ານການເມືອງ; ນະໂຍບາຍ, ນິຕິກຳ, ກອບແຜນວຽກທາງດ້ານເສດຖະກິດ, ຂັ້ນຕອນ ແລະ ການຈັດສັນງົບປະມານແຫ່ງຊາດໃຫ ຂະແໜງການຕ່າງໆຂອງລັດ, ການປົກຄອງ ແລະ ໂຄງສ້າງທາງດ້ານອຳນາດ, ບັນດາສິ່ງຈູງໃຈ ແລະ ກົດເກນທາງສັງຄົມທີ່ອຳນວຍຄວາມສະດວກ (ຫຼື ເປັນສິ່ງກົດຂວາງ) ຕໍ່ການພັດທະນາຂອງອົງການຈັດຕັ້ງໃດໜຶ່ງ[41]. ການດຳເນີນວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ-EAS ແມ່ນຂຶ້ນກັບສະພາບເງື່ອນໄຂຕ່າງໆເຫຼົ່ານີ້ ທີ່ເກີດຂຶ້ນຢູ່ໃນສະພາບແວດລ້ອມແບບຕາຍຕົວ. ຕົວຢ່າງ: ນະໂຍບາຍທາງດ້ານກະສິກຳທີ່ບໍ່ດີ ຈະສ້າງໃຫ້ເກີດມີສະພາບແວດລ້ອມ ທີ່ບໍ່ເອື້ອອຳນວຍ ແລະ ສິ່ງຜົນກະທົບຫຼາຍສິ່ງຄວນຕ່ໍບັນດາແຜນງານການສິ່ງເສີມຕ່າງໆ.

ການມີກອບແຜນວຽກທາງດ້ານລະບຽບການຄຸ້ມຄອງທີ່ເໝາະສົມ ແມ່ນມີຄວາມສຳຄັນຢູ່ໃນລະບົບການສິ່ງເສີມທີ່ເປັນຂະບວນການເພື່ອຮັບປະກັນການແຂ່ງຂັນທີ່ຍຸດຕິທຳ, ຈັດໃຫ້ມີບ່ອນແລກປ່ຽນ ແລະ ເຮັດໃຫ້ມີ



ການປະສານສົມທົບລະຫວ່າງບັນດາຜູ້ສະໜອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳຕ່າງໆ. ບາງສະພາບເງື່ອນໄຂຈຳນວນໜຶ່ງຢູ່ໃນສະພາບແວດລ້ອມທີ່ເອື້ອອຳນວຍແມ່ນລວມມີດັ່ງນີ້:

- ນະໂຍບາຍເສດຖະກິດມະຫາພາກ, ບັນດາສິ່ງຈູງໃຈຕ່າງໆ ເພື່ອເພີ່ມການຜະລິດ, ການປະຕິຮູບການຕະຫຼາດ ແລະ ຊອງທາງເຂົ້າເຖິງສິນເຊື່ອ.
- ຄວາມມຸ່ງໝັ້ນທາງດ້ານການເມືອງຕໍ່ການພັດທະນາກະສິກຳ ແລະ ການໃຫ້ຄວາມສຳຄັນຕໍ່ວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ-EAS
- ການກະຈາຍອຳນາດທາງດ້ານການເມືອງ ແລະ ການເງິນລົງສູ່ທ້ອງຖິ່ນ ພ້ອມທັງກຳນົດພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງອຳນາດການປົກຄອງທ້ອງຖິ່ນຢູ່ໃນການພັດທະນາກະສິກຳ ລວມທັງການສະໜັບສະໜຸນຕໍ່ວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ-EAS
- ກອບແຜນວຽກທາງດ້ານນະໂຍບາຍ ຫຼື ນະໂຍບາຍສຳລັບວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ ແລະ ບັນດາແນວທາງຕ່າງໆ ເຊິ່ງນະໂຍບາຍດັ່ງກ່າວສ້າງຮູບແບບການປະຕິບັດຂອງອົງການຈັດຕັ້ງຕ່າງໆໃຫ້ເປັນຮູບເປັນຮ່າງຂຶ້ນຢູ່ໃນຂະແໜງການ ແລະ ໃນລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ-AIS
- ຂີດຄວາມສາມາດ ແລະ ຄວາມພ້ອມພຽງຂອງບັນດາຜູ້ດຳເນີນການອື່ນໆຢູ່ໃນລະບົບການປະດິດຄິດສ້າງສິ່ງໃໝ່ໆທາງດ້ານກະສິກຳ-AIS (ການຄົ້ນຄ້ວາວິໃຈ, ຂະແໜງສຶກສາ, ພາກທຸລະກິດເອກະຊົນ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດ) ເພື່ອແລກປ່ຽນຊັບພະຍາກອນ, ຄວາມຊຳນານງານ ແລະ ມີສ່ວນຮ່ວມຢູ່ໃນການດຳເນີນວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ ແລະ ຊາວກະສິກອນ/ອົງການຈັດຕັ້ງຂອງເຂົາເຈົ້າ.
- ສະຖາບັນທີ່ເອື້ອອຳນວຍ ແລະ ກະຕຸກຊຸກຍູ້ການປະສານງານເພື່ອແກ້ໄຂບັນຫາລະຫວ່າງຜູ້ສະໜອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ-EAS, ລະຫວ່າງພວກເຂົາເຈົ້າເອງ ແລະ ອົງການຈັດຕັ້ງອື່ນໆຢູ່ໃນລະບົບການປະດິດສ້າງສິ່ງໃໝ່ໆ ທາງດ້ານກະສິກຳ-AIS ພ້ອມກວ່ານັ້ນສ້າງຂໍ້ຈຳກັດໃຫ້ບັນດາອົງການຈັດຕັ້ງຕ່າງໆ ດ້ວຍການໃຫ້ເຮັດຕາມພາລະບົດບາດທີ່ໄດ້ຮັບການມອບໝາຍເປັນທາງການ.
- ຂີດຄວາມສາມາດໃນຂະບວນການສ້າງນະໂຍບາຍເພື່ອດັດປັບນະໂຍບາຍຕ່າງໆເຫຼົ່ານັ້ນບົນພື້ນຖານຂອງບົດຮຽນທີ່ຫອດຖອນໄດ້ຈາກການຈັດຕັ້ງປະຕິບັດນະໂຍບາຍ ແລະ ເພື່ອກຳນົດນະໂຍບາຍໃນຂະບວນການທີ່ມີພາກສ່ວນທີ່ກ່ຽວຂ້ອງ ແລະ ໄດ້ຮັບຜົນປະໂຫຍດຫຼາຍຝ່າຍເຂົ້າຮ່ວມທັງໝົດ.
- ການຫ້າງຫາກະກຽມດ້ານການເງິນ ທີ່ກະຕຸ້ນການຫັນທຶດໃສ່ລູກຄ້າ, ການຕອບສະໜອງຄວາມຕ້ອງການ ແລະ ການປະສານສົມທົບລະຫວ່າງບັນດາຜູ້ສະໜອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ-EAS.
- ລະດັບຂອງຄວາມຮູ້ໜັງສື ເຊັ່ນດຽວກັນກັບລະດັບການສຶກສາຢູ່ໃນປະເທດ/ແຂວງ/ທ້ອງຖິ່ນ
- ໂຄງລ່າງພື້ນຖານ (ທະໜົນຫົນທາງ, ການໂທລະຄົມມະນາຄົມ, ການຕະຫຼາດ ແລະ ອື່ນໆ)
- ການມີ ແລະ ການເຂົ້າເຖິງການບໍລິການທາງດ້ານການເງິນ

ຕາຕະລາງ 2: ຂີດຄວາມສາມາດທີ່ຕ້ອງການໃນລະດັບອົງການຈັດຕັ້ງໃນວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳ-EAS

ຂົງເຂດວຽກງານໃນວົງກ້ວ້າງ	ຂົງເຂດວຽກງານສະເພາະດ້ານເພື່ອສະໜັບສະໜຸນການສ້າງຂີດຄວາມສາມາດໃຫ້ມີຄວາມເຂັ້ມແຂງ
ໜ້າທີ່ການຄຸ້ມຄອງດ້ານຍຸດທະສາດ	ຄວາມເປັນຜູ້ນຳ (ການສ້າງແຮງບັນດານໃຈ ແລະ ການກະຕຸກຊຸກຍູ້), ການສ້າງວິໃສທັດ, ການຄຸ້ມຄອງ ການປ່ຽນແປງ, ຂີດຄວາມສາມາດເພື່ອຕອບໂຕ້ກັບເຫດການສຸກເສີນ, ສາຍພົວພັນທາງດ້ານນະໂຍບາຍ, ການສະໜັບສະໜຸນ
ໂຄງຮ່າງການຈັດຕັ້ງ	ຄວາມສາມາດເພື່ອສ້າງໂຄງຮ່າງການຈັດຕັ້ງອຸອກເປັນບັນດາໜ່ວຍງານຕ່າງໆໃນການຈັດລະບົບຕາມລຳດັບຂັ້ນ ແລະ ຮັບປະກັນໃຫ້ໜວຍງານຕາງໆມີຄວາມກ່ຽວພັນກັນ ແລະ ມີຄວາມຍືດຍຸ່ນ
ສາຍພົວພັນ	ກຳນົດສິດ, ພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບຢ່າງຊັດເຈນ, ພ້ອມທັງຊັບພະຍາກອນຕ່າງໆຢູ່ ໃນລະຫວ່າງໜວຍງານຕາງໆພາຍໃນອົງການຈັດຕັ້ງໜຶ່ງ ແລະ ທົ່ວທັງໝົດຽອົງການຈັດຕັ້ງຕາງໆທີ່ຢູ່ພາຍໃນລະບົບການປະດິດສາງສິ່ງໃໝ່ໆທາງດານກະສິກຳ; ການສາງຄວາມເຊື່ອຖື; ການສາງເວລາ ແລະ ສະຖານທີ່ເພື່ອໃຫ້ມີການຮຽນຮູ ຊຶ່ງກັນ ແລະ ກັນ
ຂັ້ນຕອນ, ລະບົບ ແລະ ລະບຽບການ	ການວາງແຜນ, ການຈັດຕັ້ງ, ການນຳພາ ແລະ ລະບົບການຄວບຄຸມ ທີ່ນຳໃຊ້ໃນການສື່ສານພາຍໃນ, ການປະເມີນການດຳເນີນງານ, ການພັດທະນາຊັບພະຍາກອນມະນຸດ, ການຄຸ້ມຄອງທາງດ້ານການເງິນ, ການຮຽນຮູ, ການຕິດຕາມກວດກາ ແລະ ການປະເມີນຜົນ, ຮັບປະກັນຄວາມຮັບຜິດຊອບຕໍ່ຜູ້ທີ່ມີສວນກ່ຽວຂອງ ແລະ ໄດ້ຮັບຜົນປະໂຫຍດຕາງໆ ແລະຮູບແບບຕາງໆນຳໃຊ້ເພື່ອດຳເນີນວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ
ຄຸນຄ່າ, ສິ່ງດົງດູດໃຈ/ລາງວັນ	ຄວາມເປັນໜຶ່ງດຽວ, ຄວາມຮູ້ວິທະຍາສາດຂັ້ນພື້ນຖານ, ການເຂົ້າເຖິງທຸກລະດັບ, ການເປັນຄູ່ຮ່ວມງານ, ການຮຽນຮູ, ກົນໄກຕາງໆເພື່ອໃຫ້ລາງວັນ ແລະ ສິ່ງຈູງໃຈສຳລັບການດຳເນີນງານທີ່ດີ, ມາດຕະຖານຕາງໆທີ່ສາມາດເປັນທີ່ຍອມຮັບໄດ ເຊິ່ງຄຸ້ມຄອງພຶດຕິກຳຂອງບຸກຄົນຢູ່ໃນອົງກອນ, ສາງໂອກາດເພື່ອໃຫຄຳແນະນຳ ແລະ ການທົບທວນຄືນ, ການມີຊື່ສຽງ/ຄວາມນັບໜາຖືຕາ
ຊັບພະຍາກອນມະ ນຸດ	ຄວາມສາມາດທີ່ຈະສະໜອງຈຳນວນພະນັກງານທີ່ພຽງພໍ ແລະ ການເຂົ້າເຖິງບັນດາຜູ້ຊ່ຽວຊານຢູ່ໃນອົງການຈັດຕັ້ງອື່ນໆ ເພື່ອເປັນກຳລັງເສີມ ແລະ ເພີ່ມເຂົ້າຕື່ມໃສ່ຄວາມຊຳນານງານຂອງຕົນ; ການມີຂໍ້ກຳນົດໜ້າວຽກທີ່ຊັດເຈນ, ບົດບາດ ແລະ ໜ້າທີ່ມີການກຳນົດທີ່ຊັດເຈນ, ການພັດທະນາອາຊີບ ແລະ ສິ່ງຈູງໃຈຕ່າງໆ, ການເຂົ້າເຖິງຄວາມຮູ້ໃໝ, ກົນໄກຕາງໆ ເພື່ອບຸກລະດົມ, ໃຫການອົບຮົມ ແລະ ຮັກສາຊັບພະຍາ ກອນໄວ
ຄວາມສາມາດທາງດ້ານການເງິນ	ຄວາມສາມາດທີ່ຈະສະໜອງງົບປະມານທີ່ພຽງພໍສຳລັບເປັນເງິນເດືອນພະນັກງານ, ລາຍຈ່າຍອື່ນໆສຳລັບ ການດຳເນີນງານ ແລະ ການລົງທຶນ, ເພື່ອພັດທະນາ ແລະ ຈັດຕັ້ງປະຕິບັດແຜນງານທີ່ສ້າງຜົນປະໂຫຍດໃຫແກ່ບັນດາຜູ້ທີ່ມີສວນກ່ຽວຂອງ; ຫຼື ຮູບແບບການດຳເນີນທຸລະກິດວຽກງານທີ່ຍືນຍົງທີ່ຮັກສາໃຫອົງກອນດຳລົງຢູ່ໃນວຽກງານຕໍ່ໄປ
ຊັບພະຍາກອນຄວາມຮູ້ ແລະ ຂໍ້ມູນຂາວສານ	ການຄຸ້ມຄອງຄວາມຮູ້ແມ່ນລວມມີທັງການຄຸ້ມຄອງສາຍພົວພັນເພື່ອເຮັດໃຫ້ມີຄວາມຮູ້ ແລະ ທັກສະຄວາມສາມາດເພື່ອຮັບມືກັບບັນດາສິ່ງທ້າທາຍ ແລະ ກາລະໂອກາດຕາງໆ
ໂຄງລ່າງພື້ນຖານ	ຄວາມສາມາດໃຫ້ການສະໜັບສະໜຸນວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳທາງດ້ານການປຸກລະດົມ, ການໂທລະຄົມມະນາຄົມ, ຂໍ້ມູນຂາວສານເຕັກໂນໂລຊີ, ອາຄານສະຖານທີ່ ແລະ ສິ່ງອຳນວຍຄວາມສະດວກໃນການຝຶກອົບຮົມ, ເສັ້ນທາງ, ໂຄງລາງພື້ນຖານທາງການຕະຫຼາດ

- ການມີ ແລະ ການເຂົ້າເຖິງບັນດາປັດໃຈນຳເຂົ້າ
- ສະຖາບັນການຝຶກອົບຮົມທີ່ສາມາດສະໜອງການຝຶກອົບຮົມສະເພາະບຸກຄົນໃດໜຶ່ງ ແລະ ການສະໜັບສະໜຸນໃຫ້ມີການຮຽນຮູ້

ການມີສະພາບເງື່ອນໄຂທີ່ເອື້ອອຳນວຍທັງໝົດເຫຼົ່ານີ້ ບໍ່ເປັນສິ່ງຢືນຢັນເຖິງລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳທີ່ປະສົບຜົນສຳເລັດ ແຕ່ການມີສະພາບເງື່ອນໄຂຕ່າງໆເຫຼົ່ານີ້ ຈະເປັນການເພີ່ມໂອກາດໃນການປະດິດສ້າງສິ່ງໃໝ່ໆ ເພາະສະນັ້ນຈຶ່ງຈຳເປັນຕ້ອງມີຍຸດທະສາດໃດໜຶ່ງເພື່ອກະຕຸກຊຸກຍູ້ສະພາບເງື່ອນໄຂຕ່າງໆນີ້. ສະພາບແວດລ້ອມທີ່ເອື້ອອຳນວຍສາມາດປະກົດເປັນຜົນໄດ້ດ້ວຍການສ້າງບັນດາຂີດຄວາມສາມາດດັ່ງຕໍ່ໄປນີ້:

ກ) ຂີດຄວາມສາມາດຂອງອົງກອນສ້າງນະໂຍບາຍເພື່ອດັດປັບບັນດານະໂຍບາຍຕ່າງໆໃຫ້ເຂົ້າກັບສະພາບການ ໂດຍອີງໃສ່ບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດນະໂຍບາຍ, ເພື່ອສະທ້ອນໃຫ້ເຫັນເຖິງການຮຽນຮູ້ ແລະ ການຄຸ້ມຄອງການປ່ຽນແປງທີ່ມີການປັບຕົວໃຫ້ເຂົ້າກັບສະພາບ

ຂ) ລິເລີ່ມດຳເນີນກິດຈະກຳຮ່ວມກັນ ແລະ ການປະສານສົມທົບກັນລະຫວ່າງອົງການຈັດຕັ້ງຕ່າງໆທີ່ຢູ່ໃນລະບົບການປະດິດຄິດສ້າງສິ່ງໃໝ່ໆ ແລະ ບັນດາຜູ້ດຳເນີນງານຢູ່ໃນຂະແໜງການກະສິກຳ

ຄ) ການສະໜັບສະໜຸນການຈັດຕັ້ງການຝຶກອົບຮົມ, ສຳມະນາ, ການຄົ້ນຄວ້າຮ່ວມກັນ, ການສຶກສາການດຳເນີນງານ ແລະ ການປະເມີນຮ່ວມກັນທີ່ຈະນຳເອົາຂົງເຂດວຽກງານທີ່ສຳຄັນຕ່າງໆອອກມາໄດ້ທີ່ຈຳເປັນຕ້ອງໄດ້ມີການເອົາ ໃຈໃສ່ທາງດ້ານນະໂຍບາຍ

ງ) ຈັດຕັ້ງກົນໄກການປະສານງານຂອງຂະແໜງການ ແລະ ບັນດາກຸ່ມເຮັດວຽກຂອງຜູ້ທີ່ມີສ່ວນກ່ຽວຂ້ອງຫຼາຍຝ່າຍເພື່ອພັດທະນາ ແລະ ຄຸ້ມຄອງສາຍພົວພັນລະຫວ່າງຜູ້ດຳເນີນການຫຼາຍຝ່າຍ, ພັດທະນາທິດຊີ້ນຳ ແລະ ນະໂຍບາຍທີ່ມີລັກສະນະຍຸດທະສາດແບບເປັນຂະບວນການສຳລັບຂະແໜງການ

ຈ) ສ້າງຂໍ້ມູນທີ່ພຽງພໍທີ່ຕ້ອງການສຳລັບການສະໜັບສະໜຸນນະໂຍບາຍທີ່ອີງໃສ່ຫຼັກຖານເປັນພື້ນຖານ ແລະ ການເຮັດການຕັດສິນໃຈ

ສ) ການແລກປ່ຽນຂໍ້ມູນກ່ຽວກັບບັນດາກິດຈະກຳຕ່າງໆຂອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ-EAS ຮວມກັບຊາວກະສິກອນ ແລະ ອົງການຈັດຕັ້ງຂອງເຂົາເຈົ້າ, ນັກຄົ້ນຄ້ວາ, ຜູ້ກຳນົດນະໂຍບາຍ ແລະ ນັກການເມືອງຜູ້ທີ່ມີຄວາມສົນໃຈທີ່ຈະຈັດການກັບບັນຫາຂໍ້ຈຳກັດຕ່າງໆ ໂດຍຜ່ານການປ່ຽນແປງນະໂຍບາຍ (ການນຳໃຊ້ ເວບໄຊ, ບົດຄັດຫຍໍ້ກ່ຽວກັບນະໂຍບາຍ, ການສ້າງເຄືອຂ່າຍທາງສັງຄົມ)

ຊ) ການຄຸ້ມຄອງສາຍພົວພັນກັບສື່ (ການສື່ສານປະຊາສຳພັນ ແລະ ການຄຸ້ມຄອງສື່)

4. ການສະໜັບສະໜຸນການພັດທະນາຂີດຄວາມສາມາດ

ການພັດທະນາຂີດຄວາມສາມາດ ແມ່ນການລົງທຶນໄລຍະຍາວ ແລະ ເປັນຂະບວນການປ່ຽນແປງ. ນອກຈາການສ້າງຄວາມເຂັ້ມແຂງທີ່ຈຳເປັນທາງດ້ານເຕັກນິກວິຊາການແລ້ວ ຈຳເປັນຕ້ອງສ້າງສາຍພົວພັນທີ່ເຂັ້ມແຂງ ແລະ ມີປະສິດທິພາບ ລະຫວ່າງບັນດາຜູ້ດຳເນີນການຕ່າງໆທີ່ຢູ່ພາຍໃນລະບົບດຳເນີນງານໃດໜຶ່ງໃຫ້ຫຼາຍຂຶ້ນກວ່າເກົ່າ (ບໍ່ວ່າຈະຢູ່ໃນອົງກອນ, ຂະແໜງການ, ປະເທດ ຫຼື ເຂດພາກພື້ນກໍຕາມ)[42]. ການສ້າງຂີດຄວາມສາມາດ ຄວນສ້າງບົນພື້ນຖານທີ່ມີຢູ່ໃນປະຈຸບັນ ແລະ ຄວນມີການການຮຽນຮູ້ ແລະ ການດັດປັບໃຫ້ເຂົ້າກັບສະພາບການແບບຕໍ່ເນື່ອງ, ມີຍຸດທະສາດການຮ່ວມງານສຳລັບໄລຍະຍາວ, ມີຄວາມກົມກຽວກັນ ແລະ ການປະສານງານທີ່ມີປະສິດທິພາບລະຫວ່າງຜູ້ດຳເນີນການຕ່າງໆດ້ານການພັດທະນາຂີດຄວາມສາມາດ ແລະ ບັນດາພາກສ່ວນຕ່າງໆເຫຼົ່ານັ້ນທີ່ໄດ້ຮັບການເສີມສ້າງຂີດຄວາມສາມາດ[43]. ໃນການພັດທະນາຂີດຄວາມສາມາດ ຄຳຖາມກ່ຽວກັບພາລະບົດບາດ ແລະ ວິທີການເຈລະຈາກ່ຽວກັບພາລະບົດບາດນັ້ນ ແມ່ນມີຄວາມສຳຄັນ



ເຊັ່ນກັນ.

ການນຳໃຊ້ຮູບແບບຕ່າງໆໃນວົງກ້ວາງ ແມ່ນມີຄວາມຈຳເປັນຖ້າຫາກ ຕ້ອງການພັດທະນາຂີດຄວາມສາມາດຢູ່ໃນທັງສາມລະດັບ. ຫົວຂໍ້ຕໍ່ໄປ ນີ້ຈະປຶກສາຫາລືກ່ຽວກັບບາງແນວທາງທີ່ໃຫ້ການສະໜັບສະໜູນການ ພັດທະນາຂີດຄວາມສາມາດ ເຊິ່ງໃນປະຈຸບັນນີ້ ແມ່ນໄດ້ຮັບການຈັດຕັ້ງ ປະຕິບັດໂດຍສຳນັກງານຕ່າງໆ. ຈຸດປະສົງຂອງຫົວຂໍ້ນີ້ ແມ່ນເພື່ອວາດ ພາບໃຫ້ເຫັນຄວາມຫຼາກຫຼາຍຂອງວິທີການຕ່າງໆ ໃນການສະໜັບສະ ໜູນການພັດທະນາຂີດຄວາມສາມາດ ແລະ ບາງແນວຄວາມຄິດທີ່ໜ້າ ສົນໃຈ.

4.1 ການສະໜັບສະໜູນຂີດຄວາມສາມາດໃນລະດັບບຸກຄົນ

ຄວາມສາມາດຢູ່ໃນລະດັບຂົງເຂດພື້ນທີ່ຕ່າງໆເຊັ່ນ: ການພັດທະນາ ການຕະຫຼາດ, ການຄຸ້ມຄອງທຸລະກິດ, ການປັບຕົວໃຫ້ເຂົ້າກັບສະພາບ ການປ່ຽນແປງຂອງດິນຟ້າອາກາດ ແລະ ການນຳໃຊ້ຂໍ້ມູນສື່ສານເຕັກໂນ ໂລຊີ (ICT) ແມ່ນສາມາດຮຽນຮູ້ໄດ້ໂດຍຜ່ານຫຼັກສູດໃນລະດັບຕ່າງໆ (ຈາກລະດັບວິຊາຊີບເຖິງລະດັບວິຊາການ) ຈາກຫຼັກສູດທີ່ບັນດາໂຮງ ຮຽນ, ມະຫາວິທະຍາໄລ ແລະ ບັນດາໜ່ວຍງານຝຶກອົບຮົມຕ່າງໆ ພັດ ທະນາຂຶ້ນມາສຳລັບບັນດາຫົວຂໍ້ເຫຼົ່ານີ້. ທັກສະຄວາມສາມາດທີ່ບັນດາ ຊ່ຽວຊານດ້ານການສົ່ງເສີມ ແລະ ບໍລິການໃຫ້ຄຳປຶກສາດ້ານກະສິກຳ ແລະ ການນຳຂອງບັນດາອົງການຈັດຕັ້ງ ຮຽກຮ້ອງຕ້ອງການໃຫ້ມີຮູບ ແບບວິທີການໃໝ່ ທີ່ແຕກຕ່າງຈາກການຮຽນຮູ້ແບບເດີມ ເຊັ່ນ ການຮຽນ ຮູ້ຈາກການປະຕິບັດ. ປະຈຸບັນນີ້ ຍັງບໍ່ທັນໄດ້ມີການສິດສອນຢູ່ຕາມໂຮງ ຮຽນ ແລະມະຫາວິທະຍາໄລ ຮູບການນີ້ເທື່ອ ແລະ ຮຽກຮ້ອງໃຫ້ມີການ ປ່ຽນແປງທີ່ສຳຄັນຢູ່ໃນແນວທາງທີ່ບັນດາໂຮງຮຽນ ແລະ ມະຫາວິທະຍາ ໄລຕ່າງໆ ອອກແບບ ແລະ ຈັດຕັ້ງປະຕິບັດຫຼັກສູດການຮຽນການສອນ ຕ່າງໆ. ດັ່ງນັ້ນ ການສ້າງອົງການຈັດຕັ້ງຕ່າງໜ້າສຳລັບການຝຶກອົບຮົມ, ຈະມີຄວາມເໝາະສົມກ່ວາ ເນື່ອງຈາກມີຄວາມຈຳກັດໜ້ອຍກ່ວາບັນດາ ສະຖາບັນການສຶກສາຕ່າງໆ. ການຈັດຕັ້ງປະຕິບັດລະບົບໜ່ວຍກິດສຳ ລັບການຝຶກອົບຮົມ ແລະ ການພັດທະນາຫຼັກສູດການຮຽນການສອນສຳ ລັບການການສຶກສາທາງໄກ ແມ່ນອີກຫົນທາງໜຶ່ງ ທີ່ສາມາດເສີມສ້າງ ຂີດຄວາມສາມາດສຳລັບບຸກຄົນຕ່າງໆທີ່ກຳລັງເຮັດວຽກຢູ່.

4.1.1 ການສ້າງຕັ້ງສູນຝຶກອົບຮົມ ແລະ ເສີມສ້າງຂີດຄວາມສາມາດ ຂອງສູນໃຫ້ເຂັ້ມແຂງ: ຜ່ານໄລຍະເວລາຫຼາຍໆປີ, ຫຼາຍປະເທດ ກໍໄດ້ສ້າງຕັ້ງສູນຝຶກອົບຮົມຂອງຕົນເອງຂຶ້ນທີ່ຂຶ້ນກັບກະຊວງກະ ສິກຳ/ກະຊວງສຶກສາເພື່ອສ້າງຂີດຄວາມສາມາດໃຫ້ພະນັກງານ ແບບຕໍ່ເນື່ອງ. ຄວາມພະຍາຍາມຕ່າງໆເຫຼົ່ານີ້ ແມ່ນໄດ້ເນັ້ນໃສ່ການ ພັດທະນາທັກສະດ້ານເຕັກນິກວິຊາການກ່ຽວກັບການຜະລິດພືດ/ ທັກສະທາງດ້ານວິສາຫະກິດ ແລະ ການດຳເນີນງານຕ່າງໆກ່ຽວກັບການ ປຸກລະດົມສັງຄົມ, ການມີສ່ວນຮ່ວມ, ການສື່ສານປະຊາສຳພັນ, ການ ເຊື່ອມໂຍງຊາວກະສິກອນເຂົ້າຫາຕະຫຼາດ ແລະ ອື່ນໆ.

ບາງອົງການຈັດຕັ້ງກໍຍັງຈັດບັນດາແຜນງານຕ່າງໆເພື່ອເສີມສ້າງຂີດ ຄວາມສາມາດຂອງຜູ້ສະໜອງການໃຫ້ບໍລິການຄົນອື່ນໆ (ຕົວຢ່າງເຊັ່ນ: ສະຖາບັນຄຸ້ມຄອງວຽກງານສົ່ງເສີມກະສິກຳແຫ່ງຊາດ-MANAGE ກໍສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາຜູ້ສະໜອງປັດໃຈນຳເຂົ້າຢູ່ໃນປະ ເທດອິນເດຍ, ການພັດທະນາຜູ້ປະກອບການທຸລະກິດ - ກະສິກຳຈັດ ໂດຍ ສູນການພັດທະນາປຸຍສາກົນ-IFDC ແລະ ພະນັກງານລັດຖະບານ ທ້ອງຖິ່ນຢູ່ໃນປະເທດຟີລິປິນ ຈັດໂດຍສະຖາບັນຝຶກອົບຮົມກະສິກຳ-ATI). ຢູ່ໃນປະເທດອິນເດຍ, ລັດຖະບານ ສົ່ງເງິນຄ່າຮຽນຄືນໃຫ້ພະນັກ ງານສົ່ງເສີມຢູ່ໃນຂະແໜງການຂອງລັດທີ່ສະໝັກເຂົ້າຮຽນຫຼັກສູດໃນສາ ຂາວິຊາການສົ່ງເສີມກະສິກຳ ທີ່ດຳເນີນການສອນໂດຍສະຖາບັນຄຸ້ມ ຄອງວຽກງານສົ່ງເສີມກະສິກຳແຫ່ງຊາດ.

ໃນລະຫວ່າງຊຸມປີທີ່ບໍ່ດົນຜ່ານມານີ້ ໄດ້ມີການໃຊ້ຄວາມພະຍາຍາມ ຢ່າງຫຼວງຫຼາຍເພື່ອຈັດການແກ້ໄຂບັນຫາເລື່ອງຄຸນນະພາບການຝຶກອົບ ຮົມຕ່ຳຢູ່ໃນບັນດາສູນຝຶກອົບຮົມຕ່າງໆເຫຼົ່ານີ້. ຕົວຢ່າງ: ການເສີມສ້າງ ຂີດຄວາມສາມາດສຳລັບການຝຶກອົບຮົມວິຊາຊີບ ແລະ ການສົ່ງເສີມ ແມ່ນໜຶ່ງໃນບັນດາອົງປະກອບຕ່າງໆຂອງໂຄງການສ້າງຂີດຄວາມສາ ມາດໃນເຂດຊົນນະບົດ (RCBP) ທີ່ຫາກໍສິ້ນສຸດລົງ ໃນລະຫວ່າງ ບໍ່ດົນມານີ້ ຢູ່ທີ່ປະເທດ ເອທິໂອເປຍ. ຢູ່ປະເທດຫວຽດນາມ, ອົງການ CIAT, ອົງການ ເຮວວິຕັດ ລວມທັງອົງການພັດທະນາ ແລະ ການຮ່ວມມືແຫ່ງປະເທດສະວິດ (SDC) ໄດ້ຮ່ວມກັນພັດທະນາຄູ່ມື ແນະນຳກ່ຽວກັບ 'ການສົ່ງເສີມການຕະຫຼາດກະສິກຳ' ເພື່ອສະໜັບ ສະໜຸນພະນັກງານສົ່ງເສີມໃນການສະໜອງວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳໃຫ້ຊາວກະສິກອນທີ່ມຸ້ງ ເນັ້ນໃສ່ການຕະຫຼາດ ໄດ້ຢ່າງມີປະສິດທິພາບ[44]. ອົງການ USAID-Egypt ກຳລັງໃຫ້ ການສະໜັບສະໜູນການປະຕິຮູບໂຮງຮຽນເຕັກ ນິກກະສິກຳ (ATS) ຢູ່ໃນປະເທດ ອີຢິບ ດ້ວຍການກວດແກ້ຫຼັກສູດ ການຮຽນການສອນຄືນໃໝ່, ຈັດໃຫ້ມີການປັບປຸງອຸປະກອນການ ຮຽນການສອນ ແລະ ບັນດາຄູອາຈານໃນການນຳໃຊ້ອຸປະກອນດັ່ງ ກ່າວ[45]. ຢູ່ໃນປະເທດ ການາ ໂຄງການວິສະວະກອນບໍ່ມີພົມແດນ (EWB) ແລະ ພະນັກງານຂອງກະຊວງອາຫານ ແລະ ການກະເສດ (MoFA) ໄດ້ຮ່ວມກັນສ້າງ ແລະ ຈັດຕັ້ງປະຕິບັດຫຼັກສູດການຮຽນ ການສອນພາກວິຊາທຸລະກິດ-ກະສິກຳ ແລະ ການພັດທະນາວິສາ ຫະກິດເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ທັກສະຕ່າງໆເຫຼົ່ານັ້ນໃຫ້ ບັນດານັກສຶກສາຕ່າງໆຢູ່ໃນໂຮງຮຽນກະສິກຳ[46]. ຢູ່ໃນທະວີບ ເອີຣົບ, IALB (ສະຖາບັນສຶກສາສາກົນສຳລັບທີ່ປຶກສາດ້ານກະ ສິກຳ, ການພັດທະນາຊົນນະບົດ ແລະ ເສດຖະກິດຄົວເຮືອນ) ໄດ້ ດຳເນີນຫຼັກສູດການຝຶກອົບຮົມທີ່ໃຫ້ໃບຢັ້ງຢືນແກ່ບັນດາທີ່ປຶກສາ ຕ່າງໆເພື່ອເສີມສ້າງຄວາມຮູ້ ແລະ ທັກສະທາງດ້ານວິທີການ, ການສື່ສານປະຊາສຳພັນ ແລະ ທັກສະຄວາມຮູ້ທາງສັງຄົມ. ໃນຂະນະທີ່ການຝຶກອົບຮົມວິຊາຊີບ, ການເຂົ້າຮ່ວມສັງເກດການ ແລະ ການຝຶກອົບຮົມໃນດ້ານການບໍລິການຍັງຄົງສືບຕໍ່ມີຄວາມ ສຳຄັນ; ມັນກໍມີຄວາມຈຳເປັນທີ່ຈະຕ້ອງໄດ້ມີການພັດທະນາ ຂີດຄວາມສາມາດຢູ່ໃນ 'ພາກປະຕິບັດຕົວຈິງ' ໃຫ້ຫຼາຍຂຶ້ນສຳ ລັບຜູ້ສະໜອງວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳ ປຶກສາດ້ານກະສິກຳ.

4.2 ການສະໜັບສະໜູນຂີດຄວາມສາມາດໃນລະດັບ ອົງການຈັດຕັ້ງ

ວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາ ດ້ານກະສິກຳ (EAS) ຈຳເປັນຕ້ອງມີກົນໄກຕ່າງໆ ເພື່ອຮັບປະກັນການຊີ້ນຳທາງດ້ານເຕັກນິກວິຊາ ການຈາກບັນດາອົງການຈັດຕັ້ງຕ່າງໆທີ່ມີ ສ່ວນຮ່ວມໃນການຄົ້ນຄ້ວາວິໃຈ, ການສຶກ ສາ ແລະ ການຝຶກອົບຮົມ. ນອກຈາກສິ່ງ ເຫຼົ່ານີ້, ການພັດທະນາຂີດຄວາມສາມາດ ຂອງອົງກອນກໍຮຽກຮ້ອງໃຫ້ມີການຮຽນຮູ້ ເພື່ອດຳເນີນງານ ແລະ ການຮຽນໃນພາກປະ ຕິບັດຕົວຈິງ ລວມທັງການບໍລິການຕ່າງໆເຊັ່ນ: ການຝຶກສອນເພື່ອຄວາມເປັນຜູ້ນຳທາງດ້ານການຄຸ້ມ ຄອງດ້ານຍຸດທະສາດ ແລະ ການປ່ຽນແປງ, ໃນການຄຸ້ມຄອງບັນ ດາອົງການຈັດຕັ້ງທີ່ກຳລັງຮຽນຮູ້ເພື່ອກ້າວໄປສູ່ການດຳເນີນງານ ທີ່ມີຄຸນນະພາບສູງ; ການອຳນວຍຄວາມສະດວກໃຫ້ແກ່ການ ທົບທວນຄືນດ້ວຍຕົນເອງພາຍໃນອົງກອນ, ຮ່ວມກັບຄູ່ຮ່ວມ ງານ ແລະ ລູກຄ້າຂອງຕົນກ່ຽວກັບປະສິບການໂດຍມີເປົ້າ ໝາຍເພື່ອປັບປຸງການດຳເນີນງານ (ອີງຕາມບົດຮຽນຕ່າງໆ ຈາກການຈັດຕັ້ງປະຕິບັດ); ການອຳນວຍຄວາມສະດວກໃຫ້ແກ່ ການພັດທະນາໂຄງສ້າງ ແລະ ການອອກແບບການວາງແຜນແບບ ມີສ່ວນຮ່ວມ ແລະ ຂະບວນການຈັດຕັ້ງປະຕິບັດດ້ວຍຕົນເອງ; ການອຳນວຍຄວາມສະດວກ ແລະ ການຝຶກສອນເພື່ອປັບປຸງ ການສື່ສານປະຊາສຳພັນ, ການສ້າງແຮງຈູງໃຈໃຫ້ພະນັກງານ ແລະ ການປະເມີນການດຳເນີນງານ; ການວາງແຜນປະກອບອາຊີບ. ປະເພດການຝຶກສອນ ແລະ ການອຳນວຍຄວາມສະດວກຮູບແບບນີ້

ອາດຈະຈຳເປັນຕ້ອງໄດ້ຮັບມາຈາກ ບໍລິສັດ ທີ່ປຶກສາ ແລະ ໂຮງຮຽນ ບໍລິການທຸລະກິດແຫ່ງຕ່າງໆ. ໃນບາງປະເທດເລື່ອງນີ້ ອາດຈະຕ້ອງການ ໄດ້ມີການພັດທະນາຂີດຄວາມສາມາດຂອງບໍລິສັດ ແລະ ໂຮງຮຽນບໍລິ ການທຸລະກິດຕ່າງໆເຫຼົ່ານັ້ນ ໃນການອອກແບບໂປຼແກຼມຝຶກອົບຮົມທີ່ກ່ຽວ ຂ້ອງກັບຂະແໜງການພັດທະນາຊົນນະບົດ.

4.2.1 ການສ້າງຕັ້ງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາ ແນະນຳ ດ້ານກະສິກຳ: ບັນດາຜູ້ໃຫ້ທຶນຊ່ວຍເຫຼືອມີບົດບາດທີ່ສຳຄັນໃນ ການສະໜັບສະໜຸນການສ້າງຕັ້ງວຽກງານສິ່ງເສີມ ແລະ ການບໍລິການໃຫ້ ຄຳປຶກສາດ້ານກະສິກຳຢູ່ໃນບັນດາປະເທດເອີຣົບກາງແລະເອີຣົບຕາເວັນ ອອກໃນຊ່ວງໄລຍະຂ້າມຜ່ານ (ພາຍຫຼັງປີ-1991 ເປັນຕົ້ນໄປ). ກົມປູກ ຝັງແຫ່ງປະເທດສະຫະລັດອາເມລິກາ ໄດ້ໃຫ້ການສະໜັບສະໜຸນປະເທດ ລັດເຊຍ ໃນການສ້າງຕັ້ງການບໍລິການຂໍ້ມູນຂ່າວສານ ແລະ ການໃຫ້ຄຳ ປຶກສາທີ່ນຳໃຊ້ຮູບແບບລະບົບການສິ່ງເສີມຂອງປະເທດສະຫະລັດອາເມ ລິກາ. ມະຫາວິທະຍາໄລຫຼາຍໆແຫ່ງຢູ່ປະເທດ ອາເມລິກາ ກໍໄດ້ເຂົ້າຮ່ວມ ໃນໂຄງການດັ່ງກ່າວ. ລະບົບການບໍລິການສິ່ງເສີມຢູ່ໃນປະເທດທີ່ເປັນ ສະມາຊິກໃໝ່ຂອງທະວີບເອີຣົບ ແມ່ນກຳລັງມີການພັດທະນາເປັນເທື່ອ ລະກ້າວ. ນະໂຍບາຍການພັດທະນາຊົນນະບົດຂອງທະວີບ ເອີຣົບ ໃຫ້ ການສະໜັບສະໜຸນບັນດາລັດທີ່ເປັນສະມາຊິກໃນການສ້າງຕັ້ງໜ່ວຍ ບໍລິການສິ່ງເສີມຟາມ (FAS) ທີ່ມີຄວາມຈຳເປັນ. ບັນດາໜ່ວຍບໍລິການ ສິ່ງເສີມຟາມແຫ່ງຊາດ ຮັບປະກັນວ່າ ຊາວກະສິກອນແຕ່ລະຄົນ ສາມາດໄປຊອກຫາ ແລະ ໄດ້ຮັບຄຳແນະນຳພື້ນຖານກ່ຽວກັບການປະຕິ ບັດໃຫ້ສອດຄ່ອງກັບບັນດາເງື່ອນໄຂຄວາມຕ້ອງການທາງດ້ານສະພາບ ແວດລ້ອມ, ສາທາລະນະສຸກ, ສຸຂະພາບຂອງສັດ ແລະ ພືດ.

4.2.2ການສ້າງຄວາມເຂັ້ມແຂງເພື່ອເພີ່ມຄວາມຕ້ອງການ: ໃນກໍລະນີຂອງ INCAGRO (Innovacion y Competitividad para el Agro Peruano), ໄດ້ນຳໃຊ້ຮູບແບບການປະມູນແຂ່ງຂັນເພື່ອເພີ່ມຄວາມຕ້ອງການ ແລະ ການສະໜອງການບໍລິການສິ່ງເສີມ[47]. ກອງທຶນພັດທະນາເຕັກໂນ ໂລຊີກະສິກຳຂອງ INCAGRO ມີຄວາມສຳຄັນຢູ່ບ່ອນວ່າ ຊາວກະສິ ກອນໄດ້ເປັນເຈົ້າຂອງໂຄງການ ແລະ ພວກເຂົາເປັນຜູ້ເຮັດສັນຍາຈ້າງງານ ກັບບັນດາຜູ້ສະໜອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາ ດ້ານກະສິກຳ ເພື່ອມາດຳເນີນບັນດາກິດຈະກຳຈຳເປັນສະເພາະໃດໜຶ່ງ. ການເຮັດແບບນີ້ແມ່ນໄດ້ຊ່ວຍເຮັດໃຫ້ບັນດາກຸ່ມຊາວກະສິກອນໄດ້ຮັບ ທັກສະໃນການຈັດຕັ້ງ ແລະ ການພັດທະນາໂຄງການ. ການບໍລິການໃຫ້ຄຳ ປຶກສາດ້ານກະສິກຳແຫ່ງຊາດ ຢູ່ໃນປະເທດ ອູການດາ (NAADS) ກໍ ແມ່ນອີກຄວາມພະຍາຍາມໜຶ່ງເພື່ອສ້າງຄວາມເຂັ້ມແຂງໃຫ້ຊາວກະສິ ກອນ ເພື່ອໃຫ້ສາມາດຮຽກຮ້ອງ ແລະ ຄວບຄຸມວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ.

4.2.3 ຮຽນຮູ້ເພື່ອການດຳເນີນງານ (ຮຽນຮູ້ຈາກການປະຕິບັດ): ການຮຽນ ຮູ້ເພື່ອການດຳເນີນງານ (ການຮຽນຮູ້ຈາກການປະຕິບັດ) ແມ່ນຍຸດທະສາດ ໃນການຮຽນຮູ້ ແລະ ການແກ້ໄຂບັນຫາ ເພື່ອເພີ່ມຂີດຄວາມສາມາດໃນ ການຮຽນຮູ້ ຂອງບັນດາພະນັກງານພາຍໃນອົງກອນໃດໜຶ່ງ ແລະ ລະຫວ່າງອົງການຕ່າງໆ. ເຖິງແມ່ນວ່າຈະບໍ່ໄດ້ຖືກນຳໃຊ້ຫຼາຍໃນການພັດ ທະນາຂີດຄວາມສາມາດຂອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ ຄຳປຶກສາດ້ານກະສິກຳ (EAS), ແຕ່ມັນກໍມີທ່າແຮງຫຼາຍໃນການພັດ ທະນາຂີດຄວາມສາມາດທາງດ້ານການດຳເນີນງານໃນວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ (EAS). ກົນລະຍຸດ ດັ່ງກ່າວແມ່ນອາໃສຄວາມຮູ້ ແລະ ປະສົບການຂອງພະນັກງານໃຫ້ເປັນ ປະໂຫຍດ ແລະ ເປັນການສ້າງໂອກາດຕ່າງໆ ເພື່ອທຳການທົດລອງ, ທົບທວນຄືນ ແລະ ແລກປ່ຽນການຮຽນຮູ້ຂອງເຂົາເຈົ້າ ໃນການແກ້ໄຂບັນ ຫາຕົວຈິງທີ່ເກີດຂຶ້ນຢູ່ໃນອົງກອນ. ຕົວຢ່າງ: ໂຄງການພັດທະນາການປູກ ພືດໃນເຮືອນຮົ່ມຢູ່ເມືອງ ເກລາຣາ ທີ່ອົງການ ອີຢູ ໃຫ້ທຶນສະໜັບສະໜຸນ ຢູ່ໃນປະເທດ ອິນເດຍ ໄດ້ດຳເນີນການຈັດຕັ້ງປະຕິບັດກິດຈະກຳເປັນ ຮູບແບບຂອງໂຄງການທົດລອງ ໂດຍມີການຮ່ວມງານກັບພາກສ່ວນອື່ນໆ ນຳ ແລະ ໄດ້ໃຫ້ການຊ່ວຍເຫຼືອພະນັກງານໃນການທົບທວນຄືນເພື່ອໃຫ້ ເຂົ້າໃຈຄວາມໝາຍ ແລະ ຜົນໄດ້ຮັບໃນໄລຍະຍາວ[48]. ໃນຂະບວນການ ດັ່ງກ່າວນີ້, ມັນໄດ້ພັດທະນາຂີດຄວາມສາມາດອັນໃໝ່ສຳລັບການທົດ ລອງ, ການຮຽນຮູ້ ແລະ ການປັບຕົວໃຫ້ເຂົ້າກັບສະພາບແວດລ້ອມທີ່ມີ ການພັດທະນາໄປເທື່ອລະໜ້ອຍ. ການຮຽນຮູ້ເພື່ອດຳເນີນງານ ຈຳເປັນ ຕ້ອງມີການອຳນວຍຄວາມສະດວກ ແລະ ການມີຜູ້ອຳນວຍຄວາມສະ ດວກຈາກພາຍນອກ ແມ່ນສາມາດຊ່ວຍໃນຂະບວນການດັ່ງກ່າວນີ້ໄດ້. ບັນດາອົງກອນຕ່າງໆ ຈຳເປັນຕ້ອງມີວັດທະນາທຳແຫ່ງການຮຽນຮູ້ເພື່ອ ເຮັດໃຫ້ຍຸດທະສາດດັ່ງກ່າວນີ້ບັນລຸໄດ້. ການຮຽນຮູ້ເພື່ອດຳເນີນງານ ສາ ມາດເຮັດໃຫ້ປະສົບຜົນສຳເລັດໄດ້ໃນອົງກອນຕ່າງໆ ທີ່ມີຄວາມຍືດຍຸນຕໍ່ ພະນັກງານລະດັບກາງ ແລະຕົ້ນ ເພື່ອທົດລອງ ນຳໃຊ້ຍຸດທະວິທີຫຼາຍໆ ຢ່າງທີ່ແຕກຕ່າງກັນໄປ.

4.3 ການສະໜັບສະໜຸນຂີດຄວາມສາມາດໃນລະດັບສະພາບແວດ ລ້ອມທີ່ ເອື້ອອຳນວຍ

ສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ການສະໜັບສະໜຸນ ແມ່ນມີຄວາມ ສຳຄັນຫຼາຍສຳລັບການພັດທະນາ, ຄວາມຍືນຍົງ ແລະ ຄວາມມີປະສິດທິ ພາບຂອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ ແລະ ມັນຮຽກຮ້ອງໃຫ້ມີການສະໜັບສະໜຸນທາງດ້ານການເມືອງ, ການ ເງິນ, ອົງກອນ, ສະຖາບັນ ແລະ ໂຄງລ່າງພື້ນຖານຢູ່ໃນລະດັບວົງກວ້າງ. ຫົວຂໍ້ນີ້ຈະປຶກສາຫາລືກ່ຽວກັບການພັດທະນາຂີດຄວາມສາມາດທີ່ຕ້ອງ ການໃນລະດັບອົງກອນ ແລະ ສະຖາບັນ ເຊິ່ງສ່ວນໃຫຍ່ແລ້ວແມ່ນເລື່ອງ ຂອງການຮຽນຮູ້ເພື່ອດຳເນີນງານຮ່ວມກັນກັບບັນດາຜູ້ດຳເນີນການອື່ນໆ ຢູ່ໃນລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ (AIS). ສິ່ງດັ່ງ ກ່າວນີ້ຮຽກຮ້ອງໃຫ້ມີການຊີ້ນຳ ແລະ ໃຫ້ການສະໜັບສະໜຸນອຳນວຍ ຄວາມສະດວກຈາກບັນດາບໍລິສັດທີ່ປຶກສາບໍລິການຈັດການທີ່ມີຄຸນນະ ພາບສູງທີ່ ຊຳນານງານໃນດ້ານການເປັນຄູຮ່ວມງານ ແລະ ເວທີສົນທະນາ ຂອງຜູ້ດຳເນີນການຫຼາຍຝ່າຍ, ການຄຸ້ມຄອງການປ່ຽນແປງ ແລະ ການ ສະໜັບສະໜຸນນະໂຍບາຍ. ສິ່ງນີ້ ກໍຮຽກຮ້ອງໃຫ້ມີການພັດທະນາຂີດ ຄວາມສາມາດຂອງບັນດາບໍລິສັດດັ່ງກ່າວເຊັ່ນກັນ. ບາງທີມະຫາວິທະຍາ ໄລຕ່າງໆ ກໍອາດຈະມີຄວາມສົນໃຈເຊັ່ນກັນໃນການພັດທະນາໂຮງຮຽນ ແບບພິເສດສຳລັບວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານ ກະສິກຳດັ່ງກ່າວທີ່ຕິດພັນກັບມະຫາວິທະຍາໄລ, ແຕ່ບໍ່ມີຂໍ້ຈຳກັດເຊັ່ນ ວິຊາຮຽນພາກປົກກະຕິ. ມະຫາວິທະຍາໄລຍັງສາມາດມີບົດບາດທີ່ສຳ ຄັນໃນການທົບທວນຄືນໜ່ວຍງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກ ສາດ້ານກະສິກຳທີ່ດຳເນີນການໂດຍສຳນັກງານຕ່າງໆ, ດຳເນີນການຄົ້ນ ຄວ້າວິໃຈການດຳເນີນງານໂດຍການຮ່ວມມືກັບໜ່ວຍສິ່ງເສີມ ແລະ ການ ບໍລິການໃຫ້ຄຳປຶກສາດ້ານກະສິກຳ, ພັດທະນາຫຼັກສູດແຜນວຽກແບບໃໝ່ ເພື່ອຈັດຕັ້ງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິ ກຳ ພ້ອມທັງປະສານສົມທົບເອົາກົນລະຍຸດດັ່ງກ່າວໃຫ້ເຂົ້າໃສ່ກັບຫຼັກສູດ ການຮຽນການສອນທີ່ມີຢູ່ໃນປະຈຸບັນ

4.3.1 ການຮຽນຮູ້ເພື່ອດຳເນີນງານຢູ່ໃນລະດັບຂັ້ນຂອງຖານການປະດິດ ສ້າງສິ່ງໃໝ່ໆ: ນີ້ແມ່ນວິທີການໜຶ່ງທີ່ໄດ້ຮັບການນຳໃຊ້ເພີ່ມຂຶ້ນໃນການ ສິ່ງເສີມການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ, ໂດຍສະເພາະຢູ່ໃນ ປະເທດ ອາຟຼິກກາ ແລະ ອາເມລິກາລາຕິນ. ຖານການປະດິດສ້າງ ສິ່ງໃໝ່ໆ ແມ່ນຖືກສ້າງຂຶ້ນເພື່ອຈັດໃຫ້ມີພື້ນທີ່ສຳລັບການເຈລະຈາຕໍ່ ລອງ, ການວາງແຜນ ແລະ ການຮຽນຮູ້ເພື່ອການດຳເນີນງານໂດຍການ ນຳເອົາພາກສ່ວນຕ່າງໆທີ່ກ່ຽວຂ້ອງ ແລະ ມີຜົນປະໂຫຍດເຂົ້າມາເຮັດ ວຽກຮ່ວມກັນ ເພື່ອເຮັດໃຫ້ບັນລຸເປົ້າໝາຍທີ່ໄດ້ວາງໄວ້. ເພື່ອດຳເນີນ ບົດບາດຂອງເຂົາເຈົ້າໄດ້ຢ່າງເໝາະສົມຢູ່ໃນຖານການປະດິດສ້າງ ສິ່ງໃໝ່ໆ, ມັນຮຽກຮ້ອງໃຫ້ບັນດາຜູ້ດຳເນີນການຕ່າງໆຕ້ອງໄດ້ເສີມສ້າງ ຂີດຄວາມສາມາດໃນການເຮັດວຽກຮ່ວມກັບຫຼາຍຝ່າຍ, ການສ້າງ ຄວາມເຊື່ອຖື, ການແກ້ໄຂຂໍ້ຂັດແຍ່ງ, ການສ້າງທີມງານ, ທັກສະໃນການ ຮັບຟັງ ແລະ ການໄກ່ເກ່ຍບັນຫາ. ແຕ່ສິ່ງສຳຄັນໄປກວ່ານັ້ນ, ການເຮັດ ວຽກຢູ່ໃນຮູບແບບຕ່າງໆແມ່ນຈະປະກອບສ່ວນຕໍ່ການພັດທະນາຂີດ ຄວາມສາມາດອັນໃໝ່ຕ່າງໆເຫຼົ່ານັ້ນດ້ວຍແນວທາງຂອງການຮຽນ ຮູ້ເພື່ອການດຳເນີນງານ. ຖ້າບັນດາການລະໂອກາດທີ່ໜຽງພໍຕ່າງໆ ຫາກ ຖືກສ້າງຂຶ້ນເປັນເອກະສານ ແລະ ສະທ້ອນໃຫ້ເຫັນຂັ້ນຕອນຕ່າງໆ, ການປ່ຽນແປງທາງດ້ານສະຖາບັນ ແລະ ຜົນໄດ້ຮັບໄລຍະຍາວຂອງວິທີ ການດັ່ງກ່າວມັນກໍຈະປະກອບສ່ວນເຂົ້າໃນການພັດທະນາຂີດຄວາມ ສາມາດອັນໃໝ່ ແລະ ການສ້າງໃຫ້ເປັນສະຖາບັນຂອງເຂົາເຈົ້າໄດ້.

4.3.2:ການສ້າງເຄືອຂ່າຍແລະການສະໜັບສະໜຸນນະໂຍບາຍ:ການຂາດພື້ນທີ່ສຳລັບການສະໜັບສະໜຸນ ແລະ ການນຳພາຢູ່ໃນລະດັບຕ່າງໆ ສຳລັບວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາ-EAS ມີສ່ວນເຮັດໃຫ້ບໍ່ໄດ້ຮັບການຮັບຮູ້ເທົ່າທີ່ຄວນ ແລະ ເຮັດໃຫ້ຄວາມສົນໃຈຂອງບັນດາຜູ້ກຳນົດນະໂຍບາຍ (ນັກການເມືອງ ແລະ ຜູ້ບໍລິຫານອາວຸໂສ) ທີ່ມີສ່ວນກ່ຽວຂ້ອງໃນວຽກງານກະສິກຳ ນັບມື້ຫຼຸດໜ້ອຍຖອຍລົງ. ການສ້າງຕັ້ງເຄືອຂ່າຍວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນຂົງເຂດພາກພື້ນ ແລະ ທົ່ວໂລກຢູ່ໃນຊຸມປີ2ໆບໍ່ດົນຜ່ານມານີ້ ກໍໄດ້ເປັນສ່ວນໜຶ່ງໃນການຕອບໂຕ້ຕໍ່ສະຖານະການດັ່ງກ່າວ. ກອງປະຊຸມລະດັບໂລກກ່ຽວກັບວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນ ເຂດຊົນນະບົດ-GFRAS ເຊິ່ງປະຈຸບັນນີ້ ໄດ້ມີບົດບາດທີ່ສຳຄັນໃນການກະຕຸ້ນ, ສິ່ງເສີມ ແລະ ກະຕຸກສຸກຍູ້ໃຫ້ມີການເຮັດວຽກຮ່ວມກັນ ຢູ່ພາຍໃນລະດັບເຂດພາກພື້ນ, ລະດັບຊາດ ແລະ ລະດັບນະໂຍບາຍໃນທົ່ວໂລກ. ຄາດການວ່າ ຈະເຮັດໃຫ້ສາມາດມີສະພາບແວດລ້ອມທີ່ໃຫ້ການສະໜັບສະໜຸນສຳລັບການລົງທຶນໃນການສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ-EAS48. ເຊັ່ນດຽວກັນກັບເຄືອຂ່າຍຂອງການສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນເຂດພາກພື້ນເຊັ່ນ: AFAAS (ປະເທດອາຝຼິກາ), RELASER (ປະເທດອາເມລິກາ ລາຕິນ); APEN (ເຄືອຂ່າຍການສິ່ງເສີມໃນເຂດອິດສະຕາລີແລະອາຊີ-ປາຊີຟິກ), APIRAS (ເຄືອຂ່າຍວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນເຂດຊົນນະບົດໃນໝູ່ເກາະ ເຂດອາຊີ-ປາຊີຟິກ) ແລະ PIEN (ເຄືອຂ່າຍການສິ່ງເສີມໃນເຂດໝູ່ເກາະປາຊີຝິກ) ແມ່ນມີບົດບາດທີ່ສຳຄັນໃນການສ້າງອິດທິພົນຕໍ່ນະໂຍບາຍຢູ່ໃນຂົງເຂດພາກພື້ນດັ່ງກ່າວ. ແຕ່ຍັງຈະຕ້ອງມີການເອົາໃຈໃສ່ຕື່ມຂຶ້ນອີກໃນຂົງເຂດດັ່ງກ່າວນີ້ ເພື່ອພັດທະນາເຄືອຂ່າຍໃນຂົງເຂດພາກພື້ນ ແລະ ລະດັບຊາດ, ແລະສົ່ງເສີມໃຫ້ມີການແລກປ່ຽນປະສົບການຢູ່ພາຍໃນ ແລະທົ່ວທັງປະເທດ ແລະໃນພາກພື້ນໃຫ້ຫຼາຍຂຶ້ນກວ່າເກົ່າ.

4.3.3 ການບັນທຶກ ແລະ ການພັດທະນາກອບວຽກໃໝ່: ນອກຈາກອົງການອາຫານ ແລະ ການກະເສດ FAO ແລະ ທະນາຄານໂລກແລ້ວ, ບັນດາຄູ່ຮ່ວມພັດທະນາອື່ນໆໃນລະຫວ່າງທົດສະຫວັດທີ່ຜ່ານມາຍັງໄດ້ເລີ່ມຕີລາຄາໃຫ້ຄວາມສຳຄັນກ່ຽວກັບການບັນທຶກປະສົບການຕ່າງໆເປັນເອກະສານໄວ້ກ່ຽວກັບການປະຕິຮູບລະບົບການສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ ແລະ ການພັດທະນາກອບວຽກໃໝ່ເພື່ອເປັນການຊີ້ນຳໃຫ້ແກ່ການລົງທຶນ ແລະ ການປະຕິຮູບຕ່າງໆ. ສິ່ງທີ່ສຳຄັນທີ່ສຸດໃນລະຫວ່າງສະຖາບັນເຫຼົ່ານີ້ແມ່ນວິທີສິນທະນາແນວຄວາມຄິດລິເລີ່ມຕ່າງໆ (NI), ເວທີສົນທະນາທີ່ສ້າງຕັ້ງຂຶ້ນໂດຍບັນດາຜູ້ໃຫ້ທຶນຈາກ ສະຫະພາບເອີຣົບ. ຜ່ານໄລຍະເວລາ 15 ປີຜ່ານມາ, ວິທີສົນທະນາແນວຄວາດຄິດລິເລີ່ມຕ່າງໆ (NI) ຍັງໄດ້ຈັດພິມເອກະສານຫຼາຍສະບັບທີ່ເປັນປະໂຫຍດກ່ຽວກັບແງ່ມຸມຕ່າງໆ ຂອງຮູບແບບການປະຕິຮູບການສິ່ງເສີມ[50]. ກອງປະຊຸມລະດັບໂລກກ່ຽວກັບການສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ (GFRAS) ໄດ້ເຂົ້າມາດຳເນີນການບັນດາແນວຄວາມຄິດລິເລີ່ມຕ່າງໆເຫຼົ່ານີ້ຂອງ NI ນັບຕັ້ງແຕ່ປີ 2010 ເປັນຕົ້ນມາ. ເຄືອຂ່າຍສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນເຂດພາກພື້ນເຊັ່ນ: AFAAS ແລະ RELASER ກໍຍັງນຳເອົາຄວາມຮູ້ທີ່ເປັນປະໂຫຍດຫຼາຍຢ່າງທີ່ກ່ຽວຂ້ອງກັບຮູບແບບຕ່າງໆໃນວຽກງານສິ່ງເສີມ ແລະການບໍລິການໃຫ້ຄຳປຶກສາດ້ານກະສິກຳແລະ ກອບແຜນວຽກຕ່າງໆເພື່ອຈັດການກັບບັນດາສິ່ງທ້າທາຍແບບໃໝ່ຕ່າງໆ. MEAS (ການສ້າງຄວາມທັນສະໄໝໃຫ້ວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ) ແມ່ນແນວຄວາມຄິດລິເລີ່ມທົ່ວໂລກອີກອັນໜຶ່ງທີ່ກຳລັງພະຍາຍາມທີ່ຈະກຳນົດ ແລະ ເຜີຍແຜ່ບັນດາຍຸດທະສາດ ແລະ ວິທີການປະຕິບັດທີ່ດີເພື່ອສ້າງຕັ້ງໜ່ວຍງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳທີ່ມີປະສິດທິພາບ ແລະ ປະສິດທິຜົນໄດ້. ອົງການຈັດຕັ້ງທີ່ບໍ່ໄດ້ສັງກັດລັດຍັງມີສ່ວນຮ່ວມເຂົ້າໃນການພັດທະນາຫຼັກສູດການຝຶກອົບຮົມແບບໃໝ່ສຳລັບພະນັກງານສິ່ງເສີມຂອງເຂົາເຈົ້າເອງ. ຕົວຢ່າງເຊັ່ນ: ອົງການ CRS ໄດ້ສ້າງຫຼັກສູດການຝຶກອົບຮົມຕ່າງໆ ເພື່ອພັດທະນາຂີດຄວາມສາມາດໃຫ້ສຳນັກງານສິ່ງເສີມຕ່າງໆທີ່ເຮັດວຽກຮ່ວມກັບຊາວກະສິກອນ[51]. ວ່າງບໍ່ດົນມານີ້ ອົງການອາຫານ ແລະ ການກະເສດ ຍັງໄດ້ພັດທະນາຫຼັກສູດການຝຶກອົບຮົມສຳລັບຜູ້ຈັດການສິ່ງເສີມອາວຸໂສ, ຜູ້ກຳນົດນະໂຍບາຍ ແລະ ບັນດານັກສຶກສາ ໃນດ້ານຕ່າງໆຂອງການປະຕິຮູບວຽກງານສິ່ງເສີມ, ບັນດາສິ່ງທ້າທາຍແບບໃໝ ແລະ ສິ່ງທ້າທາຍທີ່ກຳລັງເກີດຂຶ້ນໃນການດຳເນີນວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ. ມັນຍັງຮ້ອງໃຫ້ມີຄວາມພະຍາຍາມເພີ່ມຕື່ມເພື່ອເຊື່ອມໂຍງອົງຄວາມຮູ້ຕ່າງໆເຫຼົ່ານີ້ເຂົ້າໃສ່ການປະຕິຮູບຫຼັກສູດ ແລະ ການປ່ຽນແປງນະໂຍບາຍ ແລະ ການປະຕິບັດຢູ່ໃນລະດັບເຂດພາກພື້ນ ແລະ ລະດັບຊາດ.

ບັນດາຜູ້ໃຫ້ທຶນຕ່າງໆແມ່ນມີບົດບາດທີ່ສຳຄັນໃນການພັດທະນາຂີດຄວາມສາມາດຂອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳຢູ່ໃນຫຼາຍປະເທດດ້ວຍການສະໜອງການຊ່ວຍເຫຼືອທາງດ້ານເຕັກນິກແລະການເງິນ. ການໃຫ້ຜູ້ໃຫ້ທຶນໄດ້ມີສ່ວນຮ່ວມໃນວຽກງານນີ້ ຍັງຄົງສືບຕໍ່ຢ່າງລຽນຕິດຢູ່ໃນຫຼາຍປະເທດ ເຊິ່ງຈະປ່ຽນແປງໄປຕາມລັກສະນະຂອງການສ້າງຕັ້ງວິທີການທ້າງທາກະກຽມວຽກງານສິ່ງເສີມແບບໃໝ່ຢູ່ໃນເອີຣົບພາກຕາເວັນອອກ ແລະ ເອີຣົບກາງ ເພື່ອສິ່ງເສີມກົນລະຍຸດກະຈາຍຂີດຄວາມສາມາດລົງສູ່ທ້ອງຖິ່ນ ແລະ ຂັບເຄື່ອນໄປຕາມຄວາມຕ້ອງການທາງດ້ານວຽກງານສິ່ງເສີມຢູ່ໃນບັນດາປະເທດຕ່າງໆໃນອາຊີ ແລະ ລິເລີ່ມທົດລອງບັນດາແນວຄວາມຄິດດັ່ງກ່າວນັ້ນໃນການປະດິດຄິດສ້າງທາງດ້ານສະຖາບັນແບບໃໝ່ຢູ່ໃນປະເທດ ອາເມລິກາລາຕິນ ແລະ ເຂດສາຫາລາ ອາຟຼິກາ. ການປະກອບສ່ວນຕ່າງໆເຫຼົ່ານີ້ແມ່ນຍັງຄົງມີຄວາມສຳຄັນຫຼາຍເພື່ອພັດທະນາຂີດຄວາມສາມາດຂອງວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ. ແຕ່ເຖິງຢ່າງໃດກໍຕາມ, ຫຼາຍໆສິ່ງກໍສາມາດເຮັດໃຫ້ບັນລຸເປົ້າໝາຍໄດ້ໂດຍຜ່ານການຍົກລະດັບການລົງທຶນໃຫ້ມີຄວາມເຂັ້ມແຂງ ແລະ ມີຄວາມຍືນຍົງໃນການພັດທະນາຂີດຄວາມສາມາດຂອງລັດຖະບານ ແລະ ບັນດາຜູ້ດຳເນີນການທ້ຽພົດທີ່ມີສ່ວນກ່ຽວຂ້ອງໃນວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ ແລະ ບັນດາອົງການຈັດຕັ້ງອື່ນໆຢູ່ໃນລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ. ຂັ້ນຕອນດັ່ງກ່າວນີ້ ຄວນຖອດຖອນຈາກບົດຮຽນທີ່ໄດ້ຈາກຄວາມພະຍາຍາມໃນໄລຍະຜ່ານມາໃນການພັດທະນາຂີດຄວາມສາມາດ (ເບິ່ງກ່ອງທີ 3).

ກ່ອງທີ 3: ພາບລວມຈາກບັນດາແນວຄວາມຄິດໃນການພັດທະນາຂີດຄວາມສາມາດ

ຄວາມພະຍາຍາມໃນການພັດທະນາຂີດຄວາມສາມາດໂດຍລວມແມ່ນມີປະຫວັດຄວາມເປັນມາຢ່າງຍາວນານ. ມາເຖິງປະຈຸບັນນີ້ເຫັນວ່າມີຈຳນວນເງິນຫຼາຍຕື້ໂດລາສະຫະລັດທີ່ໄດ້ໃຊ້ຈ່າຍເຂົ້າໃນການສ້າງຂີດຄວາມສາມາດໂດຍການໃຫ້ຄວາມຊ່ວຍເຫຼືອ/ການຮ່ວມມືທາງດ້ານເຕັກນິກໃນການພັດທະນາບັນດາປະເທດຕ່າງໆ. ການທົບທວນຄືນເບິ່ງຄວາມມີປະສິດທິພາບຂອງການຮ່ວມມືທາງດ້ານວິຊາການໄດ້ພິສູດໃຫ້ເຫັນວ່າ "ການຮ່ວມມືທາງດ້ານວິຊາການ" ມີປະສິດທິພາບໜ້ອຍກວ່າໃນການພັດທະນາບັນດາສະຖາບັນທ້ອງຖິ່ນ ຫລື ການເສີມສ້າງຂີດຄວາມສາມາດໃນທ້ອງຖິ່ນໃຫ້ມີຄວາມເຂັ້ມແຂງ; ແລະ ໄດ້ມີການໃຊ້ຈ່າຍໃນມູນຄ່າທີ່ສູງ, ຂັບເຄື່ອນໂດຍຜູ້ໃຫ້ທຶນຊ່ວຍເຫຼືອ, ມັກເພີ່ມການເອື່ອຍອີງໃສ່ແຕ່ຊ່ຽວຊານຕ່າງປະເທດ ແລະ ບໍ່ເປັນໄປຕາມບູລິມະສິດແຫ່ງຊາດ[52]. ການຄັດເລືອກເອົາກິດຈະກຳທີ່ສາມາດມອງເຫັນຜົນ (ຕາມຄວາມມັກຄວາມຕ້ອງການຂອງບັນດາປະເທດຜູ້ໃຫ້ທຶນ) ແລະ ຄວາມເພິ່ງພໍໃຈຂອງເຂົາເຈົ້າທີ່ເນັ້ນໃສ່ຜົນໄດ້ຮັບທີ່ເປັນຮູບປະທຳ ນຳໄປສູ່ການເໜັ້ນໜັກໃສ່ບູລິມະສິດຂອງປະເທດເຈົ້າພາບໜ້ອຍກວ່າ ແລະ ມີກິດຈະກຳການພັດທະນາຂີດຄວາມສາມາດທີ່ເປັນຮູບປະທຳທີ່ໜ້ອຍກວ່າ[53]. ການພັດທະນາຂີດຄວາມສາມາດຍັງໄດ້ຮັບຜົນກະທົບຈາກການຂາດແຄນການອະທິບາຍຄວາມໝາຍທີ່ຊັດເຈນ, ບໍ່ມີກອບແຜນວຽກທີ່ມີຄວາມກົມກືນກັນ ແລະ ບໍ່ມີການຕິດຕາມກວດກາຜົນໄດ້ທີ່ມີປະສິດທິພາບ[54].

ໃນໄລຍະທົດສະວັດທີ່ຜ່ານມາ ໄດ້ພົບເຫັນມີການປັບປຸງຄວາມເຂົ້າໃຈໃຫ້ດີຂຶ້ນກ່ຽວກັບວິທີການພັດທະນາຂີດຄວາມສາມາດ ແລະ ບາງພາບລວມທີ່ໄດ້ມາຈາກການທົບທວນຄືນ ແລະ ການປະເມີນຜົນກ່ຽວກັບເລື່ອງນີ້ແມ່ນມີຄືດັ່ງນີ້:

1. **ການວິເຄາະ**: ການປະເມີນຂີດຄວາມສາມາດແມ່ນບູລິມະສິດອັນທຳອິດທີ່ຈະຕ້ອງໄດ້ປະຕິບັດເພື່ອເຮັດການຕັດສິນໃຈວ່າ ການສະໜັບສະໜຸນຕໍ່ການພັດທະນາຂີດຄວາມສາມາດຈະມີຄວາມເປັນໄປໄດ້ແນວໃດ ແລະ ຖ້າມີການສະໜັບສະໜຸນຕໍ່ການພັດທະນາຂີດຄວາມສາມາດແລ້ວມັນຈະເປັນໄປໄດ້ ຫຼື ບໍ່ໄດ້. ການວິເຄາະຄວນເລີ່ມຕົ້ນຢູ່ໃນລະດັບຂອງລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ ແລະ ສິ່ງທີ່ເປັນເລື່ອງທຳທ່ຽງແມ່ນການກຳນົດ ແລະ ການສ້າງການເຊື່ອມໂຍງທີ່ມີຄວາມອ່ອນແອໃຫ້ມີຄວາມເຂັ້ມແຂງ. ການວິເຄາະບັນຫາສ່ວນໃຫຍ່ກ່ຽວກັບເລື່ອງດັ່ງກ່າວນີ້ຄວນຈະເປັນການວິເຄາະບັນຫາດ້ວຍຕົວເອງ. ພະຍາຍາມໃຫ້ເຂົ້າໃຈວ່າເປັນຫຍັງ ລະບົບຈຶ່ງເປັນແນວນີ້ ຫຼາຍກວ່າທີ່ຈະເບິ່ງວ່າ ເປັນຫຍັງລະບົບຈຶ່ງໃຊ້ການບໍ່ໄດ້[55].
2. **ຄວາມເປັນເຈົ້າການ**: ຖ້າຫາກວ່າ ບັນດາປະເທດກຳລັງພັດທະນາຕ່າງໆ ບໍ່ເປັນເຈົ້າການຕໍ່ແຜນງານການຮ່ວມມືທາງດ້ານວິຊາການຢ່າງເຕັມສ່ວນ, ເຖິງແມ່ນວ່າໄດ້ຕົກລົງເຫັນດີກ່ຽວກັບຈຸດປະສົງຕ່າງໆເປັນທີ່ຮຽບຮ້ອຍແລ້ວ ແລະໄດ້ສ້າງເນື້ອໃນຂຶ້ນເປັນຮູບຮ່າງກໍ່ຕາມ, ພວກເຂົາກໍຈະບໍ່ມີຄວາມມຸ້ງໝັ້ນເພື່ອເຮັດໃຫ້ບັນດາແຜນງານຕ່າງໆເຫຼົ່ານັ້ນດຳເນີນການໄດ້[56,57].
3. **ຄວາມຍືນຍົງ**: ເມື່ອກົນລະຍຸດແບບໃໝ ແລະ ການປະດິດສ້າງສິ່ງໃໝ່ໆກຳລັງຖືກນຳເຂົ້າມານຳສະເໜີຢູ່ໃນການສ້າງຂີດຄວາມສາມາດ ແລະ ເລື່ອງຂອງຄວາມຍືນຍົງຕ່າງໆນັ້ນ ແມ່ນຈຳເປັນຕ້ອງໄດ້ມີການຄົ້ນຄວ້າພິຈາລະນາແຕ່ຫົວທີໃນການນຳສະເໜີບັນດາແນວຄວາມຄິດລິເລີ່ມຕ່າງໆ[58]. ການອອກແບບໂຄງການຄວນດຳເນີນການບົນພື້ນຖານຂອງການປະເມີນເບິ່ງຊັບພະຍາກອນຕົວຈິງພາຍໃນ ທີ່ມີຢູ່ ເພື່ອເຮັດໃຫ້ກິດຈະກຳຂອງໂຄງການມີຄວາມຍືນຍົງ[59]. ນອກຈາກການມີຊັບພະຍາກອນດ້ານວັດຖຸແລ້ວ, ການມີຄວາມຍືນຍົງກໍຈະຂຶ້ນຢູ່ກັບບັນດາປັດໃຈຕ່າງໆທາງດ້ານສະຖາບັນ, ວັດທະນາທຳ ແລະ ສິ່ງຈູງໃຈຕ່າງໆ
4. **ບໍ່ຈຳເປັນຕ້ອງຜ່ານໂຄງການແບບທາງການ**: ການພັດທະນາຂີດຄວາມສາມາດ ໃຫ້ແມ່ນການສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳບໍ່ຈຳເປັນທີ່ຈະຕ້ອງໄດ້ຮັບການຊ່ວຍເຫຼືອຈາກພາຍນອກສະເໝີໄປ ເພື່ອພັດທະນາຈຸດປະສົງສະເພາະດ້ານ . ການພັດທະນາຂີດຄວາມສາມາດແມ່ນສາມາດດຳເນີນການ ໄດ້ດ້ວຍການຮຽນຮູ້ຈາກການເຮັດຕົວຈິງ, ການໄປເຂົ້າຮ່ວມ, ການສັງເກດການ ແລະ ການສຶມທຶບປະສົບການຕ່າງໆ. ນອກຈາກນັ້ນແລ້ວ ອາດມາໃນຮູບແບບຫຼື ຜະລິດຕະພັນໃດໜຶ່ງ ເຊິ່ງນຳໃຊ້ໃນການພັດທະນາ ການສິ່ງເສີມ ຫຼື ການຄົ້ນຄ້ວາວິໃຈ[60].
5. **ຂັ້ນຕອນໄລຍະຍາວ**: ການພັດທະນາຂີດຄວາມສາມາດແມ່ນຂະບວນທີ່ຍາວນານ ໂດຍສະເພາະຢູ່ໃນບ່ອນທີ່ຂີດຄວາມສາມາດໃນເບື້ອງຕົ້ນມີຄວາມອ່ອນແອຫຼາຍ. ການປັບປຸງໃຫ້ດີຂຶ້ນຮຽກຮ້ອງໃຫ້ມີຄວາມມຸ້ງໝັ້ນທີ່ຈະສືບຕໍ່ດຳເນີນການພາຍຫຼັງການສິ້ນສຸດການໄດ້ຮັບທຶນຊ່ວຍເຫຼືອຈາກຜູ້ໃຫ້ທຶນ[61].



5. ຄຳສະເໜີ ແນະສຳລັບການພັດທະນາຂີດຄວາມສາມາດໃນວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳ

ການສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳມີບົດບາດທີ່ສຳຄັນໃນການພັດທະນາການຜະລິດກະສິກຳ. ແຕ່ເຖິງຢ່າງໃດກໍຕາມ, ສິ່ງເຫຼົ່ານີ້ຈຳເປັນຕ້ອງມີຂີດຄວາມສາມາດອັນໃໝ່ເພື່ອຈັດການກັບບັນດາສິ່ງທ້າທາຍທີ່ມີຢູ່ໃນປະຈຸບັນໃນວຽກງານກະສິກຳ ແລະ ເພື່ອປະກອບສ່ວນທີ່ດີກວ່າຕໍ່ການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ - ຮຽກຮ້ອງໃຫ້ມີຂະບວນການເຮັດວຽກຮ່ວມກັນ ແລະ ມີການໄຫຼວຽນຂອງຄວາມຮູ້ລະຫວ່າງບັນດາຜູ້ດຳເນີນການຢູ່ໃນລະດັບວິຖກວ້າງໃນລະບົບການປະດິດສິ່ງໃໝ່ໆທາງດ້ານກະສິກຳ. ວຽກງານການສົ່ງເສີມໄດ້ກາຍມາເປັນຂະບວນການທີ່ມີຫຼາຍຝ່າຍເຮັດວຽກນຳກັນ ໂດຍມີການເພີ່ມຂຶ້ນຂອງການມີສ່ວນຮ່ວມຈາກຂະແໜງການທຸລະກິດເອກະຊົນ (ຂາເຂົ້າກະສິກຳ, ທຸລະກິດກະສິກຳ, ການບໍລິການທາງດ້ານການເງິນ), ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ (ທາງພາຍໃນ ແລະ ຕ່າງປະເທດ), ກຸ່ມຜູ້ຜະລິດ, ສະຫະກອນ ແລະ ສະມາຄົມ, ບັນດາທີ່ປຶກສາຕ່າງໆ (ແບບເອກະລາດ ແລະ ຈຳນວນທີ່ຕິດພັນກັບທຸລະກິດກະສິກຳ/ສະມາຄົມຜູ້ຜະລິດ), ການບໍລິການຂໍ້ມູນຂ່າວສານ, ການປະຊາສຳພັນ ແລະ ການບໍລິການດ້ານເຕັກໂນໂລຊີຂັ້ນຕົ້ນ. ເພື່ອເປັນການປະກອບສ່ວນທີ່ດີກວ່າເຂົ້າໃນການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ, ວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳຄວນດຳເນີນບົດບາດຢ່າງເປັນຂະບວນການຢູ່ໃນວິຖກວ້າງ. ສິ່ງເຫຼົ່ານີ້ແມ່ນລວມມີທັງການພັດທະນາເຄືອຂ່າຍ, ການຈັດຕັ້ງກຸ່ມຜູ້ຜະລິດ, ການອຳນວຍຄວາມສະດວກໃຫ້ມີຊ່ອງທາງເຂົ້າເຖິງສິນເຊື່ອ, ການບໍລິການປັດໃຈນຳເຂົ້າ ແລະ ຜົນໄດ້ຮັບ, ຈັດເວທີສົນທະນາກ່ຽວກັບການປະດິດສ້າງສິ່ງໃໝ່ໆ, ສົ່ງເສີມຄວາມເທົ່າທຽມກັນທາງດ້ານບົດບາດຍິງ-ຊາຍ ແລະ ການເຜີຍແຜ່ຄວາມຮູ້ອັນໃໝ່ໂດຍຜ່ານການຝຶກອົບຮົມ ແລະ ການສາທິດຕ່າງໆ. ເພື່ອເຮັດໃຫ້ດຳເນີນບົດບາດເຫຼົ່ານີ້ໄດ້, ການສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳຈຳເປັນຕ້ອງມີຂີດຄວາມສາມາດອັນໃໝ່ຢູ່ໃນລະດັບອົງການຈັດຕັ້ງ ແລະ ສະພາບແວດລ້ອມທີ່ເອື້ອອຳນວຍ (ລະບົບ) ຢູ່ທຸກລະດັບ.

ໃນລະດັບບຸກຄົນ, ການສົ່ງເສີມ ແລະ ບໍລິການໃຫ້ຄຳປຶກສາດ້ານກະສິກຳຈຳເປັນຕ້ອງມີພະນັກງານທີ່ມີຄວາມເຂົ້າໃຈດີກ່ຽວກັບຄວາມຮູ້ທາງດ້ານເຕັກນິກວິຊາການ ບວກກັບທັກສະຕ່າງໆເພື່ອຄຸ້ມຄອງຂະບວນການທາງສັງຄົມ. ຢູ່ໃນລະດັບອົງການຈັດຕັ້ງ, ການສົ່ງເສີມ ແລະ ບໍລິການໃຫ້ຄຳປຶກສາດ້ານກະສິກຳຄວນມີຂີດຄວາມສາມາດຢູ່ໃນລະບົບ ແລະ ຂັ້ນຕອນຕ່າງໆ ເພື່ອຄຸ້ມຄອງຊັບພະຍາກອນມະນຸດ ແລະ ຊັບພະຍາກອນທາງການເງິນ, ສະຖາບັນຕ່າງໆ ເພື່ອອຳນວຍຄວາມສະດວກໃຫ້ແກ່ຄູ່ຮ່ວມງານ ແລະ ການຮຽນຮູ້, ກອບແຜນວຽກເພື່ອຈັດການກັບປະເດັນຕ່າງໆທາງດ້ານສະຖາບັນ, ກົດໝາຍ ແລະ ລະບຽບການຕ່າງໆ. ຢູ່ໃນລະດັບສະພາບແວດລ້ອມທີ່ເອື້ອອຳນວຍ, ຂີດຄວາມສາມາດສຳລັບການເຮັດວຽກຮ່ວມກັນ, ການຮຽນຮູ້ ແລະ ການປັບຕົວໃຫ້ເຂົ້າກັບສະພາບໃນທ້ອງຖິ່ນແມ່ນມີຄວາມສຳຄັນ. ເຊັ່ນດຽວກັນ, ຍຸດທະສາດໃນການປະຕິຮູບຄວນນຳສະເໜີໃຫ້ເຫັນຢ່າງຊັດເຈນກ່ຽວກັບການປ່ຽນແປງທາງດ້ານສະຖາບັນ ແລະ ນະໂຍບາຍທີ່ເສີມສ້າງຄວາມສາມາດຂອງບັນດາຜູ້ດຳເນີນການຕ່າງໆຢູ່ໃນລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳເພື່ອເຮັດວຽກໃຫ້ເປັນລະບົບ. ຢູ່ໃນທຸກລະດັບທັງໝົດ ຄວນມີກົນໄກຕ່າງໆເພື່ອເບິ່ງບັນຫາດ້ານບົດບາດຍິງ-ຊາຍ ແລະ ຊອງທາງເພື່ອໃຫ້ແມ່ຍິງແລະຜູ້ຊາຍເຂົ້າເຖິງການບໍລິການເທົ່າທຽມກັນ; ກົນໄກເພື່ອສົ່ງເສີມການມີສ່ວນຮ່ວມຂອງໄວໜຸ່ມໃນວຽກງານກະສິກຳ; ແລະ ບັນດາໂອກາດຕ່າງໆເພື່ອນຳໃຊ້ຂໍ້ມູນຂ່າວສານ, ການປະຊາສຳພັນ ແລະ ເຕັກໂນໂລຊີຂັ້ນພື້ນຖານ ເພື່ອປັບປຸງການດຳເນີນວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ. ເພື່ອພັດທະນາຂີດຄວາມສາມາດອັນໃໝ່ໃນການສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ, ມັນຈຳເປັນຕ້ອງໄດ້ລິເລີ່ມການດຳເນີນງານຢູ່ໃນລະດັບຊາດ, ລະດັບເຂດພາກພື້ນ ແລະ ລະດັບໂລກ. ການດຳເນີນງານ ແລະ ຜູ້ດຳເນີນການຕ່າງໆເຫຼົ່ານີ້ແມ່ນໄດ້ໃຫ້ຄຳສະເໜີແນະໄວ້ຢູ່ຂ້າງລຸ່ມດັ່ງນີ້:

ການດຳເນີນງານ ແລະ ຜູ້ດຳເນີນງານ

5.1 ລະດັບປະເທດ

ການວິເຄາະ ແລະ ການປະຕິຮູບ

N1. ວິເຄາະບົດບາດ ໜ້າທີ່ໃນລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ ແລະ ການສັງເຄາະ ສັງຮວມ,ແລກປ່ຽນຂໍ້ມູນຜົນການສຶກສາທີ່ມີຢູ່ໃນປະຈຸບັນ (ດຳເນີນການໂດຍ: ອົງກອນຜູ້ຊ່ຽວຊານ/ທີ່ປຶກສາໂດຍມີການປຶກສາຫາລືຮ່ວມກັບບັນດາພາກສ່ວນທີ່ກ່ຽວຂ້ອງ).

N2. ດຳເນີນການສຳຫຼວດຜູ້ສະໜອງບໍລິການ ໃນວຽກສົ່ງເສີມກະສິກຳຢູ່ພາຍໃນປະເທດ, ວິເຄາະຮູບແບບການສະໜອງວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາທີ່ມີຢູ່ໃນປະຈຸບັນ ແລະ ສືບຕໍ່ດຳເນີນການຄົ້ນຄ້ວາວິໃຈເພື່ອສະໜັບສະໜຸນການປະຕິຮູບ ໂດຍມີຫຼັກຖານອ້າງອີງທີ່ໜັກແໜ້ນ ແລະ ເຜີຍແຜ່ນະໂຍບາຍກ່ຽວກັບວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ (ດຳເນີນການໂດຍ: ລັດຖະບານ ໂດຍຜ່ານກະຊວງກະສິກຳ ແລະ ປ່າໄມ້; ເວທີສົນທະນາ ແລະ ເຄືອຂ່າຍວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາ, ມະຫາວິທະຍາໄລ, ສະພາຄົ້ນຄ້ວາ ແລະ ສູນຄົ້ນຄ້ວານະໂຍບາຍອື່ນໆ, ອົງການຈັດຕັ້ງຊາວກະສິກອນ, ອົງການອາຫານ ແລະ ການກະເສດ (FAO) ແລະ ອົງການ CGIAR.

N3. ດຳເນີນການດ້ວຍຕົນເອງເພື່ອວິເຄາະຂີດຄວາມສາມາດດ້ານວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ (ດຳເນີນການໂດຍ: ຜູ້ບໍລິຫານຄຸ້ມຄອງ, ເຄືອຂ່າຍ, ເວທີແລກປ່ຽນຄວາມຄິດເຫັນວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳທີ່ມີຜູ້ອຳນວຍຄວາມສະດວກໃຫ້ການສະໜັບສະໜຸນ)

ການເປັນຄູ່ຮ່ວມງານ ແລະ ເຄືອຂ່າຍ

N4. ສ້າງເວທີສົນທະນາແບບສ້າງສັນ, ດຳເນີນການປະເມີນຄວາມຕ້ອງການ ແລະ ຈັດຕັ້ງປະຕິບັດໂຄງການລິເລີ່ມເພື່ອທົດລອງວິທີການໃໝ່ ແລະ ສົ່ງເສີມການຮຽນຮູ້ຈາກສິ່ງຕ່າງໆເຫຼົ່ານີ້ (ດຳເນີນການໂດຍ: ອົງກອນເຮັດວຽກສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ ແລະ ຜູ້ດຳເນີນການອື່ນໆຢູ່ໃນລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ ໂດຍສະເພາະແມ່ນມະຫາວິທະຍາໄລ ແລະ ສູນຄົ້ນຄ້ວາຕ່າງໆ)

N5. ຈັດຕັ້ງການປະສານສົມທົບ ແລະ ການເປັນຄູ່ຮ່ວມງານຮ່ວມກັບບັນດາຜູ້ດຳເນີນງານຕ່າງໆຢູ່ໃນລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ ເຊັ່ນດຽວກັນກັບຜູ້ດຳເນີນງານຢູ່ໃນຕ່ອງໂສ້ມູນຄ່າຂອງສິນຄ້າ ດ້ວຍການຄົ້ນຄ້ວາ ແລະ ປະຕິບັດແບບທັງຮຽນທັງເຮັດຕົວຈິງ (ດຳເນີນການໂດຍ: ສະພາຄົ້ນຄ້ວາ ແລະ ສົ່ງເສີມ, ສູນຝຶກອົບຮົມ ໂດຍການປະສານສົມທົບກັບກົມສົ່ງເສີມ ແລະ ພາກສ່ວນບໍລິການໃຫ້ຄຳປຶກສາດ້ານກະສິກຳ)

N6. ສະໜັບສະໜຸນການສ້າງຕັ້ງເຄືອຂ່າຍແຫ່ງຊາດຂອງຜູ້ສະໜອງວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳຢູ່ໃນລະດັບຕ່າງໆ ແລະ ການສ້າງກຳລັງແຮງໃນບັນດາເຄືອຂ່າຍ (ດຳເນີນການໂດຍ: ກົມສົ່ງເສີມກະສິກຳ ແລະ ສະຫະກອນ, ກະຊວງກະສິກຳ ແລະ ປ່າໄມ້, ບັນດາຜູ້ສະໜອງວຽກງານສົ່ງເສີມ

ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ, ນັກວິຊາຊີບຝ່າຍປະຊາສັງຄົມໃນວຽກງານສົ່ງເສີມ, ເຄືອຂ່າຍວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນເຂດພາກພື້ນ ແລະ ມູນນິທິເອກະຊົນ)

ການຊີ້ນຳທາງດ້ານວິຊາການ

N7. ສ້າງຄວາມເຂັ້ມແຂງໃນການຊີ້ນຳດ້ານວິຊາການໃຫ້ແກ່ວຽກສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳໂດຍອີງການຈັດຕັ້ງທີ່ມີສ່ວນກ່ຽວຂ້ອງໃນການຄົ້ນຄ້ວາວິໃຈໂດຍຜ່ານບັນດາແນວຄວາມຄິດລິເລີ່ມໃນການຄົ້ນຄ້ວາ - ການສົ່ງເສີມຮ່ວມກັນ (ດຳເນີນການໂດຍ: ສະພາຄົ້ນຄ້ວາ, ມະຫາວິທະຍາໄລ, ພາກເອກະຊົນ, ອົງການຈັດຕັ້ງທີ່ບໍ່ໄດ້ສັງກັດລັດ)

N8. ສຸມໃສ່ ການພັດທະນາສະຖາບັນຂອງຊາວກະສິກອນ ໂດຍການເຮັດວຽກຜ່ານອົງການຈັດຕັ້ງຂອງຜູ້ຜະລິດຢູ່ໃນຫຼາຍລະດັບ (ດຳເນີນການໂດຍ: ກົມສົ່ງເສີມກະສິກຳ ແລະ ສະຫະກອນ, ກະຊວງກະສິກຳ ແລະ ປ່າໄມ້, ຜູ້ສະໜອງວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ)

ການຕິດຕາມກວດກາ ແລະ ການຮຽນຮູ້

N9. ສ້າງກົນໄກເພື່ອເກັບກຳຜົນໄດ້ຮັບຕ່າງໆດ້ວຍການຕິດຕາມກວດກາ, ການສະທ້ອນຄືນ, ການຮຽນຮູ້ ແລະ ການຕີລາຄາປະເມີນຜົນຢ່າງເປັນປົກກະຕິ; ທົບທວນຄືນລະບົບ ແລະ ຂະບວນການຕ່າງໆ; ສ້າງສາຍໃຍການປະສານງານ ແລະ ການຮ່ວມມືປະຕິບັດລະຫວ່າງກົມສົ່ງເສີມ ແລະ ພາກສ່ວນບໍລິການໃຫ້ຄຳປຶກສາດ້ານກະສິກຳ (ດຳເນີນການໂດຍ: ເວທີສົນທະນາລະຫວ່າງພາກສ່ວນເຮັດການສົ່ງເສີມ-ບໍລິການໃຫ້ຄຳປຶກສາດ້ານກະສິກຳຕ່າງໆ ແລະ ເຄືອຂ່າຍ ທີ່ມີຜູ້ອຳນວຍຄວາມສະດວກໃຫ້ການສະໜັບສະໜຸນ; ອົງການຈັດຕັ້ງຂອງຊາວກະສິກອນ)

ການຝຶກອົບຮົມ ແລະ ການສຶກສາ

N10. ສ້າງຕັ້ງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ສູນຝຶກອົບຮົມຕ່າງໆ; ຕ້ອງກຳນົດຄວາມສາມາດສະເພາະດ້ານໃຫ້ຊັດເຈນເພື່ອສະໜັບສະໜຸນການພັດທະນາຂີດຄວາມສາມາດ; ຍົກລະດັບການຄຸ້ມຄອງບໍລິຫານສູນຝຶກອົບຮົມກ່ຽວກັບການບໍລິການຈັດການ ແລະ ໂຮງຮຽນບໍລິຫານທຸລະກິດ ເພື່ອຈັດຕັ້ງແຜນການພັດທະນາຂີດຄວາມສາມາດໃຫ້ສະເພາະບຸກຄົນໂດຍສະເພາະແມ່ນກ່ຽວກັບການຝຶກສອນ, ການເອື້ອອຳນວຍ, ການນຳພາ, ການສ້າງວິໃສທັດ, ການນຳໃຊ້ຂໍ້ມູນ ICT ໃນບ່ອນທີ່ມີເງື່ອນໄຂ (ດຳເນີນການໂດຍ: ກະຊວງກະສິກຳ,ກົມສົ່ງເສີມກະສິກຳ ແລະ ສະຫະກອນ ໂດຍການປະສານສົມທົບກັບສະຖາບັນການຝຶກອົບຮົມ/ການບໍລິຫານຈັດການ).

N11. ພັດທະນາຫຼັກສູດການຍົກລະດັບວິຊາຊີບ, ການສຶກສາຕໍ່ເນື່ອງ ແລະ ທັກສະຄວາມສາມາດຂອງບຸກຄະລາກອນຢູ່ທີ່ເຮັດວຽກສົ່ງເສີມ-ບໍລິການໃຫ້ຄຳປຶກສາດ້ານກະສິກຳແລະ ຊາວກະສິກອນ ໂດຍການດຳເນີນການທົບທວນຄືນຫຼັກສູດຢ່າງໜ້ອຍສຸດແມ່ນໜຶ່ງຄັ້ງຕໍ່ທຸກໆ ຫ້າປີ (ດຳເນີນການໂດຍ: ວິທະຍາໄລ, ສູນຄົ້ນຄວ້າ,ສູນຝຶກອົບຮົມ ແລະອົງການຈັດຕັ້ງທີ່ບໍ່ໄດ້ສັງກັດລັດ ໂດຍການປະສານສົມທົບກັບກົມສົ່ງເສີມກະສິກຳ ແລະ ພາກສ່ວນບໍລິການໃຫ້ຄຳປຶກສາດ້ານກະສິກຳ, ອົງການຈັດຕັ້ງຊາວກະສິກອນ ແລະ ອົງການຈັດຕັ້ງຕ່າງໆເຊັ່ນ: ອົງການອາຫານ ແລະ ການກະເສດ , ອົງການ GIZ)

ການສະໜອງທຶນ

N12. ປັບປຸງກົນໄກການສະໜອງທາງດ້ານການເງິນໃຫ້ມີຄວາມຍືນຍົງສຳລັບທັງໝົດທຸກຂະແໜງການຂອງວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ (ດຳເນີນການໂດຍ: ລັດຖະບານຂັ້ນສູນກາງ, ຂັ້ນແຂວງ ແລະ ລະດັບທ້ອງຖິ່ນ, ເຄືອຂ່າຍວຽກສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ, ຜູ້ໃຫ້ທຶນ, ພາກເອກະຊົນ, ອົງການຈັດຕັ້ງຊາວກະສິກອນ, ມູນນິທິເອກະຊົນ)

5.2 ລະດັບພາກພື້ນ

R1. ສະໜັບສະໜຸນການສ້າງຕັ້ງເຄືອຂ່າຍໃນເຂດພາກພື້ນ ແລະ ອະນຸພາກພື້ນ ພ້ອມທັງເຮັດໃຫ້ເຂົາເຈົ້າມີສ່ວນຮ່ວມໃນການອອກແບບ, ການຈັດຕັ້ງປະຕິບັດ ແລະ ການຕີລາຄາປະເມີນຜົນໜ້າວຽກຂອງການສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ; ສ້າງຄວາມເຂັ້ມແຂງໃຫ້ບັນດາເຄືອຂ່າຍດັ່ງກ່າວຢູ່ໃນລະດັບພາກພື້ນ ແລະ ອະນຸພາກພື້ນທີ່ມີຢູ່ໃນປະຈຸບັນ (ດຳເນີນການໂດຍ: ອົງການປ່ອຍເງິນກູ້ຢືມໃນເຂດພາກພື້ນ ເຊັ່ນ: ADB, AFDB, IADB, EBRD ແລະ ອື່ນໆ; ກຸ່ມເສດຖະກິດໃນເຂດພາກພື້ນເຊັ່ນ: ປະຊາຄົມເສດຖະກິດໃນເຂດພາກພື້ນ ຕົວຢ່າງ: ອົງການ SADC ຢູ່ໃນປະເທດ ອາຟຼິກາ, ປະເທດອາຊຽນໃນເຂດ ອາຊີ ແລະ ປາຊີຟິກສະມາຄົມ SAARC ຢູ່ໃນອາຊີຕາເວັນຕົກ

R2. ເກັບກຳ ແລະ ຮວບຮ່ວມຫຼັກຖານອ້າງອີງໃນດ້ານຕ່າງໆຂອງວຽກງານສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳຢູ່ໃນເຂດພາກພື້ນ ແລະ ໃຫ້ການສະໜັບສະໜຸນການພັດທະນາການເຮັດວຽກຮ່ວມກັນ ແລະ ການ ເປັນຄູ່ຮ່ວມງານ (ດຳເນີນການໂດຍ: ເຄືອຂ່າຍການສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນເຂດພາກພື້ນ; ອົງການອາຫານ ແລະ ການກະເສດ, CGIAR, ມະຫາວິທະຍາໄລໃນເຂດພາກພື້ນ, ເຄືອຂ່າຍການສຶກສາ ແລະ ການຄົ້ນຄ້ວາວິໃຈ ຕົວຢ່າງ: African Network for Agriculture, Agroforestry and Natural Resources Education (ANAFEF), Regional Universities Forum for Capacity Building in Agriculture (RUFORUM) ຢູ່ໃນປະເທດ ອັບຟຼິກາ, AGRINATURA/Agreenium ຢູ່ທະວີບ ຢູຣົບ, Asia-Pacific Association of Agricultural Research Institutions (APAARI) ແລະ Forum for Agricultural Research in Africa (FARA); ອົງການຈັດຕັ້ງຊາວກະສິກອນໃນເຂດພາກພື້ນ.

R3. ກຳນົດ ແລະ ສະເໜີຈຸດຢືນ ດ້ານນະໂຍບາຍ ເພື່ອໃຫ້ເກີດຜົນຕໍ່ຂະບວນການ ກຳນົດນະໂຍບາຍສະໜັບສະໜຸນວຽກສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ (ດຳເນີນການໂດຍ: ເຄືອຂ່າຍພາກພື້ນກ່ຽວກັບວຽກສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ ໂດຍປະສານສົມທົບກັບອົງກອນນະໂຍບາຍໃນເຂດພາກພື້ນ, ອົງການຈັດຕັ້ງຊາວກະສິກອນໃນເຂດພາກພື້ນ, ນັກຄົ້ນຄ້ວາຢູ່ໃນມະຫາວິທະຍາໄລ ແລະ ສູນຄົ້ນຄ້ວາຢູ່ໃນເຂດພາກພື້ນ).

R4. ພັດທະນາ ແລະ ສົ່ງເສີມຄວາມຮູ້ອັນໃໝ່, ກອບວຽກ ແລະ ວິທີການຕ່າງໆ ທີ່ກ່ຽວຂ້ອງກັບການສົ່ງເສີມ ແລະ ການບໍລິການໃຫ້ຄຳທີ່ປຶກສາດ້ານກະສິກຳ ແລະການສະໜັບສະໜຸນການຍົກລະດັບ ແລະ ການຂະຫຍາຍອອກສູ່ວົງກວ້າງ (ດຳເນີນການໂດຍ: ເຄືອຂ່າຍການສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳໃນເຂດພາກພື້ນໂດຍການປະສານສົມທົບກັບອົງການຈັດຕັ້ງຊາວກະສິກອນ, ນັກຄົ້ນຄ້ວາ ແລະ ນັກພັດທະນາ; ວິທະຍາໄລ ແລະ ສູນການສຶກສາດ້ານວິຊາການໃນເຂດພາກພື້ນ (ຕົວຢ່າງ: RUFORUM ຢູ່ໃນປະເທດ ອັບຟຼິກາ; Science and Education for Agriculture and Development (SEARCA) ຢູ່ໃນເຂດອາຊີຕາເວັນອອກສ່ຽງໃຕ້, University of the West Indies (UWI)/ Caribbean Community (CARICOM) ຢູ່ໃນ ຄາຣິບຽນ).

R5. ຈັດຕັ້ງເວທີການປຶກສາຫາລືຢູ່ໃນລະດັບພາກພື້ນ ແລະ ອະນຸພາກພື້ນ ແລະ ກຳນົດແຜນງານຝຶກອົບຮົມຕ່າງໆ ເພື່ອແລກປ່ຽນບົດຮຽນປະສົບການ ແລະ ສ້າງເງື່ອນໄຂສະພາບແວດລ້ອມທີ່ເອື້ອອຳນວຍ (ດຳເນີນການໂດຍ: ເຄືອຂ່າຍການສົ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາ ຂອງພາກພື້ນ ໂດຍມີການສະໜັບສະໜຸນຈາກບັນດາຜູ້ດຳເນີນງານຢູ່ໃນລະບົບການປະດິດສ່ິງໃໝ່ໆທາງດ້ານກະສິກຳ).

5.3 ລະດັບໂລກ

G1. ສະໜັບສະໜຸນໃຫ້ແກ່ກອງປະຊຸມລະດັບໂລກກ່ຽວກັບການບໍລິການໃຫ້ຄຳປຶກສາແນະນຳດ້ານກະສິກຳໃນຊຸມນະບົດ Global Forum

for Rural Advisory Services (GFRAS) ແລະ ຜູ້ດຳເນີນງານໃນລະດັບສາກົນອື່ນໆ ເພື່ອໃຫ້ທິດ ແລະ ຊີ້ນຳການສ້າງເຄືອຂ່າຍ, ການພັດທະນາຂີດຄວາມສາມາດ ແລະ ການສະໜັບສະໜຸນດ້ານນະໂຍບາຍສຳລັບວຽກງານສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາຢູ່ໃນລະດັບໂລກ (ດຳເນີນການໂດຍ: ຜູ້ໃຫ້ທຶນ ແລະ ອົງການຈັດຕັ້ງສາກົນທີ່ມີສ່ວນກ່ຽວຂ້ອງກັບການພັດທະນາກະສິກຳ ແລະ ຊົນນະບົດ ເຊັ່ນ: ທະນາຄານໂລກ, ສະຫະພາບຢູໂຣບ, ອົງການອາຫານ ແລະ ການກະເສດ, Technical Centre for Agricultural CTA, GIZ, International Fertiliser Development Centre (IFAD), Modernizing Extension and Advisory Services (MEAS), ອົງການຈັດຕັ້ງຊາວກະສິກອນໂລກ, Global Confederation of Higher Education Association for the Agricultural & Life Sciences (GCHERA), Global Forum on Agricultural Research (GFAR); ມະຫາວິທະຍາໄລ ແລະ ສູນຝຶກອົບຮົມຕ່າງໆ).

G2. ສ້າງຄວາມເຂັ້ມແຂງ, ສະໜັບສະໜຸນ ແລະ ປະສານງານກັບເຄືອຂ່າຍການສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາລະດັບພາກພື້ນ ເພື່ອບັນລຸເປົ້າໝາຍຕ່າງໆ ຂອງເຂົາເຈົ້າຕາມລຳດັບ (ດຳເນີນການໂດຍ: GFRAS, ອົງການ ອາຫານ ແລະ ການກະເສດ, CTA, MEAS, ອົງການພັດທະນາສາກົນ ແລະ ພາກພື້ນ).

G3. ພັດທະນາຂອບວຽກ, ເຄື່ອງມື, ແບບຝຶກອົບຮົບ, ປຶ້ມຂໍ້ມູນກ່ຽວກັບແຫຼ່ງການລົງ ທຶນ, ເອກະສານຜົນການຫາລື ເພື່ອກຳນົດ ຮູບຮ່າງ-ທິດທາງວິວັດທະນາການຂອງວຽກສິ່ງເສີມ ແລະການບໍລິການໃຫ້ຄຳປຶກສາດ້ານກະສິກຳ ລວມທັງ ການແລກປ່ຽນບົດຮຽນທີ່ໄດ້ຮັບຢ່າງກວ້າງຂວາງ (ດຳເນີນການໂດຍ: GFRAS ໂດຍການປະສານສົມທົບກັບຜູ້ໃຫ້ທຶນ, ນັກຄົ້ນຄ້ວາວິໃຈ ແລະ ນັກພັດທະນາຕ່າງໆ ທີ່ພົວພັນກັບວຽກສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ ແລະ ໂດຍອົງການອາຫານ ແລະ ການກະເສດ, ທະນາຄານໂລກ, CTA, MEAS, CABI ແລະ CRS)

G4. ປະສານງານກັບຜູ້ໃຫ້ທຶນຢູ່ໃນລະດັບໂລກ ແລະ ພາກພື້ນທີ່ມີສ່ວນກ່ຽວຂ້ອງຢູ່ໃນວຽກສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ (ດຳເນີນ ການໂດຍ: GFRAS, GDPRD)

G5. ດຳເນີນການໂຄສະນາເຜີຍແຜ່ນະໂຍບາຍກ່ຽວກັບການຍົກລະດັບ ບົດບາດຂອງວຽກສິ່ງເສີມ ແລະການບໍລິການໃຫ້ຄຳປຶກສາໃນການພັດທະນາກະສິກຳ ແລະ ການຫຼຸດຜ່ອນຄວາມທຸກຍາກ, ການປັບປຸງການສະໜອງທຶນ, ການປະຕິຮູບອົງກອນ ແລະ ນະໂຍບາຍໃນລະບົບການປະດິດສ້າງສິ່ງໃໝ່ໆທາງດ້ານກະສິກຳ (ດຳເນີນການໂດຍ: GFRAS ໂດຍປະສານສົມ ທົບກັບເຄືອຂ່າຍຂອງພາກພື້ນ, ອົງການພັດທະນາຮ່ວມມືສອງຝ່າຍ ແລະ ອົງການພັດທະນາສາກົນອື່ນໆ, ອົງການຄົ້ນຄ້ວາ ແລະ ການພັດທະນາສາກົນ, G8 ແລະ G20)

G6. ສິ່ງເສີມການແລກປ່ຽນບົດຮຽນ ແລະ ປະສົບການລະດັບພາກພື້ນ ກ່ຽວກັບການປະຕິຮູບ ແລະ ວິທີການແບບໃໝ່ໃນການສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາ (ດຳເນີນການໂດຍ: GFRAS ໂດຍປະສານສົມທົບກັບເຄືອຂ່າຍພາກພື້ນ, ອົງການອາຫານ ແລະ ການກະເສດ, ທະນາຄານໂລກ ແລະ ຄູ່ຮ່ວມພັດທະນາອື່ນໆ)

G7. ໃຫ້ການສະໜັບສະໜຸນທາງດ້ານການເງິນ ແລະ ດ້ານວິຊາການໄລຍະຍາວ ໃຫ້ແກ່ວຽກສິ່ງເສີມ ແລະ ບໍລິການໃຫ້ຄຳປຶກສາດ້ານກະສິກຳ ເພື່ອຄຸ້ມຄອງຈັດການກັບການປ່ຽນແປງ ແລະ ການພັດທະນາຂີດຄວາມສາມາດລວມທັງຮູບແບບການດຳເນີນທຸລະກິດແບບໃໝ່; ນຳໃຊ້ການລົງທຶນແບບໃໝ່ ເພື່ອທົດສອບວິທີການໃໝ່ ແລະ ສິ່ງເສີມ ການປະຕິຮູບໂຄງສ້າງຂອງອົງກອນ (ດຳເນີນການໂດຍ: ຜູ້ໃຫ້ທຶນ ແລະ ອົງການຈັດຕັ້ງສາກົນທີ່ມີສ່ວນກ່ຽວຂ້ອງກັບວຽກງານກະສິກຳ ແລະ ການພັດທະນາຊົນນະບົດເຊັ່ນ: ທະນາຄານໂລກ, ອົງການອາຫານ ແລະ ການກະເສດ ແລະ ກອງທຶນສາກົນ ເພື່ອການພັດທະນາ ກະສິກຳ).

G8. ພັດທະນາແຜນງານຄົ້ນຄ້ວາກ່ຽວກັບວຽກສິ່ງເສີມ ແລະ ການບໍລິການໃຫ້ຄຳປຶກສາດ້ານກະສິກຳ ແລະ ການສ້າງຂີດຄວາມສາມາດ (ດຳເນີນການໂດຍ: AIAEE, GCHERA, GFAR ແລະ ມະຫາວິທະຍາໄລຕ່າງໆ).

ຂໍ້ມູນອ້າງອີງ

[1] Christoplos, I. (2010) Mobilizing the potential of rural and agricultural extension. Rome: Food and Agricultural Organisations of the United Nations and the Global Forum for Rural Advisory Services.

[2] World Bank (2006) Enhancing Agricultural Innovation: How to go beyond the strengthening of research systems. Washington DC; The World Bank. ARD.

[3] OECD (2006) The Challenge of Capacity Development: Working towards good practice. Organisation for Economic Co-operation and Development.

[4] FAO (2011) The GCARD Road Map: Transforming Agricultural Research for Development (AR4D) Systems for Global Impact, Food and Agricultural Organization of the United Nations, Rome.

[5] Swanson, B.E. and Rajalahti, R. (2010) Strengthening Agricultural Extension and Advisory Services. Washington, DC, The World Bank, ARD Paper 45.

[6] Swanson, B.E. and Rajalahti, R. (2010) Strengthening Agricultural Extension and Advisory Services. Washington, DC, The World Bank, ARD Paper 45.

[7] Berdegue, J. A. and Escobar, G., (2001) Agricultural Knowledge and Information System and Poverty Reduction. AKIS Discussion Paper, The World Bank.

[8] Alex, G., Zijp, W. and Byerlee, D. (2002) Rural Extension and Advisory Services-New Direction, Rural Development Strategy Background Paper No 9, Agricultural and Rural Development Department, The World Bank, Washington DC.

[9] Neuchatel Group (2002) Common Framework on Financing Agricultural and Rural Extension, Neuchatel Group, Swiss Centre for Agricultural Extension and Rural Development, Lindau.

[10] APO (2006) Enhancement of Extension Systems in Agriculture, Sharma, V.P. (eds) Report of the Seminar on Enhancement of Extension Systems in Agriculture, Asian Productivity Organisation, Tokyo.

[11] Sulaiman, R.V. and Hall, A. J. (2003) India: The emergence of Extension-Plus: Future for Extension Beyond Technology Transfer? In Rivera W M and Alex, G. (eds) Volume 1. Decentralized Systems, Case Studies of International Initiatives Agriculture and Rural Development, Discussion Paper 8, Extension and Rural Development, Washington DC.

[12] Christoplos, I., (2010) Mobilizing the potential of rural and agricultural extension, Food and Agricultural Organisations of the United Nations and the Global Forum for Rural Advisory Services.

[13] Leeuwis, C and van den Ban, A.W. (2004) Communication for Rural Innovation: Rethinking Agricultural Extension (3rd Edition) Wiley, Chichester, UK.

[14] The World Bank (2012) Agricultural Innovation Systems: An Investment Source Book. Agricultural and Rural Development Department. Washington DC: The World Bank.

[15] World Bank (2006) Enhancing Agricultural Innovation: How to go beyond the strengthening of research systems. Agricultural and Rural Development Department. Washington DC: The World Bank.

[16] Nederlof, S., Mariana Wongtschowski, and Femke van der Lee (eds) 2011.Putting heads together: Agricultural Innovation Platforms in Practice. Bulletin 396, KIT Publishers, The Netherlands.

[17] Klerkx, L., and Leeuwis, C. (2009) Establishment and embedding of innovation brokers at different innovation system levels; Insights from the Dutch Agricultural Sector. Technological Forecasting and Social Change, 76 (6) 849-860.

[18] Hall, A.J., Yoganand, B., Sulaiman, R.V., Raina, R., Prasad, S., Naik, G., and Clark, N.G., (eds) (2004) Innovations in Innovation: Reflections on Partnership and Learning, International Crops Research Institute for Semi Arid Tropics (ICRISAT), Hyderabad and National Centre for Agricultural Economics and Policy Research (NCAP), New Delhi.

[19] Hall, A. J, J. Djikman and R. Sulaiman V. (2010) Research into Use. Investigating the Relationship between Agricultural Research and Innovation, UNU MERIT Discussion Paper (2010-44) United Nations University-Maastricht Economics and Social Research and training centre on Innovation and Technology, Maastricht, The Netherlands.

[20] The World Bank (2012) Agricultural Innovation Systems: An Investment Source Book, Agricultural and Rural Development Department.

[21] Reddy, T.S.V., Andy Hall and Rasheed Sulaiman V. (2012) Locating Research in Agricultural Innovation Trajectories: Evidence and implications from empirical cases from South Asia, Science and Public Policy, pp-1-15.

[22] Sulaiman, R.V, Andy Hall and T.S Vamsidhar Reddy (2012) How research for agricultural innovation works best , Science and Development Network (SciDevNet) 16 May 2012 http://www.scidev.net/en/science-and-innovation-policy/opinions/how-research-for-agricultural-innovation-works-best.html

[23] Sulaiman, R.V., Andy Hall, Vamsidhar Reddy, T.S. and Kumuda Dorai (2010). “Studying Rural Innovation Management: A Framework and Early Findings from RIU in South Asia”. RIU Discussion Paper Series #2010-11, December 2010, Research Into Use (RIU): UK.

[24] Hall, A. J., Rasheed Sulaiman V and Peter Bezkorowajnyj (2008) Reframing Technical Change: Livestock fodder scarcity revisited as Innovation capacity scarcity: A conceptual framework, UNUMERIT and ILRI, ILRI South Asia, Hyderabad.
[25] Swanson, B.E. and Rajalahti, R. (2010) Strengthening Agricultural Extension and Advisory Services. Washington, DC, The World Bank, ARD Paper 45.
[26] Nederlof, S., Mariana Wongtschowski, and Femke van der Lee (eds) (2011) Putting Heads together: Agricultural Innovation Platforms in Practice, Bulletin 396, KIT Publishers, The Netherlands.
[27] Mongbo, R.L and Glin, L (2011) The national innovation platform for the agricultural sector in Benin, In Nederlof, S., Mariana Wongtschowski, and Femke van der Lee (eds) 2011.Putting Heads together: Agricultural Innovation Platforms in Practice, Bulletin 396, KIT Publishers, The Netherlands.
[28] Klerkx, L. and Leeuwis, C. (2008) Matching Demand and Supply in the Agricultural Knowledge Infrastructure: Experience with Innovation Intermediaries, Food Policy, 33 (3), 260-276.
[29] Kristjanson, P., Reid, R.S., Dickson, N., Clark, W.C., Romney, D., Puskur, R., MacMilan, S, Grace, D (2009) Linking international agricultural research knowledge with action for sustainable development. Proceedings of the National Academy of Science, USA 9(13): 5047-5052.
[30] Howells, J. (2006) Intermediation and the role of intermediaries in innovation, Research Policy, 35,715-728.
[31] Klerkx, L. and Peter, G, (2012) The Role of Innovation Brokers in Agricultural Innovation Systems, Thematic Note 4, Module 3, Investment in Extension and Advisor Services as Part of Agricultural Innovation Systems, In The World Bank (2012) Agricultural Innovation Systems: An Investment Source Book, Agricultural and Rural Development Department.
[32] Ekboir, J and Rajalahti, R. (2012) Coordination and Collective Action for Agricultural Innovation. Module 1 Overview, In The World Bank (2012) Agricultural Innovation Systems: An Investment Source Book, Agricultural and Rural Development Department.
[33] World Bank (2006) Enhancing Agricultural Innovation: How to go beyond the strengthening
of research systems, Washington DC; The World Bank. ARD.
[34] FAO (2012) Corporate Strategy on Capacity Development, Food and Agricultural Organisation of the United Nations, Rome.
[35] Mangheni, M.N (2011) A review of case studies on targeting women advisory service providers in capacity development programmes-Final Report, Uganda, A consultancy report prepared for African Forum for Agricultural Advisory Services
[36] GFRAS (2012, June) Fact sheet on Extension Services. Lindau: GFRAS.
[37] UNDP (2008) Capacity Development Practice Note, United Nations Development Programme, New York.
[38] Sulaiman, R.V and Hall, A.J (2002) An Innovation Systems Perspective on the Restructuring of Agricultural Extension: Evidence from India. Outlook on Agriculture 31 (4) pp 225- 233.
[39] Leeuwis, C and van den Ban, A.W. (2004) Communication for Rural Innovation: Rethinking Agricultural Extension (3rd Edition). Chichester, UK: Wiley.
[40] Swanson, B.E and Rajalahti, R (2010) Strengthening Agricultural Extension and Advisory Services, Washington, DC, The World Bank, ARD Paper 45.
[41] FAO (2010) Corporate Strategy on Capacity Development, Rome: Food and Agricultural Organisation of the United Nations.
[42] Datta, A., L. Shaxson and A. Pellini, (2012) Capacity, Complexity and Consulting: Lessons from Managing capacity development projects, London: Overseas Development Institute.
[43] Blagescu, M. and Young, J. (2006) Capacity Development for Policy Advocacy: current thinking and approaches among agencies supporting Civil Society Organisations, Working Paper 260. London: Overseas Development Institute.
[44] Wandschneider, T and Ngo Kim Yen (2006) Guide to Agricultural Marketing Extension with special reference to Vietnam, Module 2, (Supporting Collective Action for Market Access). CIAT, Helvetas- Vietnam and SDC.
[45] El Wafa, M.A. and Samy, M. (2012) Reframing the Agricultural Technical School (ATS) System in Egypt, Paper presented at the International Workshop on Investing in and Strengthening Agricultural Innovation Systems, 1 June 2012. Washington DC: World Bank.
[46] Stratas, R (2011, July) Investing in Future Agricultural Entrepreneurs and Innovators, Briefing Paper. Accra, Ghana: Engineers without Borders.
[47] Pressing, J. (2012) INCAGRO: Developing a Market for Agricultural Innovation Services in Peru, Innovative Activity Profiles 3, Module 3. , Investment in Extension and Advisor Services as Part of Agricultural Innovation Systems, In The World Bank (2012) Agricultural Innovation Systems: An Investment Source Book, Agricultural and Rural Development Department.
[48] Sulaiman, R. V. (2012) Extension Plus: New Roles for Extension and Advisory Services, Thematic Note 3, Module 3, Investment in Extension and Advisor Services as Part of Agricultural Innovation Systems, In The World Bank (2012) Agricultural Innovation Systems: An Investment Source Book, Agricultural and Rural Development Department.
[49] www.g-fras.org
[50] http://www.g-fras.org/en/knowledge/neuchatel-initiative
[51] http://www.meas-extension.org/
[52] Berg, Elliot and the United Nations Development Programme (1993) Rethinking Technical Cooperation: Reforms for Capacity Building in Africa, New York, United Nations Development Programme.
[53] Sakiko Fukuda-Parr, Carlos Lopes, Khalid Malik (2002) Institutional Innovations for Capacity Development, In Sakiko Fukuda-Parr, Carlos Lopes, Khalid Malik (eds) Capacity for Development: New Solutions to Old Problems, Earthscan and UNDP, UK.
[54] Otoo, S, Natalia Agapitova and Joy Behrens (2009) The Capacity Development Results Framework: A strategic and results-oriented approach to learning for capacity development. Washington, DC: The World Bank.
[55] European Union (2005) Institutional Assessment and Capacity Development; Why, what and how? Reference Document 1 Tools and Methods series.
[56] Sakiko Fukuda-Parr, Carlos Lopes, Khalid Malik (2002) Institutional Innovations for Capacity Development, In Sakiko Fukuda-Parr, Carlos Lopes, Khalid Malik (eds) Capacity for Development: New Solutions to Old Problems, Earthscan and UNDP, UK.
[57] Datta, A., L. Shaxson and A. Pellini, (2012) Capacity, complexity and consulting: Lessons from Managing capacity development projects. London: Overseas Development Institute.
[58] Aide Memoire, Final Implementation Support Mission for The Ethiopia Rural Capacity Building Project (IDA42010; TF90085) April 22 to May 7 2012.
[59] Rice, E.B, (1999) Capacity Building in the Agricultural Sector in Africa, Precis, Spring 1999, Number 180, World Bank Operations Evaluation Department.
[60] Moussa Z. (2006) Case Study on Communication for Development in Sustainable Agricultural and Rural Development in the Near East: capacity Building, Training and Networking for mainstreaming ComDev, Draft Prepared for the Technical Consultation on Communication for Development in the Near East: Experiences, Issues and perspectives.
[61] Rice, E.B, (1999) Capacity Building in the Agricultural Sector in Africa, Precis, Spring 1999, Number 180, World Bank Operations Evaluation Department.



Contact

Global Forum for Rural Advisory Services (GFRAS)
Eschikon 28
8315 Lindau, SWITZERLAND
Telephone: +41 (0)52 354 97 64
Fax: +41 (0)52 354 97 97
Email: info@g-fras.org
Web site: www.g-fras.org